ນິທານຂຸນບໍຣົມຣາຊາທິຣາຊ

ສະບັບທີ່ ໑

ປວັຕສາຕຣ໌ລາວ ສະບັບເດີມ

ຣວບຣວມໂດຍ,

ສິລາ ວິຣະວົງສ໌ ແລະ ບວບ ອຸເທບສັກດາ

ຈັດພິມແຜ່ພາຍ ດ້ວຍທຶນຂອງ

ພຣະທາຕຫລວງ

ເພື່ອປະຕິສັງຂອນ ພຣະທາຕຫລວງ

ພິມເທື່ອທີ່ ໑

ຈຳນວນ ໒໐໐໐ ສະບັບ

ກະຊວງທັມມະການ ວັນທີ ໓ ພຶສຈິກາ ໒໕໑໐

ຄໍາຊີ້ແຈງ

ຫນັງສື ນິທານຂຸນບໍຣົມຣາຊາທິຣາຊ ເປັນຫນັງສື ປວັຕສາຕຣ໌ລາວສບັບດັ້ງເດີມ ຫນັງສືພົງສາວະດານລາວທຸກ ສບັບທີ່ມີຜູ່ແຕ່ງຂຶ້ນເປັນພາສາຝຣັ່ງເສດກໍດີ ພາສາໄທກໍດີ ຫລືພາສາລາວເອງກໍດີ ແມ່ນແຕ່ເກັບເອົາຂໍ້ຄວາມຈາກຫນັງສືນິທານຂຸນບໍຣົມນີ້ມາ ເປັນຫລັກສາກັນ ແຕ່ວ່າຫນັງສືນິທານຂຸນບໍຣົມນີ້ ສັງເກດເຫັນວ່າມີຜູ່ແຕ່ງສືບ ຕໍ່ກັນມາແຕ່ບູຮານຫລາຍເທື່ອ ກະເບິ່ງວ່າຢ່າງຫນ້ອຍກໍຄົງມີມາແລ້ວເຖິງ ໕ ເທື່ອ ຄື:

໑- ເທື່ອທີ່ນຶ່ງ ຫລືສບັບທີ ໑: ແຕ່ງໃນສມັຍຂອງພຣະເຈົ້າວິຊຸລຣາຊ ເມື່ອປະມານ ພ.ສ. 2026 (ຄ.ສ, 1503) ຜູ່ແຕ່ງ ແມ່ນພຣະມະຫາເທພຫລວງ ກັບພຣະມະຫາມຸງຄຸນສີຫທີ ວັດວິຊຸລມະຫາວິຫາຣ ພ້ອມດ້ວຍພຣະເຈົ້າວິຊຸລຣາຊ

ເອງ ແລະເສນາຂ້າຣາຊກາບ ດັ່ງມີຂໍ້ຄວາມກ່າວໄວ້ໃນຕອນ
ສຸດທ້າຍ ຂອງນິທານຂຸນບໍຣົມພູກນີ້ວ່າ

"ຕຳນານຂຸນບໍຣົມອັນນີ້ ພຣະມະຫາເທພຫລວງເຈົ້າ ອັນເປັນທັມມະເສນາເຈົ້າຕົນພີ່ປູ່ວັດວິຊຸລ ທັງມະຫານາງຄຸນສິທ ທິເຈົ້າ ຕົນເປັນທັມມະເສນາເຈົ້າຕົນນ້ອງ ທັງເຈົ້າແຜ່ນດິນ ແລະເສນາທັງຫລາຍ ພ້ອມກັນແປງໄວ້ໃຫ້ເປັນໄປ ດາບຕໍ່ ເທົ້າ 5 ພັນວັສສາ" ດັ່ງນີ້.

ຫນັງສືນິທານຂຸນບໍຣົມ ສບັບພຣະມະຫາເທພຫລວງ ແຕ່ງນີ້ ມີຂໍ້ຄວາມສຸດລົງພຽງສມັຍຂອງພຣະເຈົ້າວິຊຸລຣາຊ ນັ້ນເອງ (ຄືສບັບທີ່ພິມນີ້)

໒- ເທື່ອທີ່ສອງ ຫລືສະບັບທີ ໒: ຄືງແຕ່ງໃນສມັຍ ຂອງພຣະບາແສນສຸຣິນ ເປັນເຈົ້າແຜ່ນດິນໃນນະຄອນວຽງຈັນ ລຸນຫລັງພຣະເຈົ້າໄຊນະເຊດຖາທິຣາຊ ສວັຣຄົດແລ້ວ (ປະ ມານ ພ.ສ. ໒໑໑໐) ຜູ່ແຕ່ງແມ່ນພຣະອະຣິນະວັງໂສ ຫນັງ ສືສບັບນີ້ ມີຂໍ້ຄວາມສຸດລົງໃນສມັຍຂອງພຣະບາແສນສຸຣິນທ໌ ເປັນເຈົ້າແຜ່ນດິນນັ້ນເອງ ດັ່ງມີກ່າວປູ່ໃນຕອນສຸດທ້າຍ ຂອງ

ຫນັງສືຜູກນີ້ວ່າ

"ທັງຫລາຍ ຈຶ່ງໃຫ້ພຣະຍາແສນຮັກສາເມືອງໄດ້ປີນຶ່ງ ພຣະຍາແສນຈະເປັນເຈົ້າແຜ່ນດິນ ພຣະຍາຈັນຄັດຄ້ານ ພຣະຍາແສນຈຶ່ງ ຂ້າພຣະຍາຈັນເສັຽລວດເປັນເຈົ້າແຜ່ນດິນຫັ້ນແລະ ຫນັງສືຂຸນບໍຣົມຣາຊາທິຣາຊເຈົ້າຜູ້ມີບຸນ ຫາກໄດ້ແຕ້ມໄດ້ຂຽນໄວ້ສືບໆ ມາຫລາຍຊາດຫລາຍເຊັ່ນ ຕັ້ງແຕ່ນີ້ເມືອຫນ້ານັກປາດເຈົ້າທັງຫລາຍ ຜູ້ໃດນັກໄດ້ຕື່ມໄດ້ແຖມ ສືບຕໍ່ແຕ່ນີ້ໄປໃຫ້ກວ້າງໃຫ້ຂວາງ ກໍຈຶ່ງໃຫ້ຕື່ມໃຫ້ແປງ ຕາມແຕ່ຫູຮູ້ຕາເຫັນນັ້ນເຖີ້ນ ແຜ່ນດິນນີ້ບໍ່ມີຕຳນານ ໃຫ້ແປງສືບຕໍ່ໄປເຖີ້ນ" ດັ່ງນີ້.

ຂໍ້ຄວາມໃນປໂຍກສຸດທ້າຍທີ່ວ່າ "ແຜ່ນດິນນີ້ບໍ່ມີຕຳນານໃຫ້ແປງສືບຕໍ່ໄປເຖີ້ນ" ນີ້ ສະແດງວ່າແມ່ນສມັຍຂອງພຣະຍາແສນສຸຣິນທ໌ນັ້ນເອງ ແຕ່ພຣະອະຣິຍະວັງໂສ ຜູ້ແຕ່ງຕຳນານບໍ່ທານເວົ້າຄວາມເປັນໄປຂອງບ້ານເມືອງໃນສມັຍນັ້ນໄດ້ ເພາະຍັງເປັນປັດຈຸບັນຢູ່ ທັງຢ້ານຈະເປັນການຜິດພຣະຣາຊອາຊຍາດ້ວຍ ຈຶ່ງໄດ້ກ່າວໄວ້ຢ່າງນັ້ນ

ຄ- ເທື່ອທີ່ສາມ ຫລື ສບັບທີ່ ຄ: ມີຂໍ້ຄວາມມາສຸດ

ລາ ໃນສມັຍຂອງພຣະຫນ່ອມແກ້ວຂຶ້ນສເວີຍຣາຊສົມບັດ ເມື່ອຈຸລສັກຣາຊ ໙໘໙ (ພ.ສ. ໒໑໗໐) ຜູ່ແຕ່ງຈະແມ່ນໃຜບໍ່ຮູ້.

໔– ເທື່ອທີສີ່ ຫລື ສບັບທີ ໔ ຄືງແຕ່ງຂຶ້ນໃນສມັຍຂອງພຣະໄຊບອົງຄ໌ເວ້ (ພະໄຊຍເຊດຖາທິຣາຊທີ ໒) ໃນລະຫວ່າງຈຸລສັກຣາຊ ໑໐ປີ ໑໐໗໐ (ພ.ສ. ໒໒໔໘ ໒໒໕໑) ຜູ່ແຕ່ງຈະແມ່ນໃຜຍັງບໍ່ຄັກແນ່ ຫລືອາດຈະແມ່ນເພັ້ງສືສຸທາຊີບາລັງການ ຜູ່ຮັກສາພຣະບາງກໍໄດ້ ເພາະນີ້ຂໍ້ຄວາມກ່າວໄວ້ໃນຕອນທ້າຍຂອງຫນັງສືສະບັບນີ້ວ່າ

" ບັດນີ້ເຮົາຍັງນັກໃຫ້ແປງຕໍານານ ເມືອງທັງ ໕ ຫົວເສິກທັງເມືອງກອງ (ພອງ) ເມືອງພົວທັງຕໍານານເມືອງແສນເມືອງນະຄອນ ທັງຕີນແທນ ຕີນຊຽງ ຊຽງກາງ ແດນດິນແລະຂອບດ່ານທັງມວນ ໃຫ້ແຈ້ງດີຫລີແລ ຜູ່ໃດຈັກເປັນຂໍເມືອງຕໍາເມືອງ ເປັນເອກເປັນທ້າຍເມືອງໃຫ້ຫລິງຫາແຕ່ເຄົ້າ ເທົາຕາງປາຍແລ້ວແລະແປງໄວ້ເຖິງ ສັກຣາຊໄດ້ ປີກໍ ຕົວ(໑໐ປີ) ເດືອນສາມເພັງວັນ ໔ ຍາມແຖໃກ້ທ່ຽງສັພພັນບູ ພຣະບາງເຈົ້າສເດັດຈາກວິຊຸລມະຫາລະຖານ ໄປເຂົ້າເຮືອທ່າເມືອງຮອດ

ຈັນທະບຸຣີ ເດືອນ ๔ ແຣມ ๔ ຄ່ຳວັນອັງຄານ ຍາມທ່ຽງວັນ ຣາທບາເນື້ອສູ່ວັດປ່າສັກຫລວງ ສັກຣາຊ ๆ๐ (ຈຸລສັກຣາຊ ๑๐ๆ๐) ເດືອນ ๗ ຂຶ້ນ ๔ ຄ່ຳວັນເສົາຍາມກອງງາຍ ມື້ກັດ ເຣົາພຣະເກສາທາດເຈົ້າສເດັດມາເມຕຕາ ເພັງສີສຸທາຊີນາ ລັງການຜົວເມັງ ປູ່ໃນຖ້ງເຟ້າ ອັນເອົາເນື້ອໄວ້ເທິງຫົວນອນ ບ່ອນຮັກສາພຣະບາງປູ່ວັດປ່າສັກຫລວງ ເພັງສີສຸທາ ໃຂຖ້ງ ເອົາເງິນຊື້ຂັນທອງ ຍົກຈົວເປັນພຣະຈິງເທັນ ແລ້ວເອົາເນື້ອ ຊ້ອງທາງຍັດຄະວ່ຣະຣາຊຄຣູເຈົ້າໂຮງຄຳ ຍາມກອງແລງຟ້າ ລັ່ນເທິງຫົວບາງເນິ້ງ ຈິ່ງເອົາອູບແກ້ວໃສ່ເກສາທາດ ເອົາຄອບ ແກ້ວໃສ່ ແລະຖ້ວຍແກ້ວໃສ່ອີກ ຍາມຄ່ຳຈິ່ງນຳເນື້ອໄວ້ທີ່ພຣະ ບາງ ໄດ້ສອງຄືນ ຈິ່ງນຳໄປຫາຣາຊຄຣູເຈົ້າທີ່ວັດຈັນ ໄດ້ສອງ ຄືນຣາຊຄຣູເຈົ້າວັດຈັນ ແລະເພັງສີສຸທາ ຈິ່ງນຳເນື້ອຖວາຍ ພຣະໄຊຍະເຊດຖາທັມມິກະຣາຊາທິຣາຊເຈົ້າ ພຣະອົງສັກກາ ຣະ ແລ້ວໃຫ້ນຳຄືນມາໄວ້ນຳພຣະບາງ ແລ້ວແຜ່ຄຳໄວ້ ໆ ບາດບາກເບັ້ງ ๑ ດີຣູປພຣະເຈດີໃສ່ເກສາທາດໄວ້ກັບພຣະ ບາງເຈົ້າທັ້ນແລ" ດັ່ງນີ້

໕. ເທື່ອທີ່ຫ້າ ຫລື ສບັບທີ່ ໕ ກ່າວຂໍ້ຄວາມມາແຕ່ລົ້ບ ແລ້ວມາສຸດລົງໃນສມັຍຂອງພຣະເຈົ້າມນທາຕຸຣາຊ ແຫ່ງນະຄອນຫລວງພຣະບາງ ອັນເປັນສມັຍທີ່ອານາຈັກລາວທັງ ມ ເສັງໃຫ້ແກ່ປະເທດໄທແລ້ວ ຜູ່ແຕ່ງຫນັງສືນິທານຂຸນບໍຣົມ ສະບັບທີ ໕ ແມ່ນຫົວພັນ ເມືອງບູນ ແຕ່ງຢູ່ທ່າເມືອງເພັຊໄຊ (ພິໄຊ) ເມື່ອຈຸລສັກຣາຊໄດ້ ໑໘ ຕົວ(ຈຸລສັກຣາຊໄດ້ ໑໒໑໘) ດັ່ງມີຂໍ້ຄວາມກ່າວໄວ້ໃນຕອນທ້າຍຂອງຫນັງສືຜູກນີ້ວ່າດັ່ງນີ້

" ສັກຣາຊໄດ້ ໑໘ ຕົວປີເມິງໃຄ້ ເດືອນຍີ່ ອອກໃຫມ່ ໖ ຄ່ຳຫົວພັນເມືອງບູນ ລິຈນາໃນທ່າເມືອງເພັຊໄຊໄວ້ກັບໂລກ ແລ "

ຕໍ່ຈາກທ້າຍຂໍ້ຄວາມນັ້ນມາອີກ ກໍມີຈົດຫມາຍເຫດຫຍໍ້ ບອກເຫດການຕັ້ງຕໍ່ສມັຍຂອງພຣະເຈົ້າສຸຣິຍະ ວົງສາທັມມິກະ ຣາຊສວັຣຄົດ ປີຈຸລສັກຣາຊ ໑໐໕໗ ເປັນຕົ້ນມາ ຈົນເຖິງ ຈຸລສັກຣາຊ ໑໒໐໔ ເຊິ່ງໃນປີນີ້ວ່າ " ໄທ ລາວ ຍວນຂົ້ນຕີ ເມືອງພວນໄດ້ອາດບາເມືອງພວນ ໄປ ຢູ່ ບາງ ກອກ " ດັ່ງນີ້.

ຫນັງສືນິທານຂຸນບໍຣົມທັງ ໕ ສະບັບທີ່ກ່າວມານີ້ ສະບັບ

ທີ່ພຣະມະຫາເທພຫລວງແຕ່ງ ອັນເປນສະບັບເດີມຫລືສະບັບ ທີ ໑ ແລະສະບັບຂອງພຣະອະຣິຍະວົງໃສແຕ່ງ ອັນເປ່ນສະບັບ ທີ ໒ ນັ້ນມີຂໍ້ຄວາມຕ່າງຈາກສະບັບອື່ນ ໆ ຫລາຍ ໃນຕອນ ຂອງພຣະເຈົ້າຟ້າງຸ່ມ ດັ່ງຈະຂໍນຳມາກ່າວສູ່ຟັງຈັກສອງສາມ ຕອນຕໍ່ໄປນີ້.

໑– ຕອນພຣະເຈົ້າຟ້າງຸ່ມຖືກຂັບຫນີ ກ່າວໄວ້ດັ່ງນີ້.; ເຂົາຈິ່ງເອົາບາຫລວງໂງ່ມ ມາເປ່ນເຈົ້າແຜ່ນດິນມີລູກ ໕ ຄົນ ຜູ້ຍິງ ໔ ລູກ ໕ ຄົນນີ້ເຮົາບໍ່ຈາກ່ອນແລ ເຮົາທໍ່ຈັກຈາຜູ້ກົນ ເມືອງແຫນຫລວງໂງ່ມ ແລະເຂົາຈິ່ງເອົາບາຄຳຮຽວ (ທີຈິງ ແມ່ນຟ້າງຽ້ວ) ຜູ້ເປນອ້າຍມາເປັນເຈົ້າແຜ່ນດິນ ບາຄຳຮຽວ ມີລູກ ໔ ຄົນ ຜູ້ຍິງສອງຜູ້ຊາຍສອງ ຜູ້ນ້ອງຫລ້ານັ້ນມີແຂ້ວ ອອກ ມີມີ ເຫລັ້ມແຕ່ໃນທອງອອກມາ ເສນາທັງຫລາຍວ່າ ເຂ່ດຂວາງ ຈັກແພ້ບ້ານແພ້ເມືອງວ່າ ດັ່ງນັ້ນ ເຂົາຈິ່ງເອົາໃສ່ ແພໄຫລເສັ້ງ ເອົາຂ້ອນສັ້ງງ ທັງມວນໃສ່ແພໄປດອນ" ດັ່ງນີ້.

໒. ຕອນຈະຄືນມາຈາກເມືອງ ຂເມນ ກ່າວໄວ້ວ່າ "ນັບ ແຕ່ໄຫລບ່ມາໄດ້ ໓ ປີ ໄຫລເສັ້ງມີນຶ່ງ ຈິ່ງມາຮອດທ່າພຣະ

ສມັບພຣະລ້ຽງໄວ້ສາມປີ ພຣະບາບະຄອບຈຶງເອົາເມືອລ້ຽງໄດ້ ໗ ປີທັງມວບເປັນ ໑໔ ປີ ພຣະບາບະຄອບຈຶງໃຫ້ລູກລາວໄດ້ ໖ ປີ ພຣະບາບະຄອບຈຶງເອົາຫມໍ່ທູຣາທັງມວບ ມາຊູຊາ ຕາແລະບັກຂັດຕະອຶກເມືອງລ້ານຊ້າງ ຫມໍ່ຈຶງທວບວ່າ ພໍ່ເຈົ້ານີ້ແມ່ເຈົ້ານີ້ຕາຍແລ້ວ ເຮົາຈຶງເອົາອາວເຈົ້າເປັນເຈົ້າແຜ່ນດິນທີ່ຊຽງດົງຊຽງທອງແທນ ແລພຣະບາບະຄຍະຫລວງ ຈຶງວ່າເຮົາຈັກແຕ່ງຣິພົບເມືອຄ້າຄົງປູກແປງ ບັງຈັກໄດ້ເປັນເຈົ້າແຜ່ນດິນທີ່ຊຽງທອງບໍ່ຈາ ຫມໍ່ທັງຫລາຍຈຶງວ່າປ່າວ່າໄດ້ແຕ່ຊຽງດົງຊຽງທອງເຖິ້ນ ບັງຈັ ໄດ້ເມືອງໂບທິບາ ອະບຸທຍາ ທັງເມືອງພົງຊຽງໄຫມ່ ທັງເມືອງລື້ເມືອງເຂີນ ທັງເມືອງຈຸລນີຟາກນ້ຳແທນມາພີ້" ດັ່ງນີ້.

ມີ ຕອບມາເຖິງຫລວງພຣະບາງ ກ່າວໄວ້ວ່າ" ແຕນັ້ນພຣະບາຟ້າລ່ອງມາຮອດສິບອູຫັ້ນ ເຈົ້າຟ້າຄຳຣຽວຜູ່ເປັນອາວນ້ອງພໍ່ພຣະບາຟ້າ ພໍ່ພຣະບາຟ້າວາຍເສັຽເຮົາຈຶງເອົາມັນເປັນເຈົ້າແຜ່ນດິນ ແທນມັນມີລູກຍິງສອງຄົນ ລູກຊາຍບໍ່ມີມັນກໍຮູ້ວ່າພຣະບາຟ້າລ່ອງມາຮອດສິບອູມັນ ກໍປ້ານພຣະບາຟ້າ

ຂ້າ ເຂົາທັງສອງຜົວເມັຽລວດກິນສາບຕາຍທັງສອງ ຫັ້ນແລ"
ດັ່ງນີ້

໔ ຕອນຂຶ້ນໄປຕີເມືອງທາງເຫນືອ ກ່າວໄວ້ວ່າ "ພຣະຍາ ຟ້າຂຶ້ນເມືອຮອດທ່າຫົວເຮືອເມືອງເຫລືອກຫັ້ນ ຍັງມີລູກອ້າຍ ຂີ້ຫຸດຜູ້ນຶ່ງ ມັນເປັນລູກນາງແກ້ວມະຫາຣີ ຮຽກຊື່ທ້າວອູລອງ ມັນເປັນຫລານເຈົ້າຟ້າຄຳຮຽວ ມັນຈຶ່ງອອກມາໄຫວ້ພຣະຍາ ຟ້າ ທີ່ທ່າສວງຄໍຄຳຫັ້ນທ້າວອູລອງຈຶ່ງວ່າ ຂ້ຽນີ້ເປັນລູກນາງ ແກ້ວມະຫາຣີ ແມ່ຂ້ອຍນີ້ ເປັນລູກຟ້າຄຳຮຽວ ກໍຫາກເປັນ ວົງສາ ແຫ່ງເຈົ້າກູດາຍ" ດັ່ງນີ້

ສວນຫນັງສືນິທານຂຸນບໍຣົມຜູກອື່ນໆ ນອກຈາກ ໒ ຜູກ ທີ່ກ່າວມາແລ້ວນັ້ນມີຂໍ້ຄວາມຕ່າງຈາກ ໒ ຜູກນີ້ຫລາຍໂດຍສະ ເພາະແມ່ນສບັບທີ່ຫົວພັນເມືອງບຸນ ຣິຈນາໃນຜູກນີ້ ມີກ່າວໄວ້ ດັ່ງນີ້.

໑– ຕອນພະເຈົ້າຟ້າງຸ່ມຖືກຂັບຫນີ ກ່າວໄວ້ວ່າ "ແຕ່ນັ້ນ ພຣະຍາລັງມີລູກຊາຽຜູ້ນຶ່ງໃສ່ຊື່ວ່າຄຳຜົງ ເມື່ອພຣະຍາລັງກິນ ເມືອງປາງນັ້ນ ບໍ່ປະກອບຊອບທັມ ເຂົ້າລວດປົງພຣະຍາລັງ

ເສັງ ເອົາໄປໃສ່ຫັບໄວ້ທີ່ຊຽງແພດສິບອູບ້ານຄິກຫັ້ນແລ ເຂົາກໍເອົາຄຳຜົງຜູ້ເປັນລູກເພາບເລົ່າແລ ລວດໃສ່ຊື່ວ່າ ພຣະຍາຄຳຜົງເລົ່າແລ ເມື່ອນັ້ນພຣະຍາຄຳຜົງມີລູກຊາຍຜູ້ນຶ່ງ ເມື່ອຈະໃສ່ຊື່ລູກຂອງຕົນ ຈິ່ງໃຫ້ຫາຫລວງ ເມືອເລົ່າແກ່ພຣະຍາລັງວ່າ ຫລານພຣະຍາເຈົ້າເກີດມາແລ້ວ ຈັກໃສ່ຊື່ວ່າສິ່ງໃດ ລູກພຣະຍາເຈົ້າໃຫ້ເມືອຂ້ອຍມາຖາມພຣະຍາເຈົ້າດາຍ

ຍາມນັ້ນ ພຣະຍາລັງຕົນນັ້ນກໍຖຽດແກ່ເຂົາ ເຫດວ່າເຂົາປົງຕົນເສັງດັ່ງນັ້ນ ພຣະຍາລັງລວດບໍ່ປາກສັກຄຳ ທີ່ນັ້ນ ເຂົາຈັກຫນີ ຈິ່ງຊ້ຳຖາມພຣະຍາລັງອີກວ່າ ພຣະຍາເຈົ້າຈັກໃສ່ຊື່ຫລານພຣະຍາເຈົ້າສິ່ງໃດແລຊານ ຍາມນັ້ນພຣະຍາລັງຈິ່ງວ່າສູວ່າກູບໍ່ດີຣະກູຫນີຈາກເມືອງແລ້ວ ບັດນີ້ສູເລົ່າມາຖາມກູສັງຈາ ປຽວວ່າຜີຟ້າບໍ່ສູ່ສູນາ ພຣະຍາລັງວ່າທໍ່ນັ້ນແລ້ວ ຂາຜູ້ໃຊ້ກໍຮູ້ວ່າພຣະຍາລັງຖຽດໃຫ້ແກ່ເຂົາ ຂ້າກໍລວດຫນີມາໄຫວ້ພຣະຍາຄຳຜົງວ່າ ພຣະຍາເຈົ້າຖຽດກ່າວວ່າ ປຽວວ່າຜີຟ້າບໍ່ສູ່ສູນາວ່າດັ່ງນັ້ນດາຍ

ຍາມນັ້ນ ພຣະຍາກໍາຜົງວ່າ ພໍ່ພຣະຍາກໍຫາກູວ່າ ຜີຟ້າ

ກໍວ່າຜີຟ້າຫາບເຖິນ   ແຕ່ບັ້ນຄົນທັງຫລາຍ ລວດຮຽກຊື່ກຸມາຣຜູ່ນັ້ນວ່າ ທ້າວຜີຟ້າ ເພື່ອອັນຫັ້ນແລ ເມື່ອນັ້ນທ້າວຜີຟ້າກ້າສູງມາແລ້ວ ກໍມີລູກຊາຍ ໖ ຄົນ ຜູ່ນຶ່ງຊື່ວ່າຟ້າງຸ່ມ ຜູ່ນຶ່ງຊື່ວ່າຟ້າງ້ຽວ ຜູ່ນຶ່ງຊື່ວ່າຟັງບານ ຜູ້ນຶ່ງຊື່ວ່າຄ້ານ ຜູ້ນຶ່ງຊື່ວ່າຟ້າກຳ ຜູ່ນຶ່ງຊື່ວ່າຟ້າຂຽວ

ເມື່ອນັ້ນ ທ້າວຜີຟ້າກໍລັກຫລົບຊູ້ດອມນາງ ສນົມພໍ່ຕົນຊື່ວ່າພຣະຍາຄຳຜົງເຫັ້ນແລ ພຣະຍາຄຳຜົງ ຈຶ່ງຂັບຜີຟ້າຫນີຈາກເມືອງລາວທັງມວນບໍ່ໃຫ້ຢູ່ ໃຫ້ເຊົາທີ່ ໃດສັກແຫ່ງ ດັ່ງນັ້ນຜີຟ້າລວດບໍ່ໄດ້ເປັນພຣະຍາແທນພໍ່ ເພື່ອອັນແລ ດ້ວຍແທ້ຕຳນານຜີຟ້າພໍ່ລູກວິກເມືອງ ເຮົານັງຈັກກ່າວພາຍຫນ້າພຸ້ນກວ້າງນັກແລ

໖. ໃນຫນັງສືຂຸນບໍຣົມ ອັນເປັນຕຳນານເມືອງພວນກ່າວວ່າ "ເມື່ອນັ້ນພຣະຍາຄຳຜົງມີລູກຊາຍຜູ່ນຶ່ງ ຊື່ວ່າຜີຟ້າ ໆ ນັ້ນເລົາມີລູກຊາຍຜູ່ນຶ່ງຊື່ວ່າ ຟ້າງຸ່ມ ເມື່ອນັ້ນຜີຟ້າຈຶ່ງຄົບເມັຽພໍ່ມັນຜູ້ຊື່ວ່ານາງຂອມພຣະຍາຜູ່ພໍ່ ຈຶ່ງຄຽດວ່າຈັກຂ້າເສັຽ ວ່າອັນຫມື່ນແສນທັງຫລາຍຈຶ່ງຫ້າມ ໃຫ້ຂັບຫນີຈາກເມືອງຈຶ່ງໃຫ້ທ່ໄຊ ຯລຯ ໄປສິງຜີຟ້າ ທັງຟ້າງຸ່ມເສັຽກາຍລີຜີ ຯລຯ

໓. ຕອນກັບຄືນກ່າວໄວ້ດັ່ງນີ້ :   ຟ້າງຸ່ມຈິ່ງຂີ່ຊ້າງແສນ ບາງຄອບ ຫມື່ນໜານຂີ່ຊ້າງໄຕພົນແສນ ເມືອທາງເມືອງສວບ ລ່ອງເມືອນ້ຳຄານ ພີ່ຟ້າຈິ່ງເມືອທາງນ້ຳອູ ນ້ຳເຊືອງ ຈິ່ງໃຫ້ ເຖົ້າພັນພານໄປສິ່ງຫັ້ນແລ ເມື່ອນັ້ນ ພຣະຍາຄຳຜົງຮູ້ຂ່າວລູກ ຫລານດົນຈັກເມືອຊີງເມືອງດັ່ງນັ້ນ ກໍແຕ່ງຣິພົນມາຕ້ອນຮັບແຕ່ ແດນເມືອງ ຕັ້ງຫລາຍເຜົ່າຫລາຍທີ ກໍບໍ່ແພ້ເຂົາລວດໄລ່ເມືອ ຈີນເມືອງຊະວາ ເມື່ອນັ້ນພຣະຍາຄຳຜົງດູຮ້າງຫາກຜູກຄໍຕາຍ ໃນສ້ວມອາບນ້ຳ ຫັ້ນແລ   ເມື່ອນັ້ນ ເສນາທັງຫລາຍ ຮູ້ວ່າ ພຣະຍາຄຳຜົງຫາກຜູກຄໍຕາຍດັ່ງນັ້ນ ເຂົາຈິ່ງໄປເລົ່າແກ່ຟ້າ ງຸ່ມ ແລ້ວອາທນາມາແທນປູ່ ໃນຊຽງທອງຫັ້ນແລ ເມື່ອນັ້ນພີ່ ຟ້າມາທາງເຫນືອໄປທັນຮອດ ຟ້າງຸ່ມເລົ່າໃຫ້ໄປຕ້ອນຂ້າພໍ່ມັນ ເສັງ ທີ່ຫ້ວຍລິນລານນ້ຳ ເຊືອງຫັ້ນແລ ດັ່ງນີ້

ຫນັງສືນິທານຂຸນບໍຣົມ   ສບັບຫົວພັນເມືອງບຸຣິຈນາ ແລະສບັບດານານເມືອງພວນ ທີ່ກ່າວວ່າ... " ພຣະເຈົ້າຟ້າງຸ່ມ ຖືກຂັບຫນີ ນ້ອນຂຸນພີ່ຟ້າຜູ່ເປັນພໍ່ ຫລີນເມັງນ້ອຍຂອງພໍ່ແລະ ຕອນກັບຄືນມາຈາກເມືອງຂເມຣວ່າ   ຟ້າງຸ່ມໃຫ້ໄປລັດຂ້າພໍ່ ເສັງ "ນີ້ ເຫັນວ່າບໍ່ສົມເຫດສົມຜົນເລີຍ ແລະຫນັງສືພົງສາວະ ດານລາວທີ່ຝຣັ່ງແຕ່ງໃຫ້ນັກຮຽນຮຽນແຕ່ກ່ອນໆ ນັ້ນ ຫລືສະ

ບັບທີ່ຄົນອື່ນຂຽນພາກົດວ່າ ໄດ້ແຕ່ງເອົາຕາມສະບັບທີ່ພັບ ເມືອງບຸນຣິຈບານີ້ເອງ ດັ່ງນັ້ນຈຶ່ງມີຂໍ້ຄວາມຕ່າງຈາກສະບັບທີ ຂ້າພະເຈົ້າແຕ່ງເປັນອັນມາກໃນຕອນນີ້ ແລະຍ້ອນເຫດອັນນີ້ ຂ້າພະເຈົ້າຈຶ່ງໄດ້ພຍາຍາມກ່າຍເອົານິທານຂຸນບໍຣົມທຸກໆສະ ບັບມາພິມໄວ້ຕາມຂໍ້ຄວາມເດີມ ທັງນີ້ກໍຍ້ອນມີຄວາມປະສົງ ເປັນ ໒ ປະການຄື

໑ ປະສົງຈະຮັກສາຫນັງສືເກົ່າ ແລະຄວາມເວົ້າຂອງຄົນ ບູຮານໄວ້ໃຫ້ຄົນພາຍຊ້ອນໄດ້ຮູ້ໄດ້ຟັງ

໒ ປະສົງຈະໃຫ້ເປັນຫລັກຄົ້ນຄວ້າ ທຽບຄຽງຂອງນັກ ແຕ່ງປວັດສາດລາວວ່າ ສະບັບໃດຖືກແທ້ແລະຄວນຈະຖືເອົາ ຕາມສະບັບໃດເປັນຫລັກ ສະເພາະສະບັບນີ້ທ່ານອ່ານຢູ່ນີ້ແມ່ນ ສະບັບເດີມທີ່ພຣະມະຫາ ເທພຫລວງແຕ່ງ ສະບັບອື່ນໆຈະ ໄດ້ຈັດພິມເປັນເຫລັ້ມນຶ່ງອີກຕ່າງຫາກ ເປັນສະບັບໆໄປ

ຫວັງວ່າ ຫນັງສືນິທານຂຸນບໍຣົມ ທີ່ໄດ້ຈັດພິມນີ້ຄົງເປັນ ປໂຍຊໃນການຄົ້ນຄວ້າແຕ່ງປວັດສາຕຣ໌ລາວ ໃນໂອກາສຕໍ່ໄປບໍ່ ຫລາຍກໍ່ຫນ້ອຍເປັນແນ່ແທ້

ສີລາ ວີຣະວົງສ໌

ນິທານ ເຣື່ອງ

ຂຸນບໍຣົມຣາຊາ

ພົງສາວະດານເມືອງລ້ານຊ້າງ

ຂໍ້ຄວາມ ບື້ງຕົ້ນ

ນະໂມ ຕັສສະ ພະຄະວະໂຕ ອະຣະຫະໂຕ ສັມມາສັມພຸທທັສສະ ນະໂມອັນວ່າກິຣິຍາອັນນ້ອມໄຫວ້ ແມແຫ່ງຂ້າ ອັຕຖຸຈົງມີ ຕັສສະແຫ່ງພຣະພຸທເຈົ້າຕົນນັ້ນ ພະຄະວະໂຕ ຕົນມີທໍາເນົາເລົາຕົນອັນງາມຫາ ບຸຄົນຜູ່ຈັກທຽບທຽມບໍໄດ້ ອະຣະຫະໂຕ ຕົນໄກແກ່ຣາຄາທິກິເລດ ສັມມາສັມພຸທທັສສະ ຕົນຕັສຮູ້ຍັງທັມທັງມວນດ້ວຍດີດ້ວຍຕົນແລ ອະຫັງອັນວ່າຂ້າຜູ່ນັ້ນນະມັສສິກວາ ໄຫວ້ແລ້ວແລ ພຸທທັງ ທັມມັງ ສັງຄັງ ຍັງພຣະພຸທເຈົ້າ ພຣະທັມມະເຈົ້າ ແລພຣະສັງຄະ

ເຈົ້າດ້ວຍຄາຖາວ່າ ສີສີອັບຊະລີ ປະນາເມເດຍຍະ ຣະຕະນັງ
ຄຸນ ນະໂມພຸທາຍະໂລໂກ ປະກະຣະນະສັມພຸທທັງ ດັ່ງນີ້ແລ
ພຸດໂທ ທັມໂມ ສັງໂຄ ຈິ່ງມາທະຣົງທົງແທນປະຈົບບຽດນ້າງ
ປາຣະມີໂປໄທ້ສີຣະສາ ມາຣັກຂໍຢ່າມີມາຣມາບາຣະມີເບ້ງ
ກຳຈັດເຈັງຣະຈາກສັພໂຄຣາ ສັພອັນຕຣາຍາສັພະຍາ ຂໍຢ່າ
ໃຫ້ມີໂພຍພ້ຍວ້ຍງ ກນີໄກແສນໂຍດ ພົ້ນຈາກໂທດບາບ
ເວນທາ ດ້ວຍຜລະແຫ່ງຜູ້ຂ້າໄດ້ສ້າງ ແລະໄດ້ຂຽນບັ
ປິດກະກະ ເກັມເຈົ້າດວງນີ້ໄວ້ ໃຊດນານພຸທສາສນາເທົ້າ ໕໐໐໐
ພຣະວັດສາ ໃຫ້ເປັນທີ່ໄຫວ້ນົບເຄົາຣົບຢຳແປງ ແກ່ຄົນແລ
ເທວະດາທັງຫລາຍ ສືບເມືອພາຍຫນ້າພຸ້ນ ແລ

ໃພ ສາທະໂວ ດູກ່ອນສັປປຸຣິສະເຈົ້າທັງຫລາຍ ຢູ
ມີຜຍາປາຖນາເຖິງສຸກສາມປະການ ມີນີຣະພານ ເປັນທີ່ແລ້ວ
ຈິ່ງຕັ້ງບັງໂສຕະປະສາດຟັງບັງ ຣິສທັມດວງນີ້ ໃຫ້ມີຂັນເຂົ້າ
ຕອກດອກໄມ້ທູບທຽນ ຫມາກ ພູ ກ້ວຍ ອ້ອຍເຄື່ອງບູຊາ
ແລ້ວຈິ່ງຟັງເຖີ້ນ ເຫດວ່າເປັນຄຳບູກຄົນຜູ້ລ້ຳຍິງ ຜູ້ມີບຸນມີ
ສືບ ໕ ສືບ ໗ ດີຫລືດາຍ

ດູກ່ອນສັປປູຣິສະທັງຫລາຍ ບັດນີ້ຈັກກ່າວຄຳນານນີ

ທານແກ່ງ ຂຸນບໍຣິນຣາຊາທິຣາຊເຈົ້າກ່ອນແລ ຄຳໃຫວ່າ
ແຖນຟ້າຄືນບັ້ນປີ າາ ຫາກເປັນພໍ່ຂູນບໍຣິນແລ ຄືວ່າຕີ
ອິນທາທິປະຕິຣາຊແລ ເຂົາວ່າແຖນແຕ່ງນັ້ນ ຄືວ່າພິສນຸກັ
ເທວະບຸດແລ ອັນວ່າແຖນຄົນແລະແຖນຊັ່ງແຖນເຄືອກນັ້ນແຖນ
ຜູບັ້ຫູຫັ້ງແລ ແຖນສີວິນນີ້ປູ່ຊູ້ນຟ້າຈາດູນມະຫາຣາຊີ ກາ
ແຕ່ງບ້ງໂລກ ຫລີງບ້ງສັດບ້ງຄົນອັນກະທຳບ້ງບາບແລບຸ
ແລ ເກີແຫ້ຄົນທັງຫລາຍວາຜີຟ້າຜີແຖນ ວ່າອັນທີແຫ້ແມ່
ພຣະບາອິນແລ ທ້າວຈະຕຸໂລກທັງສີດາຍ ຈັດຂ້ຽນຖາມບ້ງ
ຄົນທັງຫລາຍປູງກະທຳບຸນຄຸນແລໂທດ ແລບ້ງມີນາງເທວະ
ດາຕົນນຶ່ງຊື່ວ່າ ນາງທໍຣະນີ ອັນຮັກສາບ້ງບ້າປາດຫມາຍທາ
ແຫ່ງຄົນທັງຫລາຍ ບ້ງມີນາງເທວະດາ ຕົນນຶ່ງຊື່ວານາງ
ເມຄຂະລາ ປູ່ຮັກສາພຣະບາທ້າວຂຸນແລຄົນທັງຫລາຍຜູ່ມີບູນ
ກໍດີ ບໍ່ມີບຸນກໍດີ ຫາກຮູ້ຊູ່ຄົນໃນໂລກນີ້ທັງມວນດາຍຄົນທັ
ຫລາຍວ່າຜີເສືອເມືອງນັ້ນບໍ່ມີແລ ແມ່ນນາງເມກຂະລານັ້ນແລ
ຄົນທັງຫລາງ ກະທຳບາບບຸນຄຸນໂທດດັ່ງນັ້ນ ກໍເມືອບອກ
ໃຫ້ທ້າວທັງສີໃຫ້ແຈ້ງ ຂ້ຽນຖາມດູຄໍ່ເຂົາຫັ້ນແລ

ດຸລາ ສັບປຸຣິສະບັກປາດເຈົ້າທັງຫລາຍ ຈີ່ງຕັ້ງບ້ງໃສ

ດະປະສາດຫູຟັງ ຍັງຕຳນານນິທານມະຫາກັບນີ້ເຖິງ ໂພທິ
ສັດໂຕ ອັນວ່າໂພທິສັດເຈົ້າເຮົາໄດ້ເກີດເປັນ ສະມັນຕຣະພຣົມ
ເປັນໃຫຍ່ແກ່ພຣົມທັງຫລາຍ ກໍ່ຫາກສເດັດລົງມາດູຍັງຈັກ
ກະວານທັງມວນອັນກວ້າງແລະແຄບໃຫ້ຮູ້ ຊຸມພູທວີບເຮົານີ້
ກ້ວາງໄດ້ຫມື່ນໂຍດພຣົມ ທັງຫລາຍກໍ່ມາໝາຍໄວ້ຍັງທີ່ອັນ
ຈະຕັ້ງເມືອງໃຫຍ່ທັງຫລາຍ ໑໖ ເມືອງໃສ່ຫລັກແກ້ວໃສ່ຫລັກ
ຄຳ ໃສ່ຫລັກເງິນໄວ້ ທີ່ອັນ ຈັກຕັ້ງເມືອງນ້ອຍທັງຫລາຍມີ
໑໕ ເມືອງໃສ່ຫລັກເງິນ ໃສ່ຫລັກຄຳ ໃສ່ຫລັກຫີນຫມາຍໄວ້
ຊູ່ແຫ່ງຫັ້ນແລເມື່ອນັ້ນຈິ່ງໃຫ້ພຣົມຕົນຊື່ວ່າ ຜັບປະຣະເມ
ສວນຮັກສາກ້ຳຕາວັນອອກ ພຣົມຕົນນຶ່ງຄືພຣະນາຣາຍຮັກ
ສາກ້ຳຕາວັນຕົກ ພຣົມຕົນນຶ່ງຊື່ວ່າ ມະໂນສິດທິຮັກສາກ້ຳຫີນ
ເຫນືອ ພຣົມຕົນນຶ່ງຊື່ວ່າ ເສລະສິດທິຮັກສາກ້ຳຫີນໄຕ້ປູ່ສອນ
ສາຕຣະສິນທັງມວນ ຈິ່ງໄດ້ຊື່ວ່າ ເມືອງຕັກກະສີລາມະຄອນ
ຫັ້ນແລ ພຣະໂຄຕະມະເຮົາເປັນສະມັນຕຣະ ພຣົມນັ້ນ ປູ່ຮັກ
ສາເຖິງກາງເມືອງ ອັນວ່າພຣະພຸດເຈົ້າ ໕ ພຣະອົງຄືພຣະ

ເມຕໄຕຍະເຈົ້າ ຈັກມາເປັນພຣະລຸນພຣະເຈົ້າທັງຫລາຍໃນມະ
ຫາກັບນີ້ແລ ແດນແດ່ນັ້ນເບື້ອຫນ້າ ບ້ານເມືອງທັງມວນອັນ
ພຣິມທັງຫລາຍຕັ້ງແຕ່ງຫມາຍໄວ້ນັ້ນ ກໍບັງເກີດມີທ້າວພຣະ
ຍາບິງຊາຍທັງຫລາຍອອກເດັນໄປ ທ້າວພຣະຍາກໍຢູ່ໃນສິບ
໕ ສິບ ໆ ຊອບທິສຣາຊທັມແຕງຄອງຊອບໂລກຊອບທັມກໍໃສ
ພາບຣາບງາມດີກໍມີວັນນັ້ນແລ ພຣະກຸກ ກຸສັນທະເຈົ້າເກີດມາ
ເປັນພຣະ ແລະສາສນາກໍລາລິະໄປ ແລ້ວຊູມພູທວີບກໍເສົ້າສູນ
ເປັນ ອັນເຫີງບານນັກ ດັ່ງນັ້ນພຣະຍາອິນແລວີສານຸກັມເທວະ
ບຸດແລະ ທ້າວຈະຕຸໂລກທັງສີແລນາງທໍຣະນີແລນາງເມກຂະ
ລາອັນລາວເກົາເຂົາວ່າຜີຟ້າ ຜີແຖນວ່າອັນຈິງເອົາເທວະດາ
ອັນຢູ່ຊັ້ນຟ້າພາຍບິນລົງມາໃສ່ ເປັນທ້າວເປັນພຣະຍາດ້ວຍອັນ
ເປັນໂອປະປາຕິກຊາດ ກໍໃຫ້ທ້າວພຣະຍາຢູ່ໃນຣາຊທັມ ໑໐
ປະການ ດີທານສີນພາວະນາ ເປັນເງີນດີແລ້ວ ເມື່ອພຣະພຸທ
ເຈົ້າໂກນາຄົມມາເກີດເປັນພຣະ ຫມົດສາສນາພຣະໂກນາຄົມ
ແລ້ວຊູມພູທີບທັງ ມວນກໍເສົ້າສູນເສັ່ງເກັ້ງມວນ ພຣະຍາອິນ

ແລະເທວະດາທັງຫລາຍກໍ ເລົາເອົາເທວະບຸດເທວະດາອັນຢູ່ຊັ້ນ
ຟ້າພາຍບົນ ລົງມາເປັນທ້າວພຣະຍາເໜືອນດັ່ງກ່າວແລ້ວ
ແດ ນາຍຫລັງນັ້ນແລ ບ້ານເມືອງທັງຫລາກໍໃສພາບຮາບງາມແລ
ເມື່ອພຣະພຸທເຈົ້າອົງຊື່ວ່າ ກັສສະປະເຈົ້າ ມາເກີດເປັນພຣະ
ໜໍດລາສນາພຣະກັສສະປະ ຢູ່ນາ ນານນັກຜີເຜດຜີຍັກທັງ
ຫລາຍຢູ່ ບຽດບຽນກຸກກວນກະທຳຮ້າຍໃນຊົມພູທີບເຮົານີ້ ແລະ
ຄົນທັງຫລາຍກໍຣົບເລວຜີເຜດຜີຍັກ ໆ ທັງຫລາຍກໍຣົບເລວຄົນ
ຂ້າຟັນກັນໄປມາຫັ້ນແລ ພຣະພຸທເຈົ້າຕົນຊື່ວ່າ ມຣະໂຄດົມ
ເຈົ້າແຫ່ງເຮົາມາເກີດແລ້ວດັ່ງນັ້ນ ກໍ່ກະທຳພຽນໄປໄດ້ ໖ ວັສ
ສາຈຶ່ງໄດ້ເປັນພຣະຍັງບໍ່ໄດ້ໂຜດສັດທັງຫລາຍ ໃນເມືອງໃຫຍ່
ທັງຫລາຍ ໑ປີ ເມືອງພຸ້ນໄປ ວາຣອດເຮົາ ສັກເທື່ອຍັງເປັນນັ້ນ
ເປັນທອນເສັງແລ

ບັດນີ້ມາຈັກ ຈາຍັງນາງກາງຣິເມືອງລ້ານຊ້າງເຮົາ ພີ່ທັງ
ນີ້ສອ ແລອ້າງຊະເລີກເກີກ ແລະ ເຖົ້າ ຊະ ໂຄມ ຟ້າ ແລະ ອ້າຍ
ເຈັດ ໄທແລປູ່ນີ້ສີແລຍ່າພີ່ໃສ ແລນາງເງືອກປູ່ ພູຊ້າງນັ້ນ

ແລພຣະບາງເຫລືອນຕົວນຶ່ງປຸ່ ພູຊວງຫລວງເຂົານີ້ເປັນຜົວ

ເມັຽກັນ ຈິງມີ ລູກຜູ້ນຶ່ງຊື່ວ່າ ບາງປາກກວ້າງຫູຣີກັບທັງບາງ

ບັນທາເກີແລເຂົາຮັກສາເຂດຂົງກົງເມືອງລ້ານຊ້າງທັງມວນແລ

ແຕ່ນັ້ນໄປພາຍຫນ້າບັງມີ ເຈົ້າຮັກສີສອງພີ່ນ້ອງຈິ່ງມາ ຕັ້ງ

ຫລັກກນາຍແຜ່ນດິນໄວ້ເບື້ອງວາວັນອອກນັ້ນ ຝັງຫລັກຄຳ

ລຸ່ມໃສ່ຫລັກເງິນກາງໃສ່ຫລັກ ໄມ້ຝັງລົງເລິກມີ ໑ ປີ ສອກ

ອັນນີ້ຊື່ວ່າ ຫລັກປະດຸມທົວທີ ໃສ່ຊື່ຫລັກຫມັ້ນ ທີ່ນຶ່ງຊື່ວ່າ

ທ້າຍຂັນທະຕັ້ງກາງເມືອງຫລັກນຶ່ງຫັ້ນແລ ຫລັກນຶ່ງຕັ້ງ

ໄວ້ທ້າຍເມືອງທີ່ງອນຫ້ວຍສິບໂຮບ ກ້າຝ່າຍເໜືອແລ້ວຈິ່ງຝັງ

ຫລັກຫີນແກ້ວ ອັນນຶ່ງ ຫລັກຄຳຫລັກເງິນໄວ້ທີ່ຕີນໄມ້ຄູ່ອນຕົ້ນ

ນຶ່ງ ມີດອກບານຕອະ ການງານ ບານຊູ່ເດືອນບໍ່ຂາດເຫລືອນ

ຕັ້ງ ດອກທອງແດງມີລຳໄຫຍ່ໄດ້ ໑໗ ອ້ອມສູງໄດ້ ໑໑ ກ

ວາເຈົ້າຮັກສີສອງພີ່ນ້ອງຈິ່ງ ເອົາຫີນຫນ່ວຍນຶ່ງຊື່ວ່າ ກ່ອນກ້າຍ

ຟ້າມາ ຫມາຍໄວ້ໃຫ້ເປັນທີ່ຕັ້ງຜາສາດ ເຈົ້າພູມີ ປາລເຈົ້າ

ຜ່ນດິນຫັ້ນແລ

ອະຖະ ຖັດນັ້ນເຈົ້າຣັດສີສອງພີ່ນ້ອງສອງພຣະອົງ ຈຶ່ງໄປເອົານ້ຳຂະໃນມາຕະສຣະນາຫົດເສົາຫລັກຄຳ ທັງສີ່ແຫ່ງນີ້ແລ້ວ ນ້ຳອັນເຫລືອກວ່ານັ້ນເຈົ້າຣັດສີ ຈຶ່ງ ໄປໄວ້ໃນບ່ອນນຶ່ງດິນທັງຫລາຍຮຽກວ່າຖ້ຳນ້ຳທ່ຽງແຫ່ງນຶ່ງຫັ້ນແລຈຶ່ງໄປຕັກເອົາມາຫົດສົງທ້າວພຣະຍາ ທັງຫລາຍກິນຈັກນັ່ງເມືອງຫັ້ນແລຖັດນັ້ນເຈົ້າຣັດສີຈຶ່ງມາຕັ້ງນັກຂັດຕະລຶກຊີໄວ້ວ່າເປັນ ຊາ ຕາ ເມືອງໄວ້ກັບແຜ່ນດິນທີ່ຊຽງທອງເປັນກົ້ນວ່າດັ່ງ ນີ້ ໑ , ໒ ມີ , ໔ . ໕ ຝ, ກ , ຊ , ລ ລັຄນາວ່າລຶກທັງຫລາຍມວນປູງນີ້ຢູ່ໃນສິງຫະຣາສີແລ ຕັ້ງຫລັກຄຳຝູງນີ້ໄວ້ກັບແຜ່ນດິນອັນນີ້ແມ່ນຍາມຈັກໃກ້ຮຸ່ງໄວ້ລັຄນາກົກຣະກົດຣາສີ ອັນເປັນຊາ.ວາແຜນເມືອງເຈົ້າຣັດສີຈຶ່ງກໍ່ຕັ້ງແຜ່ນດິນແລຖັດນັ້ນ ເຈົ້າຣັດສີພີ່ນ້ອງໄປສະຖິດຢູ່ທີ່ຫີນສິບຄານທີ່ນ້ຳຂອງຄົບກັນຫັ້ນ ຈຶ່ງຮຽກມາຍັງທັງຫລາຍ ໑໕ ຕົວໆນຶ່ງຢູ່ຖ້ຳພູຊວງຕົວນຶ່ງຢູ່ພູຊ້າງ ຕົວນຶ່ງຢູ່ແກ້ງຫລວງ ນ້ຳເຊືອງຕົວນຶ່ງຢູ່ສົບເຊືອງ ຕົວນຶ່ງຢູ່ຜາຮັງເມືອງທີ່ສົບອຸ ຕົວນຶ່ງຢູ່ທ້າງຂອງແກ້ງອ້ອຍຜາທະນຸຕົວນຶ່ງຢູ່ຜາເສືອ

ຕົວນີ້ເປັນແກ່ກວ່າ ພຣະຍານາກແລ ຕົວນຶ່ງປູ່ຜາດ່ງວ ລຸ່ມຜາ
ຈອມເພັດຫັ້ນແລ ຕົວນຶ່ງປູ່ຄຶກເຣອ ຕົວນຶ່ງປູ່ກຶກທ່ອນ ຕົວນຶ່ງ
ປູ່ຜາຕັດແຄແລຜາຕ່າງນາຍ ຕົວນຶ່ງປູ່ແກ້ງແດນທ້າງນ້ຳຂອງ
ດອນຄວາມຟູ່ມ ຕົວນຶ່ງປູ່ປາກສິບໂຮບຫັ້ນ ຕົວນີ້ເປັນພຣະຍາ
ໃຫຍ່ຮັກສານ້ຳຮັກສາເມືອງກ້ຳຝ່າຍໃຕ້ ຕົວປູ່ຜາເສືອເປັນ
ໃຫຍ່ຮັກສາຫີນນ້ຳກ້ຳຝ່າຍເມືອງຫີນເໜືອຫັ້ນແລ ພຣະຍາ
ນາກ ໑໕ ຕຣະກຸນກໍອອກມາແລ້ວ ກໍເອົາກັນເນຣະມິດຕົວເປັນ
ທະຫານເປັນທ້າວ ເປັນພຣະຍາອອກມາພ້ອມກັນແລ້ວ ເຈົ້າ
ຣັດສີພີ່ນ້ອງຈຶ່ງມາລະຄຸດປູ່ກ້ອນຫີນກ່າຍຟ້າທີ່ກຶກໄມ້ທອງຕົ້ນ
ໃຫຍ່ ແລ້ວກໍສັ່ງສອນພຣະຍານາກທັງຫລາຍ ວ່າດັ່ງນີ້ດູລາ
ພຣະຍານາຄທັງຫລາຍບ່ອນທີ່ນີ້ ເປັນທີ່ຕັ້ງພາສາດເຈົ້າຜູ້ມີ
ບຸນອັນຈັກມາເປັນທ້າວພຣະຍາຂ້າງໜ້າພຸ້ນດີຫລີແລ ເຈົ້າ
ທັງຫລາຍຈຶ່ງພ້ອມພຽງກັນ ດ້ວຍກັນພີ່ທັກຮັກສາບ້ານເມືອງ
ແມ່ນ້ຳພຸດອຍໄຕ້ເໜືອທາງ ເທິງແຜ່ນດິນແຜ່ນຊາຍ ແມ່ນ້ຳ
ໃຫຍ່ນ້ຳນ້ອຍທັງຫລາຍຊູ່ທີ່ຊູ່ແຫ່ງເຖິນ ເຈົ້າທັງຫລາຍພ້ອມ

ກັບຣັກສາທີ່ຊຽງດົງຊຽງທອງນີ້ເປັນເຄົ້າເຖິ້ນ ຈຶ່ງມາຣັກສາສີ່ເດືອນໃຫ້ພ້ອມກັບມາເທື່ອນຶ່ງ ພຣະບາບາກກົວຢູ່ຫນ້າຫ້ວຍໃຫ້ມາທີ່ກ້ອນຜາຂວາງກ້ອນປຽບຫັ້ນກ່ອນ ພຣະບາບາກກົວຢູ່ນ້ຳຂອງຄັນວ່າມາໃຫ້ເຊົາທີ່ກ້ອນ ຜາດ່ຽວຫັ້ນແລວັງຄຶກເຮືອຫັ້ນເຖິ້ນ ອັນນີ້ເຈົ້າຣັດສີກົດຫມາຍບອກສ່ວນໃຫ້ແກ່ພຣະບາບາກທັງຫລາຍແລພຍບເລົາຣຽກເອົາເທວະດາທັງຫລາຍໃຫ້ມາບອກຣັກສາໃຫ້ ຣັກສາບັງເມືອງທັງມວນແລແມ່ນ້ຳແລແຜ່ນດິນ ບັງພູດອຍທັງມວນນັ້ນ ເທວະດາຕົນນຶ່ງຮຽກຊື່ວ່າປູ່ພີສີຕົນນຶ່ງຊື່ວ່າບາງພີໄສ ສອງຂານີ້ປູ່ພູຊວງຫລວງແລພູຊ້າງນ້ອຍ (ຫລື ບັ້ງ) ສອງຂານີ້ຫາກເປັນຜົວເມັຽກັບເຈົ້າຣັດສີໃຫ້ຣັກສາເບື້ອງຕາວັນອອກ ເທວະດາຕົນນຶ່ງຊື່ວ່າເກົ້າງ້າວ (ເກົ້າເຫງົ້າ) ເທວະດາຕົນນຶ່ງຊື່ວ່າທ້າວບຸນເຫລືອ ສອງຂານີ້ຫາກເປັນຜົວເມັຽ ກັບປູ່ພູແສນເຂົາຄຳເຈົ້າຣັດສີໃຫ້ຣັກສາເມືອງຝ່າຍເຫນືອ ເທວະດາຕົນນຶ່ງຊື່ວ່າເຈົ້າຟ້າເສດ ອີກນຶ່ງຊື່ວ່ານາງພີຈິຕຣເລຂາລູກແຖນຄົນ ເຈົ້າຣັດສີໃຫ້ຣັກສາຝ່າຍໃຕ້ອາ

ຫາກເປັນຜົວເມັຽກັນ ເຈົ້າຣັດສີແຕ່ງໃຫ້ຮັກສາເມືອງກ້ຳເໜືອ
ແລບ້ານເມືອງທັງມວນດັ່ງນີ້ ຢູ່ໃດຈັກເປັນທ້າວພຣະບາທີ
ຊຽງດົງຊຽງທອງດັ່ງນັ້ນ ໃຫ້ແຕ່ງຂັນເຂົ້າຕອກດອກໄມ້ພາຊນະ
ຄາວຫວານ ບູຊາເຈົ້າຣັດສີແລເທວະດາເຈົ້າທັງຫລາຍຝູງ
ວ່າມານີ້ເຖີງ ເຈົ້າຣັດສີຫາກສັ່ງສອນເຂົາໄວ້ດັ່ງນີ້ແລຕະໂດ
ກາເລໃນກາລະແຕ່ນັ້ນໄປພາຍໜ້າ ໃສ ດາປັສໃສອັນວ່າເຈົ້າ
ຣັດສີທັງຫລາຍຕົນອື່ນກໍໜີໄປຕັ້ງບ້ານ ຕັ້ງເມືອງທີ່ເຂົາເຈົ້າ
ກົດໝາຍໄວ້ ທີ່ຈັກຕັ້ງບ້ານແປງເມືອງຫັ້ນແລ ບັງແຕ່ເຈົ້າ
ຣັດສີພີ່ນ້ອງ ກົນພີ່ນັ້ນຊື່ວ່າຣັດສີທອງດີນນ້ອງນັ້ນຊື່ວ່າ ທວາ
ທະຣັດສີ ເຈົ້າຈີ່ງມາກົດຊື່ເມືອງກ້ຳໃຕ້ນັ້ນເອົາພູຊ້າງເປັນນິມິດ
ຝ່າຍກ້ຳເໜືອນັ້ນເອົາພູຊ້າງນັ່ງເປັນນິມິດແລ ຊື່ສອງອັນນີ້ຈຶ່ງ
ໄດ້ຊື່ວ່າເມືອງຊວາລ້ານຊ້າງເພື່ອອັນແລ ຕະເທະນັນຕະຣັງກູດ
ນັ້ນ ເຊາຖະດາປັສໃສ ອັນວ່າເຈົ້າຣັດສີທອງດີນພີ່ ກໍຈີ່ງໃຫ້
ເຈົ້າຣັດສີດີນນ້ອງປູ່ເຜົ້າທີ່ນັ້ນ ແລ້ວເຈົ້າຣັດສີດີນພີ່ຈີ່ງເຂົ້າ
ບັງຊານລະມາບັດແລ້ວເຈົ້າກໍສະເດັດຂຶ້ນເມືອສູ່ເມືອງຊັ້ນຟ້າ

ດາວະດຶງສາແລ້ວ ເຈົ້າກໍເຂົ້າໄປສູ່ສຳນັກແຫ່ງພຣະຍາ ອິນ
ເຈົ້າກ່າວກິຈການທັງມວນ ອັນຕັ້ງຫມາຍເຂດແດນບ້ານເມືອງ
ທັງມວນທີ່ຈັກໃຫ້ຫາ ທ້າວພຣະຍາຕົນຢູ່ຊອບໂລກຊອບທິສ
ຣາຊທັມ ໑໐ ປະການເປັນຕົ້ນວ່າໃຫ້ທານຣັກສາສີນ ໕ ສິນ ໘
ຟັງທັມເມດຕາພາວະນາບໍ່ຂົ່ມເຫງຂ້ອຍ ໄພ່ໄທຍໄທ ອັນນຶ່ງບໍ່
ໃຫ້ນ້າງຣາຊປະເວນີບຸຣານະທັມຕັ້ງໄວ້ ເກົ່າ ດຸມ ໃຫມ່ ຖາງ ຮີດ
ຄອງແຕ່ປິຕຸປິຕາຫາກ ຕັ້ງໄວ້ແລ້ວພອຍເລົ່າຣິນ້າງເສັຽ ອັນ
ນີ້ກໍເປັນຄອງຈິບຫາຍໃນໂລກອັນນີ້ແລະໂລກ ພາຍຫນ້າ ປະ
ການນຶ່ງຂ້າແຫ່ງພຣະຍາ ອິນເຈົ້າ ໃຫ້ຊອກຫາທ້າວພຣະຍາ
ຕົນປະເສີດລົງໄປນັ່ງບ້ານແປງເມືອງ ໃຫ້ຊອບ ຂ້ອຍ ໄພ່
ໄທຍໄທໄດ້ສຸກຍ້ອນເຈົ້າແຜ່ນດິນ ດູລາພະຍາອິນເຈົ້າເປັນເຫັນ
ທ້າວ ພຣະຍານີ້ຕົນໃດຍັງເຫັນແກ່ອະຄະຕິ ໔ ຄື ໂທສາຄະຕິ
ໂມຫາຄະຕິ ສັນທາຄະຕິ ພຍາຄະຕິ ບໍ່ພິຈາຣະນາຫລົງໂທສ
ຫນັກໂທສເບົາຫລົງເຂົ້າໄປໃນວັດຖຸການແລກິເລສການ ຖ້ອຍ
ຄວາມຄົນເຂົາສູ່ຮູ້ ຫາຕັດແຕ່ງຮ້າຍດີໄປໄກ ຮັກຊັງໄຄດວງ

ເຫັນແກ່ຊັບສິນ ຮູບຊົງມີຄຸນ ບໍ່ມີຄຸນໄດ້ບ້ອນຄຳຫລາຍໃຫ້ຫນ້ອຍ
ຄຳຫນ້ອຍໃຫ້ເກີດມີຫລາຍອື່ນ ກໍດີໃຈ ແມ່ນກໍໃຫ້ພິດ ພິດໃຫ້
ແມ່ນຮ້າຍເຫັນແກ່ຫັຽບຕາຍກໍຄື້ວ ປ້ານກົວພາຍລຸນໂຫດຫັນ
ບາບໃຫມ່ປ່າເປັນໃຫຍ່ ພິດແຜນແກ່ອະນາຮັຖຄາດຄາບໍ່ຕາມ
ຣະດູປີເດືອນວັນຍາມບ່ຕາມໂບຮານຣະຣາຊປະເວນີ ຄ່າຣີບໃຫ້ວຽກ
ການແຕ່ງເບັ້ຽເງິນ ຜູ້ ພ່າຍໃຫ້ແພ້ຜູ່ແພ້ ໃຫ້ພ່າຍເຫັນແກ່ ສິນ
ຈາງບັກດັ່ງນັ້ນ ບ້ານເມືອງ ບໍ່ສຸກຄຸ້ມຊຸ່ມເປັນຈິບຫາຍໃນຊາດ
ນີ້ແມ່ນທ້າວພຣະຍາເສນາອຳນາດແປງບ້ານບັ້ງເມືອງ ເປັນດັ່ງ
ວ່ານານີ້ ດັບຈຸຕິຕາຍໄປສູ່ນະຣົກ ມີກອງທຸກທັງມວນຫາກເປັນ
ພໍ່ເປັນແມ່ເປັນພີ່ນ້ອງ ກອງທຸກອັນນັ້ນຫາກຄວນພິລຶກເພິ່ງ ກົວ
ນັກຫນາຫາຄວາມສບາຍບໍ່ໄດ້ຮ້ອງໄຫ້ ຢູ່ເວີງໆ ແກ່ທ້າວພຣະ
ຍາເສນາອຳນາດຜູ່ນັ້ງບ້ານແປງເມືອງບໍ່ໃຫ້ຊະບໂລກຊອບທັມ
ນັ້ນແລ ດູກ່ອນພຣະຍາອີນ ຕີນເປັນແກ່ກວ່າເທວະດາທັງຫລາຍ
ທ້າວພຣະຍາເສນາອຳນາດຍິງຊາຍ ແຕ່ງໃຫ້ແມ່ນທ່ານອງ
ສັບປຸຣິສະເຈົ້າດັ່ງນັ້ນ ອະໂກທັງຢ່າໃຫ້ມີຄຳກອບ, ຈຽດຄ້ອຍ

ຂື້ນຂີມໃນວິທີງສັນຈະ ຢ່າໄດ້ປອງບັງບຽດ ຜິແຜນອັນບໍ່ແມ່ນ
ຄອງເມືອງອັຊຊະວັງ ໃຫ້ມີໃຈອັນຊື່ຕໍ່ ຕັ້ງໃຈທໍ່ຄອງບຸນມັທ
ທະວັງໃຫ້ມີໃຈອ່ອນຂາມລະອຽດ ບໍ່ກອບຄຽດບ່ອນປານີຂັນຕີ
ບ່ອນອິດຄໍາຄຽດບ່ອນປານີປະຣິຈາຄັງມີໃຈດີລະ ຈ່າຍ ໃຫ້ ດ້ວຍ
ງ່າຍເປັນທານທີຣິໂອຕັປປະ ປາກອັນໃດທໍາອັນໃດ ໃຫ້ລະ
ອາຍແກ່ນັກປາດຜູ້ສລາດຄອງທັມ ອະວິໂຣ ທັງແຕ່ງໃຫ້ຣາບ
ຕາມຄອງເມືອງສີລະທານັງ ໃຫ້ມີສີນແລທານທຸກເມື່ອໃຈ
ກວ້າງເພື່ອມັກບຸນກໍຈິ່ງໄດ້ນໍາຕົວໄປເກີດ ຊັ້ນຟ້າເລີດດຸສິດາ
ແທ້ດີຫລີແລ ຕະໂຕພາຍຫນ້າແຕ່ນັ້ນ ເຊດຖະອິສີ ອັນວ່າເຈົ້າ
ອົດສີດິນພີຄືຣັດສີຫອງ ຈິ່ງໃຫ້ຣັດສີດິນນ້ອງ ປູ່ຣັກສາທີ່ນັ້ນ
ກ່ອນແລເຈົ້າກໍເຂົ້ານັ່ງຊານສະມາບັດທະຍານຍິ້ນ ເມືອ ຊັ້ນ ຟ້າ
ດາວະຕິງສາ ເລົ່າກິຈການຖ້ອຍຄໍາທັງມວນແກ່ ພຣະ ຍາ ອິນ
ອັນໄດ້ແຕ່ງບ້ານແປງເມືອງ ໃຫ້ທ້າວພຣະຍາຕົນແຕ່ງຊອບໂລກ
ໃຫ້ເປັນສຸກແກ່ສັດແກ່ຄົນທັງຫລາຍ ແລ້ວກໍຕ້ານຈາຣະຈາ ກັບ
ຄອນພຣະຍາອິນ ໃຫ້ທ້າວທັ້ງສີລິງມາລຽບດູບັງຊູມພູທີບ ໃຫ້

ເມືອເປັນບ້ານເປັນເມືອງແລ້ວຫັ້ນແລ ພຣະພຸທເຈົ້າເກີດມາຕັດ
ສັບພັນຍຸເປັນພຣະໃນໂລກນີ້ແລ້ວຍັງໄດ້ໄປໂຜດສັດທັງຫລາຍ
ໃນເມືອງໃຫຍ່ທັງ ໑໖ ເມືອງກ່ອນແລະເມືອງນ້ອຍທັງຫລາຍ
໑໕ ເມືອງນີ້ພຣະພຸທເຈົ້າໄປໂຜດສັດບໍ່ທັນຮອດທັນ ເຖິງເມືອງ
ເພື່ອບໍ່ມີທ້າວພຣະຍາຕົນໃດ ຮັກສາແຜ່ນດິນຫັ້ນແລ ເຈົ້າຣັດ
ສີມີຄຳຕ້ານຈາຣະຈາກັບດອນພຣະຍາອິນດັ່ງນີ້ແລ້ວ ຈຶ່ງສັ່ງ
ອຳລາພຣະຍາອິນເຈົ້າຟ້າ ງ ກັບທັງທ້າວທັງສີກັບທັງວິສນຸກັມ
ເທວະບຸດທັງຫລາຍ ກໍ່ມາຊູນນຸມກັນໃນສຳນັກແຫ່ງພຣະຍາ
ອິນຕົນເປັນແກ່ກວ່າເທວະດາທັງຫລາຍຫັ້ນແລ ເມື່ອນນເຈົ້າ
ຣັດສີ ໂອຕະຣິດວາກໍ່ສະເດັດລົງມາຈາກຊັ້ນຟ້າ ດາວະດຶງສາ
ມາແລ້ວ ກໍ່ມາບອກເລົ່າອັນໄດ້ຕ້ານຈາຣະຈາກັບດອນພຣະຍາອິນ
ແກ່ເຈົ້າຣັດສີຕົນເປັນນ້ອງແຫ່ງຕົນ ຊູ່ ະກາ ແລ້ວ ເຈົ້າຣັດ
ສີທັງສອງພີ່ນ້ອງກໍ່ສະເດັດໄປສູ່ທີ່ຢູ່ແຫ່ງຕົນກໍ່ມີວັນນັ້ນແລ

ຂຸນບໍລົມລົງມາຕັ້ງເມືອງແຖນ (ດຽນບຽນຝູ)

ໂພ ສາທະໂວ ດູຣາສັປປຸຣິສະທັງຫລາຍ ຝູງມີພຍາ ຈັກກ່າວບັງພຣະຍາຜີແຖນ ຈັກໃຫ້ທ້າວຂຸນບໍຣົມລົງມາເກີດໃນ ເມືອງລາວເກົ່າເຮົາໜີ້ກ່ອນແລ ແຕ່ນັ້ນຜີແຖນກໍໃຫ້ທ້າວຂຸນບໍ ຣົມຣາຊາລົງມາເກີດໃນເມືອງລາວ ໃຫ້ເປັນພຣະຍາຫັ້ນແລ ທີ່ດ້ວຍມີແທ້ສັບວ່າລາວເກົ່າເຂົາວ່າ ແຖນຟ້າຄືນນັ້ນຄືຕົນ ພຣະຍາອິນເຈົ້າຟ້າແລ ແຖນອົງນີ້ ຫູບ່ອງຫູທັງແລ ແຖນ ຜູ່ໃຫ້ເປັນຝົນເປັນລົມນັ້ນກໍດີ ແຖນຜູ່ໃຫ້ເປັນເຄື່ອງເສບຂອງລໍາ ກໍດີ ແຖນຜູ່ແຕ່ງໃຫ້ເປັນເຄື່ອງໄຮ່ເຄື່ອງນາແລແຕ່ງໃຫ້ເປັນໂລກ ທັງຫລາຍຝູງນີ້ ແມ່ນເທວະບຸດເທວະດາ ທັງຫລາຍອັນຢູ່ໃນ ຊັ້ນຟ້າຈາຕຸມະຫາຣາຊິກາທັງມວນເປັນອົງປະເສີດຍິ່ງນັກ ແລ ລາວເມືອງລ່າງປາງກ່ອນນັ້ນ ເຂົາຮຽກວ່າ ຜີຟ້າຜີແຖນວ່າອັນ ທີ່ແທ້ ບໍ່ເປັນດັ່ງຄໍາເຂົາດາງ ບັດນີ້ເຮົາທັງຫລາຍຕາມຄໍາລາວ ເກົ່ານັ້ນກ່ອນແລແຖນຟ້າຄືນຈິງວ່າ ເຈົ້າຮັດສີມາເລົ່າຕໍ່ເຮົາດັ່ງນີ້

ເຮົາທັງຫລາຍ ຈັກໃຫ້ໃຜໄປເປັນທ້າວພຣະຍາໃນເມືອງລຸ່ມນີ້ ຈາ ແຖນທັງຫລາຍຈິ່ງກ່າວວ່າ ເອີ ຄວນ ໃຫ້ແຖນຊັ່ງມາຊັ່ງ ດູກ່ອນ ລູກຟ້າແຖນທັງຫລາຍທັງຍິງທັງຊາຍ ບຸນໃຜມີມາກ ຫລາຍເຮົາຈິ່ງໃຫ້ລົງໄປເປັນເຈົ້າແຜ່ນດິນ ທີ່ຊຽງດົງຊຽງທອງ ເຖິ້ນ ຜູ່ບຸນນ້ອຍໃຫ້ໄປເປັນເຈົ້າເປັນໃຫຍ່ທີ່ນັ້ນບໍ່ໄດ້ແລ ຜີແຖນ ທັງຫລາຍຈາກັນດັ່ງນີ້ ດ້ວຍມີແທ້ຄຳເຈົ້າຣັດສີມາເລົາກໍ່ເຮົາ ດັ່ງນີ້ ເປັນຫນັກເປັນໃຫຍ່ກ້ວາງຂວາງດີຫລີຜູ່ບຸນນ້ອຍເປັນ ເຈົ້າໃຫຍ່ບໍ່ຄວນເລີຍອັນນຶ່ງໄມ້ທອງຕົ້ນນັ້ນໃຫຍ່ນັກ ຍອດປາຍ ມັນນັ້ນແມ່ນຫີນ ກຳພິລສີລາອາສນ໌ ແຫ່ງພຣະອິນເຈົ້າຟ້າ ແທ້ດີຫລີດາຍ ບ້ານເມືອງຊວາລ້ານຊ້າງ ອັນນີ້ເປັນຫນັກເປັນ ໃຫຍ່ດາຍເງິນຄຳເຫລັກທອງທັງຕົ້ນໄມ້ແລະໃບ ມີຣົດຫອມນັກ ແກ້ວ ໆ ປະກາບ ກໍມີໃນພື້ນແຜ່ນດິນນັ້ນຫັ້ນແລ ເຈົ້າຣັດສີວາ ດັ່ງນັ້ນແຖນຟ້າຄືນກ່າວວ່າ ຜູ່ໃດບຸນນ້ອຍລົງໄປເປັນເຈົ້າແຜນ ດິນເມືອງອັນນັ້ນບໍ່ໄດ້ແລແຖນທັງຫລາຍ ຈິ່ງມາຊັ່ງລູນດູໃນ ແຖນທັງຫລາຍ ໃນເມືອງຟ້າເມືອງແຖນ ທັງຜູ້ຍິງຜູ້ຊາຍ

ຫລາຍບັກຈຶ່ງມາໄດ້ລູກແຖບຄືນຜູ້ນຶ່ງ ຈຶ່ງມາໄດ້ລູກແຖບຊັ່ງບຶງ
ນຶ່ງຈຶ່ງມາໄດ້ລູກແຖບ ແຕ່ງບຶງນຶ່ງສາມຄົນເຂົານີ້ແຖບທັງຫລາ
ຈຶ່ງເອົາມາຕັ້ງໄວ້ເກ່ານກາງແຖບທັງຫລາງ ສ່ວນວ່າແຖບຟ້າ
ຄືນຈຶ່ງມາສັ່ງສອນແກເຂົາທັງສາມວ່າດັ່ງນີ້ ດູລາເຈົ້າທັງສາມ
ສູເຈົ້າ ຄົນເປັນຜົວເມັຽກັນແລ້ວຈຶ່ງໄປສູ່ທີ່ຢູ່ ທີ່ກິນໃນເມືອງລຸ່ມ
ພຸ້ນເຕີ້ນ ລູກແຖບຄືນນັ້ນໃສ່ຊື່ນາງບົມມະພາລາ ໃຫ້ເປັນເທ
ວີກ້າຂວາລູກແຖບຊັ່ງນັ້ນໃສ່ຊື່ນາງເອັດແຄງ ໃຫ້ເປັນເທວີກ້າ
ຊ້າຍເຈົ້າຜູ້ເປັນຜົວນັ້ນໃຫ້ຊື່ວ່າຂຸນບໍຣົມຣາຊາທິຣາດ ແລ້ວຈຶ່ງ
ມາໃຫ້ເຄື່ອງ ຫ້າວທັງ໕ປະການ ເພື່ອເປັນເຄື່ອງຣາຊາພິເສກ
ແລ້ວຈຶ່ງມາໃຫ້ດາບແມ່ວີກັບທັງດາວຣາງກອນ ກັບທັງວານ
ຟັນຫລຽວແລະດາບລາຍຟ້າແມບ ແລະດາບເຫລັກກ້ອນແຂ
ເພື່ອກັບທັງຄ້າງສາມດວງ ກັບທັງແພນສາມງາກັບຄ້ອງຣາງ
ເງິນຣາງຄໍາແລະງ້າວຟ້າເພີ້ນ ກັບແສງຟ້າກະດາກ ທັງກອງ
ໄຊທັງຄ້ອງນ້ອຍຄ້ອງໃຫຍ່ໄຫໄວ້ ຄົນເປົ່າຫອຍສັງດັງສຽງນີ້
ທັງປີ່ແກ້ວຊື່ວ່າສອນໄລ ທັງໄຕເງິນໄຕຄໍາເປັນຂັນຫມາກ ທັງ

ຫມໍ້ໄຫໄຕພາດທັງບວຍເງິນບວຍຄຳ ທັງເງິນແກ້ວເຄືອງແສງ
ຫລາກຫລາຍສິ່ງຊູ່ປະການ ກັບທັງຈຽດພັນລາຍປົກຫົວຊ້າງ
ກັບທັງປະຄືກອ້າງ ກັ້ນກາງຫາວ ກັບ ທັງສາວລບົມສານ
ຮ້ອຍຄູ່ ແຖນກໍໃຫ້ບັ້ງປູ່ເປັນຖ້ອງຖ້ ແຖວຫັ້ນແລ ເມືອນັ້ນແຖນ
ຟ້າ ຄືນຈິ່ງໃຫ້ເອົາຊ້າງເອົາມ້າ ທັງມວນມາດູຈິ່ງໄດ້ຕົວນຶ່ງຊື່
ວ່າ ຊ້າງງາກ້ຽວງາກອດຊ້າງຕົວນີ້ເປັນລູກຊ້າງເອຣາວັນມີຕົວ
ອັນ ຂາວກະໂບງຕາທັງສອງນັ້ນດຳ ມີຮີມປາກທັງສອງນນ
ກໍດຳເປັນດັ່ງແຕ້ມຂຽນ ນັ້ນແລ ມີງາອັນຂາວເປັນດັ່ງແກ້ວຜລຶກ
ນັ້ນແລ ຈິ່ງ ເອົາມ້າຕົວນຶ່ງເປັນຊາດເຊື້ອພິລຫົກ ຈິ່ງຫາລູກ
ແຖນອັນຜູ່ມາກ່ອນຫນ້າ ນັ້ນ ຜູ່ນຶ່ງ ຊື່ວາຂຸນທັມມະຣາຊ ຜູ່ນຶ່ງ
ຊື່ວ່າຂຸນແສງ ມະໂນສາສຕຣ໌ ເຈົ້ານັ້ນຮູ້ສາສຕຣເພດທັງ
ມວນ ໄປກ່ອນຂຸນບໍຣົມຣາຊາ ຜູ່ນຶ່ງຊື່ຂຸນອຸ່ນ ຜູ່ນຶ່ງຊື່ຂຸນຄືລ
ແລະສອງຂຸນນີ້ຂີ່ມ້າຕາມຫລັງຊ້າງຂຸນບໍຣົມແລ ແຖນຟ້າຄືນ
ຈິ່ງໃຫ້ຜູ່ນຶ່ງຊື່ປູ່ເຖົ້າເບີ ຜູ່ນຶ່ງຊື່ແມ່ຍ່າງ່ານສອງຄົນນີ້ເປັນຜົວເມັຽ
ກັບແບກຂວານໄປກ່ອນ ເຖົ້າໄລ່ແລະແມ່ມົດ ສອງຂານີ້ເປັນ

ຜົວເມັຽກັບ ແບກພ້າແບກຈົກແບກສຽມໄປຕາມຫລັງເຖົ້າເບີ

ແລະ ແມ່ ຍ່າ ງ່າມ ໔ຄົນນີ້ຈັກບາພາບຂິນຜີ ເພດຜີບັກ ຜີເສື້ອ

ເມືອງພູ່ຮ້າຍກ້າແຂງອັນ ບໍ່ໃຫ້ເຂົ້າບ້ານເຂົ້າເມືອງ ກ່ອນຂຸນ

ບໍຣົມຫັ້ນແລ ແຕ່ນັ້ນຟ້າຄືນຈຶ່ງໃຫ້ຜູ້ ນຶ່ງຊື່ວ່າຂຸນຄະ ຂີຄວາຍ

ເຂົາລູ້ ຈຶ່ງໃຫ້ຜູ້ ນຶ່ງຊື່ລາງເຊີງຂີງົວອ້າຍເຂົາກວ້າງ ສອງຂາ

ນີ້ຄືຣືພົບເສນາຫນອບ ຫລັງຂຸນບໍຣົມມາຫັ້ນແລຂຸນບໍຣົມຈຶ່ງຂີ

ຊ້າງງາກ້ຽວງາກອດ ຂັດທັງດາວແມ່ວີທັງສະພາບໄຂວ່

ແຫລ້ງທັງເຄື່ອງຣາຊາພິເສກ ອັນແຖນຟ້າຄືນຕົນເປັນໃຫຍ່ໃຫ້

ນັ້ນ ຈຶ່ງເອົານາງຍົມມະພາລາທັງນາງເອັດແຄງ ຂີ່ຊ້າງດອນ

ຈຶ່ງເອົາຂຸນສານຂີ່ທ້າຍຊ້າງຖືປະຄືຫລວງໂກວແກວ່ງເມືອຂຸນບໍ

ຣົມຈັກລົງມານັ້ນແມ່ນມື້ກາບອັນນີ້ເປັນແມ່ມື້ ໃຈ້ອັນນີ້ເປັນລູກມື້

ຈຶ່ງວາກາບໃຈ້ເພື່ອ ດັ່ງນັ້ນເປັນຕົ້ນແລ ແລະວັນອັນຂຸນບໍຣົມ

ລົງມານັ້ນວັນອາທິດ ອັນນີ້ເປັນພຣະບາວັນ ວັ່ນຈັ່ນອັນນີ້

ເປັນນາງວັນເທວີ ເປັນເມັຽພຣະອາທິດແລ ແຕ່ນັ້ນແຖນ

ຟ້າຄືນຈຶ່ງໃຫ້ແຖນຊື່ຊື່ບ່ອນຊື່ເກີໃຫ້ແກ່ຂຸນບໍຣົມວ່າ ເຈົ້າຈຶ່ງ

ໄປຕັ້ງທີ່ນານ້ອຍອ້ອຍໜູຫັ້ນກ່ອນ ແຖນຊື່ຈິ່ງຊື່ວ່າສິງບັ້ນເມືອ ໃດເຈົ້າໄປຕັ້ງຢູ່ແລ້ວ ຈັກໃຫ້ເຈົ້າມີລູກ ໆ ຊາຍຜູ່ພີ່ນັ້ນ ໃຫ້ໄປເປັນເຈົ້າແຜ່ນດິນທີ່ຖິ່ນໄມ້ທອງ ເຈົ້າຣັດສີຍັງເອົາ ຫີນ ໜ່ວຍຊື່ວ່າກ້ອນກ່າຍຟ້າໝາຍ ໄວ້ຫັ້ນແລ ຄັນເຈົ້າ ມີລູກຜູ່ພີ່ໃຫ້ໄປເປັນເຈົ້າແຜ່ນ ດິນຫັ້ນເຖີນ ແຖນຊື່ຫັ້ນແລ້ວ ເລົາຊື່ໄປທີ່ ເມືອງບວນ ທີ່ເມືອງໂບທີ່ຍາຊາວໃຕ້ ທີ່ເມືອງ ພວນ ທີ່ເມືອງສາໃບ ໆ ແຫ່ງ ໆ ຫັ້ນແຖນຟ້າຄືນຈິ່ງໃຫ້ແຖນ ຊື່ຊື່ບ່ອນຊື່ທີ່ ທັງມວນ ແລ້ວແຖນຟ້າຄືນຈິ່ງໃຫ້ນັກຂັດຕະອຶກ ທັງມວນ ເປັນຕົ້ນວ່າ ອາທິດ ຈັນ ອັງຄານ ພຸດ ພະຫັດ ສຸກ ເສົາ ຣາຫູເອົ້າ ໃຍຣາສີກັບປູ່ກ່ອນ ຈິ່ງໃຫ້ຂຸນບໍຣົມໄບ່ງ ຄ້ອງປ່າວພົນທັງຫລາຍໃຫ້ແຕ່ງດາຂຸນບໍຣົມຈິ່ງເປົ່າຫອຍສັງ ເຖົ້າເບີເຖົ້າໄລ່ ຈິ່ງລົງກ່ອນຫນ້າຫັ້ນແລ ແຕ່ນັ້ນຂຸນບໍຣົມຈິ່ງ ເອົາຣິພົນລົງມາຮອດ ທີ່ນານ້ອຍອ້ອຍໜູ ພໍຍາມຈະໄກ້ຮຸ່ງ ແຖນແຕ່ງຈິ່ງໃຫ້ໄວ້ລັຄນາເມືອງ ທີ່ສິງຣາສີຫັ້ນ ອັນນີ້ ເປັນ ຊາຕາເມືອງອັນກ່ອນແລເຈົ້າຣັດສີ ໄລ່ຊາຕາໄວ້ນັ້ນເປັນຊາຕາ

ແຜ່ນດິນເຫດ ໄປ່ມີຄົນມາຢູ່ມາຕັ້ງອັນແຖນ ແຕ່ງໃສ່ບໍ່ຂຸນ
ບໍຣົມມາຕັ້ງບ້ານເມືອງແລ້ວມີຄົນ ຢູ່ໃນແຜ່ນດິນແລ້ວເປັນຊາຕາ
ເມືອງຫັ້ນ ແລອັນຊື່ວ່າແຖນແຕ່ງນັ້ນ ເປັນວິສຸກັມເທວະບຸດ
ແລ ຈິ່ງມາແຕ່ງໂຮງແຕ່ງສານແຕ່ງຊູ່ສິ່ງ ຊູອັນຊູເບື້ອງໄວ້ທັງ
ເຄື່ອງເສບເຄື່ອງລຳເຄື່ອງຫລິ້ນເຄື່ອງຫົວທັງມວນແລ້ວຈິ່ງມາອະ
ທິດຖານໃຫ້ເປັນໄຟໄວ້ໃນໄມ້ ໃນຫີນ ແລ້ວຈິ່ງອະທິດຖານໃຫ້
ເປັນວັງນ້ຳຮ້ອນອັນນຶ່ງຈິ່ງມາອະທິດຖານໃຫ້ເປັນ ຮູ ລົມ ອັນ ນຶ່ງ
ແລ້ວຈິ່ງສັ່ງເທວະດາທັງຫລາຍອັນຢູ່ ພື້ນແຜ່ນດິນກໍດີຢູ່ຕົ້ນໄມ້
ແລະພູເຂົາກໍດີ ຕົນ ຢູ່ໃນບ້ານ້ອຍນ້ຳໃຫຍ່ທັງມວນກໍດີ ໃຫ້ມາ
ຮັກສາຂຸນບໍຣົມຣາຊາແລເຈົ້າຂຸນທັງຫລາຍ ອັນລົງແຕ່ເມືອງ
ຟ້າມາຫັ້ນແລແຖນແຕ່ງ ສັ່ງສອນສຸບໍຣົມແລ້ວຈິ່ງຂຶ້ນເມືອ
ຟ້າຄອບແຖນຫັ້ນແລ ຢູ່ນານໄດ້ສອງ ປີຂຸນບໍຣົມຈິ່ງມີລູກຊາຍ
ນຶ່ງດອມນາງຍົມ ມະພາລາ ຈິ່ງໃສ່ຊື່ວ່າຂຸນລໍ ແລ້ວຈິ່ງມີ
ລູກຊາຍນຶ່ງດອມນາງເອັດແຄງຈິ່ງໃສ່ຊື່ວ່າ ຂຸນລ້ານ ແລ້ວຈິ່ງ
ມີລູກດອມນາງຍົມມະພາລາຜູ້ນຶ່ງ ຊື່ວ່າຈຸສົງ ແລ້ວຈິ່ງມີ

ລູກດອນນາງເອັດແດງຊາຍນັ້ງ ໃສ່ຊື່ວ່າ ຂຸນຄຳພວງ (໑) ແລ້ວຈຶ່ງ ມີລູກດອນນາງນິນມະພາລາຊາຍນັ້ງ ຊື່ວ່າຂຸນບານ ຈຶ່ງເລົ່າ (໒) ມີລູກດອນນາງເອັດແດງຊາຍນັ້ງຊື່ວ່າຂຸນເຈັດເຈືອງ ຈຶ່ງເລົ່າມີລູກດອນ ນາງນິນມະພາລາຊາຍນັ້ງ ຊື່ວ່າຂຸນເຈັດ ຈຽງເລ ແຕ່ຂຸນບໍຣົມ ມາຕັ້ງເມືອງໄດ້ ໙ ປີມີລູກ ໗ ຊາຍ ເທົ່າວ່າບໍ່ມີຂ້ອຍມີໄພ່ ບໍ່ມີເສນາມົນຕີ ບໍ່ມີຊ້າງມ້າເຂົ້າ ຂອງສິນບັດອັນໃດເອົາແຕ່ເມືອງຟ້າມາຈຶ່ງມີແລ.

ແຕ່ນັ້ນ ຂຸນບໍຣົມຣາຊາກັບທັງນາງ ນິນມະພາລາກັບທັງນາງເອັດແດງ ຈຶ່ງຄາງທຸກຄາງຍາກ ຈຶ່ງໃຫ້ຂຸນສານທັງເຖົ້າເບີທັງຍ່າງ່ານເມືອໄຫວ້ແຖນຟ້າຄືງທັ້ນແລ ອັນນຶ່ງວົງໄມ້ເຄືອເຂົາກາດມາ ເປັນໃບຫນອງລູວາຫັ້ນເປັນອັນຣົມເປັນ ບັກແດດບໍ່ເຫັນກະເວັນບໍ່ສ່ອງໄດ້ ອັນນຶ່ງເຄືອຫມາກນ້ຳເຕົ້າປຸງສອງຫນ່ວຍ ກໍເມືອກ້ຽວເຄືອໄຮຫລວງ ທີທົວຫນອງຫັ້ນ ເຮົ່າຣິກເຮົ່າມືດບໍ່ເຫັນຟ້າເຫັນຝົນ ຫນາວບັກປູ່ເມືອງລຸ່ມບໍ່ໄດ້ຈັກ

---

(໑) ລາງສບັບວ່າໃສຜົງ (໒) ລາງສບັບວ່າ ງົວອິນ

ໃຫ້ຕູ ຂ້ອຍເຮັດສິ່ງໃດເຈົ້າທັງຫລາຍເຫົ້າໄຫວ້ ສິ່ງນັ້ນເຖິງຂຸນ
ແລະເຂົາທັງຫລາຍ ກໍເມືອໄຫວ້ຕາມຂຸນບໍຣິມຫາກໃຊ້ຫັ້ນແລ
ຄັນວ່າເມືອຮອດເມືອງຟ້າແລ້ວ ເຂົາກໍໄຫວ້ແຖນຟ້າຄືນຊູ່ສິ່ງ
ຊູ່ອັນ ຕາມຄວາມຂຸນບໍຣິມສັ່ງຊູ່ອັນແລ ແຖນຫລວງຈິ່ງວ່າດັ່ງນີ້
ຖ້ອຍຄໍາອັນເຈົ້າທັງຫລາຍເລົ່ານີ້ເຮົາກໍຮູ້ກໍແຈ້ງຊູ່ອັນແລ ທໍ່ວ່າ
ສູລູກໄປຕັ້ງເມືອງປູ່ເມືອງລຸ່ມບໍ່ເຖິງ ໗ ປີ ໑໐ ປີ ເທື່ອແລ ຈັກ
ໃຫ້ໄປປ້ຳໄມ້ຟັນໄມ້ ໄຫຍ່ເສັງສິ່ງນັ້ນກໍບໍ່ດີແລ ບັດນີ້ກູກໍໃຫ້ແຖນ
ທັງຫລາຍ ໄປຊ່ອຍແຕ່ງບ້ານແປງເມືອງຊູ່ອັນນີ້ແລ ທັງເຖົ້າ
ເຍີແມ່ຍ່າງ່ານສອງເຂືອນີ້ ໃຫ້ໄປປ້ຳໄມ້ເຄືອເຂົາກາດເຖິ້ນ ເຖົ້າ
ໄລ່ແມ່ມົດບົບ ສອງຂານີ້ໃຫ້ໄປປ້ຳໄມ້ໄຮຫລວງ ອັນເຄືອຫມາກ
ນ້ຳກ້ຽວນັ້ນເສັງເຖິ້ນ ແຖນສິວໃຫ້ໄປສິວນ້ຳເຕົ້າປຸງຫນ່ວຍພີ້ນັ້ນ
ໃຫ້ຄົນຜູ້ຍິງຜູ້ຊາຍ ຊ້າງເຖິກຊ້າງແມ່ ມ້າເຖິກມ້າແມ່ເຂົ້າຂອງ
ເງິນຄຳແກ້ວແຫວນ ຜ້າຜ່ອນທ່ອນຈັບຣຳເຜ ແຮຈີນຫາກ
ອອກໃນນ້ຳເຕົ້າປຸງຫັ້ນຊູ່ເຍື້ອງຊູ່ອັນແລ ແຖນຊີໃຫ້ໄປຊີນ້ຳເຕົ້າ
ປຸງຫນ່ວຍນ້ອງນັ້ນໃຫ້ຄົນຜູ້ຍິງຜູ້ຊາຍ ທັງຄວາຍທັງງົວ ທັງ

ແບ້ກັງເບືອງທັງໝູໝາເປັດໄກ່ ແລະອາຫານອັນເປັນຂອງ
ລ້ຽງຂອງດູ ທັງຕົ້ນສົ້ມຕົ້ນຫວານບ້າສົ້ມ ບ້າເຄັມ ທັງຕົ້ນພ້າວ
ຕົ້ນຕານກ້ວຍອ້ອຍ ທັງພິກຂີງຜັກຫອມຜັກຫຽມຜັກບົ່ວໝາກ
ໄມ້ທັງມວນອັນເປັນຂອງຄວນຄ້ຽວຄວນກິນທັງມວນ ຫາກຈັກ
ອອກມານຳໝາກນ້ຳເຕົ້າປຸງໜ່ວຍນ້ອງຫັ້ນແລ ແຖນຟ້າຄືນ
ຈຶງໃຫ້ແຖນເຖືອກ ໄປໄຂປະຕູຄຳປະຕູເງິນປະຕູທອງປະຕູເຫລັກ
ໃຫ້ແຖນທັງຫລາຍລົງມາແຕ່ງແປງໃຫ້ແກ່ຂຸນບໍລົມ ຊູ່ອັນຊຸ
ສິ່ງຊຸ່ເບືອງຫັ້ນແລ ແຕ່ນັ້ນແຖນສີວກໍມາສີວ ນ້ຳເຕົ້າປຸງໜ່ວຍ
ພີນັ້ນ ແຖນຊີກໍມາຊີນ້ຳເຕົ້າປຸງໜ່ວຍນ້ອງນັ້ນ ເຂົາທັງມວນ
ກໍວ່າຄົນຜູ້ຍິງຜູ້ຊາຍຊ້າງມ້າງົວຄວາຍ ກໍໄຫລອອກຈາກນ້ຳ
ເຕົ້າປຸງສອງໜ່ວຍນີ້ຫັ້ນແລ ແຕ່ນັ້ນຄົນທັງຫລາຍຈຶງໄດ້ຊື
ວ່າລາວເກົາ ກໍເພື່ອຄວາມອອກຈາກນ້ຳເຕົ້າປຸງສອງເຕົ້ານັ້ນ
ແລະແຕ່ນັ້ນແຖນສີວແຖນຊີຈຶງວ່າແກ່ເຖົ້າເບີເຖົ້າໄລ່ວ່າ ຄັນວ່າ
ເຂືອເມືອເມືອງຟ້າແລ້ວເຂືອຈິ່ງປ້າເຄືອເຂົາ ທັງຕົ້ນໄຮຫລວງ
ທັງຜານ້ຳເຕົ້າປຸງເສັບເຖິ້ນ ສູປ່າເມືອຫາຕຸທີເມືອງຟ້າພຸ້ນ

ເຖິງ ຕູກໍບໍ່ຫຽວມາຫາສູແລ ຄັນສູທັງສີຕາຍແລ້ວ ຈິ່ງໃຫ້ຄົນ
ເມືອງລຸ່ມເວນຫຸງສູເຖິງ ຕູກໍສັ່ງຂຸນບໍຣົມໄວ້ນີ້ ຄັນວ່າຄົນເມືອງ
ລຸ່ມຈັກກິນອັນໃດກໍດີ ຄັນວ່າມາເປີສູທັງສີຈິ່ງແລ່ນມາກິນກ່ອນ
ເຖິງແຖນທັງສອງສັ່ງຊຸສິ່ງຊູ່ອັນແລ້ວ ກໍຂຶ້ນເມືອຄອບແຖນຟ້າ
ຄືນຫັ້ນແລະແຕ່ນັ້ນເຂົາກໍປ້ຳເຄືອເຂົາກາດ ກັບຕົ້ນໄມ້ໄຮຫລວງ
ເສັຍຫັ້ນແລ ຜ່າໝ້າເຕົ້າປຸງແລຫນ່ວຍ ໃຫ້ເປັນລອງສ່ຽງເສັຍ
ທີແຄມຫນອງຄູວາຫັ້ນແລະບັດນີ້ ເປືອງນ້ຳເຕົ້າປຸງກໍຍັງ
ກາບເປັນຫີນຢູ່ຫັ້ນແລ ແຕ່ນັ້ນບ້ານເມືອງແຫ່ງຂຸນບໍຣົມທີ່ນາ
ນ້ອຍອ້ອຍຫນູກໍຮຸ່ງແຈ້ງດີນັກແລເຖົ້າເຍີເຖົ້າໄລແມ່ຍ່າງ່າມແມ
ມົດນັ້ນກໍຕາຍໄປເປັນຜີເສື້ອ ເມືອງຕາຍຕໍ່ເທົ່າບັດນີ້ແລແຕ່ນັ້ນ
ໄປພາຍຫນ້າຂຸນບໍຣົມຈິ່ງໃສ່ໄຮ່ໃສ່ນາ ປູກແປງທ້າວພຣະຍາ
ຫັ້ນແລຂຸນສຣີທມມະຣາຊ ໃຫ້ເປັນແສນເມືອງ ແຕ່ງຮັກສາໄພ່
ໄທທັງມວນ ຕາງຂຸນບໍຣົມ ຂຸນແສງໃຫ້ເປັນຫມື່ນຫລວງກາງ
ເມືອງຮັກສາຄົນທັງມວນ ຂຸນສານໃຫ້ແຕ່ງເຄືອງເລີກ ເຄືອງ
ວຽກທັງມວນ ເບື້ອງຂວາຂຸນພີ ໃຫ້ຮັກສາເຄືອງເສິກເຄືອງ

ວຽກທັງມວນ ກ້າຊ້າຍຂຸນສານ ຜູ້ຊື່ທ້າງຊ້າງດອນຂູນບໍຣິມ
ໃຫ້ຮັກສາຣາຊວັດກ້າຫນ້າທັງ ໃດ່ຖ້ອຍສວນຄວາມທັງມວນຊູ່
ອັນຂຸນອິນໃຫ້ຮັກສາຣາຊວັດກ້າຫລັງ ທັງໄດ່ຖ້ອຍສວນຄວາມ
ດອນຂຸນສານ ຂາທັງສອງນີ້ແຕ່ງພິຈາຣະນາຕາງຂຸນບໍຣິມ
ໃຫ້ຊອບທັມ ຂຸນທັມມະຣາຊ ອັນເປັນແສນເມືອງນັ້ນ
ແຕ່ງຮັກສາຊູ່ສິ່ງຊູ່ເບື້ອງ ບໍ່ໃຫ້ເຄືອງໃຈຂຸນບໍຣິມສັກ ເບື້ອງ
ແລ ແຕ່ນັ້ນມາ ຈິ່ງຕັ້ງໃຫ້ເປັນຫົວເສິກຫົວ ວຽກເພື່ອອັນແລ
ບໍດນີ້ ເມືອພາຍຫນ້າຂຸນບໍຣິມຈິ່ງໃຫ້ຫາບິວຫານາງອັນອອກ
ທີ່ນ້ຳເຕົ້າປຸງຫນ່ວຍພີ່ນັ້ນ ຜູ້ມີລັກສນະກິຈອັນດີອັນງາມນັ້ນ
ມາເປັນລູກສະໃພ້ທັງ ໗ ຄົນນັ້ນແລ ແລ້ວຈິ່ງມາແຕ່ງເອົາຄົນ
ຜູ້ເປັນເຈົ້າເປັນຂຸນ ແບ່ງປັນລູກຊາຍທັງ ໗ ນັ້ນ ຈິ່ງເລົາ
ແຕ່ງເອົາໃພ່ເອົາຄົນ ຜູ້ຄວນອັນເປັນໃພ່ໃຫ້ແກ່ເຂົາ ເຈົ້າ ຊູ່ຄົນ
ນັ້ນແລ ຈິ່ງເອົາໄມ້ເຄືອເຂົາກາດທັງ ໄມ້ໄຣຫລວງຕົ້ນໃຫຍ່ນີ້ມາ
ແປງດ້າງສານ ງ່າໃຫ້ແກ່ລູກຊາຍທັງ ໗ ຄົນແລຄົນແລສານ
ດວງຫນັ້ນແລ ແຕ່ນັ້ນ ຊ້າງງາກ້ຽວງາ ກອດອັນລົງມາບຳນັ້ນກໍ່

ດາຍເສັງ ຈຶ່ງເອົາງາມາເຮືອ (ເລືອຍ) ເປັນ ກ ທ່ອນໃຫ້ແກ່
ລູກທັງກ ຄົນເຄື່ອງຫອກເຄື່ອງດາບ ເຄື່ອງແກ້ວເຄື່ອງແຫວນ
ທັງມະນອັນແຖນຟ້າຄືນໃຫ້ແຕ່ເມືອງຟ້າມານັ້ນ ກໍມາແຈກ
ມາປັນໃຫ້ແກ່ລູກຊາຍທັງ ກ ນັ້ນແລ ແລ້ວຈຶ່ງຫາມື້ດີວັນດີ
ນັກຂັດຕະ ອືນ ທັງມວນ ອັນຢູ່ໃນ ໑໒ ຣາສີອັນເປັນອຸຕະມະຣາ
ສີອັນປະເສີດຊູ່ດ່ວ ແລ້ວຈຶ່ງເອົາລູກຊາຍທັງ ກ ມາໄວ້ຊ້ອງ
ຫນ້າຕົນກັບເສນາອຳມາດທັງຫລາຍຕາມຮີດຄອງດັ່ງແຖນຟ້າ
ຄືນແຕ່ງລົງມາໃນເມືອງລຸ່ມນັ້ນແລ ຈຶ່ງມາຣາຊາພິເສກເອົານ້ຳ
ໃສ່ໂຕຄຳອັນໃຫຍ່ ຈຶ່ງເອົາມືລູກຊາຍທັງ ກ ຄົນທັງລູກສະ
ໃພ້ທັງ ກ ຄົນ ມາສົບໃສ່ໂຕຄຳ ແລ້ວແລໃຫ້ພຣະພອນອັນວິ
ເສດວ່າ ເຈົ້າທັງຫລາຍໄປກິນບ້ານ ກິນເມືອງຕາມຄວາມແຖນ
ຊີ້ຊີ້ບ່ອນຊີ້ໃຫ້ແຕ່ເມືອງຟ້າໃຫ້ນັ້ນ ທັງຄວາມກູພໍ່ຈຶ່ງບອກກາວ
ແກ່ສູທັງຫລາຍບັດນີ້ແລ ໄປກິນບ້ານກິນເມືອງປົກຂ້ອຍຫອມ
ໄພ່ ຢ່າເຮັດໃຈຮ້າຍໃຈຄຽດ ຢ່າເຮັດໃຈສັ້ນໃຈຫລອນ ຢ່າມັກ
ຕີມັກດ່ຽນທ່ານ ຢ່າມັກຂ້າມັກຟັນ ກັບກະທຳຕາມໃຈຕົນ ໃຫ້

ກ່ອນ ອ່ານດູຊະເນື່ອງກອນ ຮູ້ແຈ້ງແລ້ວຈຶ່ງກະທຳ ອັນນຶ່ງນັ້ນຜູ້ຍິງ ຜິດສິງໃດກໍດີຢ່າຂ້າຢ່າຟັນເສັຽ ແຖນຟ້າຄືນສັງກູພໍ່ສີງນັ້ນແຕ່ ເມືອງຟ້າຟຸ້ນ ວ່າຢ່າຂ້າຢ່າຟັນຜູ້ຍິງເສັຽເຫດວ່າຜູ້ຍິງນີ້ ແຕ່ ປະຖົມກັບພຸ້ນເຂົາຫາກເປັນເຄົ້າເປັນເດີມມາ ທ້າວພຣະຍາ ຜູ້ໃດຍັງຂ້າຜູ້ຍິງ ບ່ອນບໍ່ຫມັ້ນບໍ່ຍືນ ບ້ານເມືອງອັນນັ້ນບອນເສົ້າ ສູນເສັຽ ແຖນຟ້າຄືນສັ່ງກູພໍ່ສີງນີ້ດີຫລີດາຍ ສູເຈົ້າທັງຫລາຍ ໄປກິນບ້ານກິນເມືອງຕາມຄວາມກູພໍ່ ບຸນໃຜມີຫາກໄດ້ທີກ້ວາງ ທີຂວາງຫັ້ນແລ ຢ່າຂີ້ຊ້າງຕິກນາພາແພນຕິກທັງກັບ ເມືອງ ອ້າຍໄວ້ແກ່ອ້າຍເມືອງນ້ອງໄວ້ແກ່ນ້ອງ ລູກສືບລູກ ຫລານສືບ ຫລານ ເຫລນສືບເຫລນຫມັ້ນໃຊ້ຖາມຂ່າວກລ່າວເຊີງກັບຜູ້ໃດ ໄດ້ເຄືອງຫມາກຂອງຕ່າງໃນບ້ານໃນເມືອງ ໃຫ້ມາລີງນາຖວາຍ ແກ່ກັບຜູ້ໃດຟັງຄຳກູພໍ່ດັ່ງນີ້ ທັງລູກຫລານເຫລນອັນໄດ້ຮ້ອຍ ຊີວພັນຊີວແສນຊີວໃຫ້ຫມັ້ນໃຫ້ ຍືນເຖີນ ຜູ້ໃດບໍ່ຟັງຄຳກູພໍ່ຊີວ ຢ່າຣີປີຢ່າກ້ວາງ ຜູ້ໃດຟັງຄວາມກູໃຫ້ຫມັ້ນໃຫ້ ຍືນເຖີນອັນນຶ່ງ ຂຸນບໍ່ຣົມຈຶ່ງວ່າລູກໃພ້ກູ ກູ ຄົນນີ້ ນອນໃຫ້ນອນລຸນຜົວດືນກ່ອນ

ຜົວ ໃຫ້ຄຶດຫາວຽກການຜົວອັນ ຈັກປຸບຕາງຜົວໃຫ້ ຄຶດຫາອັນ
ຈັກຕ່ຳຫູກເຂັນຝ້າຍ ໃຫ້ຄຶດຫາອັນຈັກລ້ຽງ ຂ້າ ລ້ຽງໄທໃຫ້ຄຶດ
ຫາອັນຈັກກະທຳໄຮ່ນາທຳກິນ ທຳສວນ ອັນນຶ່ງໄຟໃນເຮືອນຢ່າ
ເອົາໄປ ນອກເຮືອນ ໄຟນອກເຮືອນຢ່າເອົາໄປໃນເຮືອນຄືວ່າຜູ້ໃດ
ມາວ່າຮ້າຍຜູ້ໃດມາສ້ມາ ສິນ ກໍດີ ໃຫ້ພິຈາຣະນາດູກ່ອນຄວນ
ບອກຄວນເລົ້າຕໍ່ຜົວ ກໍຈຶ່ງເລົາ ບໍ່ຄວນເລົ້າກໍ່ຢ່າເລົ້າຄວນໃຫ້
ແລ້ວແກ່ຕົນ ອັນນຶ່ງໃຫ້ເອົາຜູ້ບົ່ງສິ ຄົນ ຜູ້ຮູ້ດີສາມຄົນສອງຄົນກໍ
ດີມາໄວ້ຜ່າງໄວ້ໃກ້ຈັກກະທຳອັນໃດໃຫ້ອືໃຫ້ ຍິນເຂົາທັງ ສີຄົນ
ນັ້ນດູກ່ອນ ແມ່ນແລ້ວຈຶ່ງກະທຳ ອັນນຶ່ງຕົວລູກໄພ້ກູທັງ ໆ
ຄົນນີ້ສູເຈົ້າຢ່າຂ້າ ສັດແມ່ນເພີນຈຳໃຫ້ຂ້າກໍຢ່າ ແມ່ນຂ້າຄົນກໍ
ດີຢ່າພ້ອມຢ່າຈ່າເພີ່ນຂ້າ ອັນນຶ່ງຢ່າລັກຂອງຜົວຂອງທ່ານຜູ້
ອື່ນກໍດີ ອັນນຶ່ງຢ່າຫລິ້ນຊູ້ກັບຜົວແມ່ນວ່າຝັນກາງວັນກາງຄືນ
ກໍດີ ກໍຢ່າໄດ້ຍິນດີດອມນັບຜູ້ນັ້ນເຖິງ ອັນນຶ່ງຢ່າລ່າຍຖ້ອຍ
ລ່າຍຄຳ ອັນມີຈິງວ່າມີບໍ່ມີຢ່າວ່າມີ ອັນນຶ່ງຢ່າກິນເຫລົ້າກິນ
ຢາໃຫ້ເມົາບ່ອນເສັຽສົມບັດປັນຍາດີຫລີ ດາຍ ອັນນຶ່ງຍາມໄຮ່

ໄຖບາໃຫ້ບອກໃຫ້ເຕືອນ ຄົນ·ທັງຫລາຍ ອັນນຶ່ງເຖິງຍາມຫລິ້ນມະໂຫຣະສົບ ກໃຫ້ບອກໃຫ້ເຕືອນຄົນທັງຫລາງຫລິ້ນໃຫ້ມ່ວນງັນ ເຖິງຍາມກະທຳກໃຫ້ບອກໃຫ້ເຕືອນຄົນທັງຫລາຍໃຫ້ພ້ອມກັນເຮັດເພື່ອສັບພັນຍູເຈົ້າ ເກີດມາເປັນສັບພັນຍູເປັນພຣະແລ້ວ ຍັງ ໄປ່ ໂຜດ ສັດ ທັງຫລາຍໃນເມືອງໄທຍ໌ໄປ່ທັນມາເຖິງເຮົາ ດີຫລີດາຍ ກູພໍ່ກໍສອນເຈົ້າທັງຫລາຍ ຕາມປູ່ສູເຈົ້າແຖນຟ້າ ຄືນສັ່ງສອນກູແຕ່ເມືອງຟ້າມາກໍສິ່ງດຽວນີ້ແລຈິ່ງໃຫ້ ເອົາ ມືເອົາ ເຈົ້າອອກຈາກໄຕຄຳອັນໃສ່ບ້ານບັ້ນຫັ້ນແລ ຈິ່ງໃຫ້ເສນາອາມາດທັງຫລາຍ ຫົດສົງ ສູ່ເຂົ້າສູ່ຂວັນອຸສາພິເສກແລ້ວຂະບໍຣິນຣາຊາທີຣາຊທັງນາງຍົມມະພາລາ ກັບທັງນາງເອັດແຄງແລະເສນາອຳມາດພ້ອມກັນ ຈິ່ງໃຫ້ຂຸນຂຽນດາບແກ້ວດາບຄຳ ໃສ່ຊື່ຂຸນລໍ ໃຫ້ເມືອກິນເມືອງຊວາ ລ້ານ ຊ້າງຊຽງດົງຊຽງທອງ ອັນທີ່ເຈົ້າຣັດສີກົດຫມາຍບ່ອນທີ່ໄວ້ຫັ້ນແລ ຈິ່ງຂຽນດາບຄຳໃສ່ຊື່ວ່າຂຸນລ້ານ ໃຫ້ເມືອກິນເມືອງຫົວອງແຕ່ບ້າຫ້າຍຊາຍຄຳວິດທີຣາດພຸ້ນ (໑) ຈິ່ງມາຂຽນດາບຄຳອັນນຶ່ງໃຫ້

---

(໑) ວິເທຫະຣາຊພຸ້ນ ໆ

ແກ່ຂຸນສິງໃຫ້ເມືອກິນເມືອງຈຸລນີພຣົມທັດຣາດ ຈິ່ງຂຽນດາບຄຳອັນນຶ່ງໃຫ້ແກ່ຂຸນຄຳພວງ ໃຫ້ເມືອກິນເມືອງກຸມການໂຍນົກຣາຊລະພູນຊຽງໃຫມ່ ຈິ່ງຂຽນດາບຄຳອັນນຶ່ງໃຫ້ຂຸນອິນໃຫ້ເມືອກິນເມືອງລະໂວ້ໂຍທິຍາ ຈິ່ງຂຽນດາບຄຳອັນນຶ່ງໃຫ້ແກ່ຂຸນເຈັດເຈືອງ ໃຫ້ເມືອກິນເມືອງພວນດາວັນອອກ ຈິ່ງຂຽນດາບຄຳອັນນຶ່ງໃຫ້ແກ່ຂຸນເຈັດຈຽງໃຫ້ເມືອກິນເມືອງມ່ວນຫັ້ນແລ

ຂຸນບໍຣົມຣາຊາທິຣາດປູກລູກຊາງ ໃຫ້ກິນບ້ານກິນເມືອງຕາມຄວາມແຖນຟ້າຄືນແຖນຊີ້ ແຖນແຕ່ງຫັ້ນແລ ແກ່ນັ້ນເລົາຊ້ຳສັ່ງສອນວ່າດັ່ງນີ້ ຄັນເຈົ້າທັງຫລາຍຈັກໃຫ້ມີຮູບມີໂສມອັນດີງາມດັ່ງນັ້ນ ໃຫ້ຮັກສາສິນຫ້າ ສິນ ໆ ໃຫ້ມີແບ່ປັນຍາອັນຈັກໃຫ້ໄປນຳກິນມີທີ່ໃຫ້ທານ ພໍ່ແລ້ວເຈົ້າທັງຫລາຍໄປກິນບ້ານກິນເມືອງດີແລ ມີສິນບັດເຂົ້າຂອງໃຫ້ແຈກເປັນ ໆ ສ່ວນພໍ່ເນີ ສ່ວນນຶ່ງໃຫ້ໃສ່ເລັ້ນສາງໄວ້ຂນັບບ້ານເມືອງ ສ່ວນນຶ່ງໃຫ້ບຸງໃຫ້ກິນພໍ່ເນີສ່ວນນຶ່ງ ໃຫ້ທານແກ່ລູກແກ່ເມັຽຂ້ອຍ

ຄົນທັງຫລາຍປູງປູ່ໄຊ້ຊອງຕົນສ່ວນນຶ່ງ ທານແກ່ພຣະສົງຄະ ເຈົ້າຜີບໍ່ມີໃຫ້ທານແກ່ເຈົ້າຣັດສີແກ່ ຄົນອັນມີສິນພໍ່ເນີ ສ່ວນນຶ່ງ ໃຫ້ທານແກ່ເສນາອາມາດ ຜູ້ຈັກອາສາໃຫ້ແລ້ວກົດ ແຫ່ງຕົນສ່ວນນຶ່ງໄວ້ຕອບແຂກອັນຈັກມາ ໄຫວ້ມາບົບຕົນຂອງ ເຂົາທີ່ໄດ້ໃຫ້ຕອບ ຂອງ ທີ່ ຂອງ ເຂົາ ນັ້ນ ເຖິງສ່ວນນຶ່ງໃຫ້ທານ ແກ່ຍາຈົກຄົນຂີ້ຝຸ່ງ ຫູໜວກ ຕາບອດຄົນທຸກໄຮ້ຂືນໃຈນັ້ນ ພໍ່ ເນີ ຂອງທັງຫລາຍຝູງນີ້ ກໍຫາກຈັກໄປບຳລຸງ ທັງຫລາຍຊູ່ ທີ່ພໍ່ ເລົ່າອັນນີ້ຄຳປຸ່ສູເຈົ້າແຖນຟ້າຄືນຫາກ ໄດ້ສັ່ງ ສອນ ກູ ພໍ່ ແລ ຂຸນບໍຣົມຣາຊາທິຣາດ ສັ່ງສອນລູກຊາຍລູກລະໃພ້ທັງ ຄົນກໍແລ້ວ ເທົ່ານີ້ກ່ອນແລ.

ຂຸນລໍ ລົງມາຕັ້ງ ເມືອງຊວາ (ຫລວງພຣະບາງ)

ນັບແຕ່ຂຸນບໍຣົມລົງມາຕັ້ງເມືອງລຸ່ມໄດ້ ໒໕ ປີຂຸນລໍໃຫຍ່ ມາໄດ້ ໑໓ ປີ ກໍລ່ອງມາຕັ້ງເມືອງຊວາລ້ານຊ້າງ ທີ່ຊຽງດົງຊຽງ ທອງ ອັນເຈົ້າຣັດສີແຮກຫມາຍໃສ່ຫລັກຄຳຫລັກເງິນໄວ້ ທີ່

ກ້ອນກ່າຍຟ້າຫັ້ນແລຍາມນັ້ນ ຂ້າກັບຣາງປູ່ຫັ້ນຂຸນລໍຈຶ່ງມາເລ

ແພ້ ໄລ່ເອົາເມືອພູເລົາພູຄາຈິ່ງເປັນຂ້າເກົ່ານັ້ນນີ້ແລ ອັນນັ້ນ
ແມ່ນຂ້າກັບຣາງແລ.

ຍັງມີຄົນຊູນບຶງ ແມ່ເອົານັ້ນຊື່ວ່ານາງກາງຣີ ນີເສືອ ພ
ເອົານັ້ນເປັນຄົນມາເອົາກັນເປັນຜົວເມັຽຈຶ່ງມີລູກ ເອົາໃສ່ລູກພ
ພີ່ນັ້ນ ຊື່ຂຸນເຄັດ ຜູ່ນ້ອງວ່າຂຸນຄານເອົາຢາກມາຕັ້ງທີ່ຊຽງ
ດົງຊຽງນະອົງບຸນເອົານ້ອຍມາຕັ້ງບໍ່ໄດ້ ເອົາຈຶ່ງໄປຕັ້ງທີ່ຊຽງ
ອັນເຮົາວ່າຂຶງນວກນັ້ນນີ້ແລ ບ່ອນຫັ້ນເປັນບ້ານເມືອງເອົາ ຂຸນ
ລໍຈຶ່ງໄປເລວເອົາ ແຕ່ນັ້ນເອົາກໍເອົາຣິບພົນມາຮອດທ້ານຂັ້ນ
ຫັ້ນຂຸນລໍກໍໄປເລວໄດ້ ຈິ່ງກັບຂຸນລໍກໍເລົາແພ້ໄລໄປ ກໍໄດ້ຂຸນ
ເຄັດຂຸນຄານທີ່ຊຽງງົວດທັ້ງພໍ່ທັ້ງລູກ ເອົາໄປຈົມນ້ຳເສັ່ງທີ່ດອນ
ສີ່ງຫັ້ນແລ ເຊື້ອແນວຂຸນຄານກໍພ່າຍໜີ ໄປລີ້ຊ່ອນປູ່ຫັ້ນແລ
ແຕ່ນັ້ນເຈົ້າຂຸນລໍກໍຄືນມາຮອດ ຊຽງດົງຊຽງທອງ ແລ້ວຄົນທັ້ງ
ຫລາຍຈຶ່ງອາຊາພິເສກໃຫ້ ເປັນເຈົ້າແຜ່ນດິນຫັ້ນແລ ເອົາທັ້ງ

ຫລາຍ ຈຶ່ງມາແປງໂຮງບ່ອນເຈົ້າຣັດສີ ເອົາກ້ອນຫີນກ່າຍຟ້າ
ໝາຍໄວ້ຫັ້ນແລ ຈຶ່ງຣາທນາເຈົ້າຂຸນລໍເມືອງບັ່ງແຜ່ນເງິນ
ແຜ່ນຄຳເປັນເຈົ້າແຜ່ນດິນເມືອງສຣີສັດຕນາຄນຫຸດ ອຸດຕະມະຣາ
ຊທານີ ເອົາກ້ອນຫມື່ນຫລວງເທົ້າສິບ ໂຮບເປັນທາງນາກເອົາ
ສິບຄານແລະນ້ຳຂອງກ້າເໜືອເປັນຫົວນາກ ຈຶ່ງໄດ້ຊື່ວ່າ
ເມືອງສຣີສັດຕນາກ ເພື່ອດັ່ງນັ້ນແລ ອັນຊື່ວ່າເມືອງລ້ານຊ້າງ
ນີ້ເປືອງເໜືອເອົາພູຊ້າງນ້ອຍເປັນນິມິດ ຈຶ່ງຮຽກຊື່ວ່າເມືອງ
ລ້ານຊ້າງເພື່ອອັ້ນແລ ອັນນຶ່ງເຈົ້ຣັດສີຂຽນຫນັງສືໃສ່ໄວ້ໃນກ້ອນ
ກ່າຍຟ້າ ຫັ້ນທບ່ອນນຶ່ງ ອັນຫມາຍບ່ອນຊຽງທອງນັ້ນໄວ້ໃຫ້ຜູ້
ໃດຈັກເປັນທ້າວພະຍາໃນທີ່ນີ້ໃຫ້ມີສິນ ໕ ສິນ ໘ ເທດເພື່ອສັນ
ພັນບູເຈົ້າຍັງຈັກມາໂຜດສັດທັງ ຫລາຍ ຮອດບ້ານເມືອງ
ອັນນີ້ ດີຫລືດາຍ ຜູ້ໃດຈັກເປັນເຈົ້າ ໃນເມືອງອັນນີ້ ຈຶ່ງ
ໃຫ້ທານ ແກ່ສັດທັງຫລາຍທຸກວັນ ຢ່າໃຫ້ຂາດສັກວັນ
ເຖິງ ພາຍຫນ້າພຸ້ນ ຄັນສາສນາພຣະພຸທເຈົ້ານາຮອດ ມາ
ເຖິງໃນບ້ານ ໃນເມືອງອັນນີ້ ເລົ່າເຮັ່ງໃຫ້ທານແກ່ພຣະພຸທເຈົ້າ

ພຣະທັມມະເຈົ້າ ພຣະສັງຄະເຈົ້າ ໃຫ້ເຊື່ອໃສໃນຄຸນແກ້ວ ສາມປະການ ເຫດວ່າລາສບາເປັນເຈົ້າແຜ່ນດິນ ນີ ປີ ຊີວ ຈ້າແຜ່ນດິນກູຊື້ເຈ້ ແຜ່ນດິນເຂົາຈຶ່ງເອົາຍາຫລວງໂງ່ນມາເປັນ ເຈົ້າແຜ່ນດິນ ມີລູກ ໕ ຄົນຜູ່ຍິງ ໔ ຄົນ ລູກ ໕ ຄົນນີ້ເຮົາບໍ່ຈາ ກ່ອນແລ ເຮົາທໍ່ຈັກຈານູ້ກົບເມືອງແທນຫລວງໂງ່ນແລ.

ທ້າວຟ້າງຸ່ມ
ຖືກຂັບຫນີຈາກເມືອງ

ເຂົາຈຶ່ງເອົາ ຍາຄຳຮຽວຜູ່ເປັນລູກອ້າຍ(໑) ມາເປັນເຈົ້າ ແຜ່ນດິນແທນ ຍາຄຳຮຽວມີລູກ ໔ ຄົນ ຜູ່ຍິງສອງ ຜູ່ຊາຍ ສອງຜູ່ນ້ອງຫລ້ານັ້ນມີແຂ້ວຂອກ ປີປີ ເຫລັ້ມແຕໃນທ້ອງອອກ ມາເສນາອຳມາດທັງຫລາຍວ່າເຂັດວ່າຂວາງຈັກແພ້ບ້ານແພ້ ມາເມືອງວ່າດັ່ງນັ້ນ ເຂົາຈຶ່ງເອົາໃສ່ແພໄຫລເສັງ ເອົາຂ້ອຍ ລ້ຽງທັງມວນໃສ່ແພໄປດອມຜູ່ນຶ່ງຊື່ບາຄຸ້ມ ຜູ່ນຶ່ງຊື່ບາກິນ ຜູ່ນຶ່ງຊື່

(໑) ລາງບອນບອກວ່າ ຍາຄຳຮຽວເປັນອາວຂອງຟ້າງູ່ມ ໆ

ບາໃບ ຜູ່ນຶ່ງຊື່ບາສຽນ ຜູ່ນຶ່ງຊື່ບາຈິແຂ້ ຜູ່ນຶ່ງຊື່ບາລູ ຂ້ອຍລ້ຽງທັງຫລາຍຝູງນີ້ ທັງຂ້ອຍຍິງຂ້ອຍ ຊາຍ ທັງມວນ ໕໕ ຄົນ ໄຫລແຕ່ຊຽງດົງ ຊຽງທອງ ໄປດອມເຈົ້າ ເຂົາຫັ້ນແລ ບາງບາຄຳຮຽວຜູ່ເປັນແມ່ຈຶ່ງອຸ້ມໄປຮອດແພອັນ· ຈັກໄຫລເສັຽນັ້ນ ຈຶ່ງເອີ້ນປ່າວເທວະດາແລະພຣະຍານາກທັງ ຫລາຍວ່າ ໃຫ້ຮັກສາລູກຂ້ອຍຜູ່ນີ້ ຢ່າ ໃຫ້ ຈົບຫາຍເສັຽແດ່ ເສນາທັງຫລາຍວ່າເຂົ້າອອກແຕ່ໃນທ້ອງ ໕໑ ເຫລັ້ນເຂົາ ວ່າເປັນຄົນຮ້າຍວ່າເຂົ້າດ່າຂວາງແລໃຫ້ ໄຫລເສັຽ ຄັນວ່າບຸນລູກ ຂ້ອຍບັງມີຂໍ ຢ່າໃຫ້ລົ້ມໃຫ້ຈົມເສັຽ ໃຫ້ໄດ້ມາເປັນເຈົ້າແຜ່ນດິນ ໃນຊຽງດົງຊຽງທອງ ດ້ວຍອັນຊອບໂລກຊອບທັມຢ່າໃຫ້ໄດ້ ດ້ວຍທຸກຍາກຊ້າທາອຸບເຖີນ ແມ່ຈຶ່ງຝາກເທວະດາສິ່ງນັ້ນ ຈຶ່ງ ສັ່ງຂ້ອຍລ້ຽງທັງມວນນັ້ນວ່າ ລູກກູນີ້ວິກທີໄດໃຫ້ລູວ່າພຣະ ບາ ຢ່າໃຫ້ວ່າລູກຟ້າ ຄຳຮຽວ ແມ່ຈຶ່ງໃສ່ຊື່ສິ່ງນັ້ນແລະຂາຈຶ່ງ ໄຫລໄປ ແມ່ກໍນຳໄປສິ່ງຮອດເມືອງຂາຍຈຶ່ງຄືນແລ ແຕ່ນັ້ນ ໄຫລໄປຮອດບ້ານໃດເມືອງໃດ ເຂົາກໍໃຫ້ເຂົ້າໃຫ້ຂອງກິນຊູ່ບ້ານ ຊູ່ເມືອງຈຶ່ງໄປຮອດທິວລີ·ນຸ້ນທີ່ເມືອງນຶ່ງ ຊື່ວ່າ ຖ້ານະຫາເຖຣ

ປ່າສມັນ ເຂົາຈິ່ງມາເລົ່າຕໍ່ພຣະໆ ຈິ່ງໄປອຸ້ມເອົາອອກມາ
ຈາກແຜ່ອັງໄຫລເສັງບົ້ນເມືອກອນຕິນ ຫັ້ນແລ ບັບແຕ່ເຈົ້າ
ໄກຍ່ມາໄດ້ ໓ ປີ ໄຫລເສັງໄດ້ປີນຶ່ງ ຈິ່ງມາຮອດທ່າພຣະສະ
ມັນພຣະລັ້ງງໄວ້ສາມປີ ພຣະຍາບະຄອນຫລວງຈິ່ງເອົາເມືອ
ລ້ຽງໄດ້ ໗ ປີ ທັງມວນເປັນ ໑໔ ປີ ພຣະຍາບະຄອນຫລວງຈິ່ງ
ໃຫ້ລູກສາວໄດ້ ໒ ປີ ພຣະຍາບະຄອນຈິ່ງເອົາໝໍຫູຣາທັງມວນ
ມາດູຊາຕາແລ ບັກຂະດັດຕະຣິກເມືອງລ້ານຊ້າງ ໝໍຈິ່ງທວາຍ
ວ່າພໍ່ເຈົ້າກໍ່ແມ່ເຈົ້າກໍ່ຕາຍແລ້ວ ເຂົາຈິ່ງເອົາອາວເຈົ້າເປັນເຈົ້າ
ແຜ່ນດິນ ທີ່ຊຽງດົງຊຽງທອງເພາບແລ ພຣະຍາບະຄອນ
ຫລວງຈິ່ງວ່າເຮົາຈັກແຕ່ງ ອິພິບຄ້າລົງເມືອປູກຍັງຈັກໄດ້ເປັນ
ເຈົ້າແຜ່ນດິນ ທີ່ຊຽງດົງຊຽງທອງບໍ່ຈາ ໝໍທັງຫລາຍຈິ່ງວ່າ
ຢາວ່າໄດ້ແຕ່ຊຽງດົງຊຽງທອງດຸ້ນ ຍັງຈັກໄດ້ເມືອງໃຍ ທີ່ຍາ
ທັງເມືອງຊຽງໃຫມ່ ທັງເມືອງລື້ເມືອງເຂີນ ທັງເມືອງຈຸລນີ
ແວ່ຟາກນ້ຳແມ່ເທມາພີ້ ຕໍ່ເທົ້າເມືອງນີຮ້າບກ້ວນມີເສົາຫີນ
ສຸມເສົ້າບ້ຳເຕົ້າ ສາມແຖວ ຜຸ້ບດີກລີໝໍຫູຣາພຣະຍາເມືອງ

ນະຄອນຫລວງວ່າດັ່ງນີ້ ຫາກບໍ່ວ່າເຈົ້ານີ້ທີ່ໄດ້ຕາຍໃນຊຽງດົງຊຽງທອງ ຈັກໄດ້ຕາຍໃນເມືອງອັນນຶ່ງເບື້ອງຕະວັນຕົກ ດ້ວຍວຸທີສວັສດີແລ ຫມໍທັງຫລາຍວ່າດັ່ງນັ້ນ ແຕ່ປູ່ປີນຶ່ງ ພຣະຍານະຄອນຫລວງຈຶ່ງແຕ່ງຊ້າງເນ້າອິພົນ ໃຫ້ຈຶ່ງຣາຊາພິເສກ ໃສ່ຊື່ວ່າພຣະຍາຟ້າຫລ້າທໍຣະນີຫັ້ນແລ ຈຶ່ງມາແຕ່ງຫມໍຜູ່ຈັກພາບເສິກ ໔ ຄົນ ຈຶ່ງແຕ່ງເຄື່ອງພາບເສິກທັງມວນ ໃຫ້ຄ້ອງໄຊ ໔ ຫນ່ວຍ ແສ່ງໄຊ ໔ ຫນ່ວຍ ຈອງຂອງໄຊ ໔ ຫນ່ວຍ ທອກໄຊ ໓ ດວງ ຂວານໄຊ ໔ ດວງ ແຜນໄຊ ໔ ດວງ ຄົນອນຣັກສາເຄື່ອງໄຊ ໔໐໐ ຈຶ່ງໃຫ້ຫມໍທັງຫລາຍຫາມື້ດີຍາມດີແລ້ວກໍລົງຈາກນະຄອນຫລວງໄປຫັ້ນແລ ກັບທັງລູກຕົນຜູ້ຊື່ວາ ນາງແກ້ວກັບຍາກໍໃຫ້ໄປດອມຫັ້ນແລ

ທ້າວຟ້ ງຸ້ມຕີໄດ້ ມືອງຕ່າງໆ ຕາມຣະຍະທາງ

ເມື່ອລົງມາຮອດເມືອງ ອັນນຶ່ງຊື່ວ່າພຣົມທັດ ພຣະຍາພຣົມທັດມາຮົບຂາໄດ້ຊົນຊ້າງກັນ ແພ້ພຣະ ຍາ ພຣົມ ທັດຂ້າ

ພຣະຍາພຣົມທັດກັບຄໍຊ້າງ ຈຶ່ງແຈກເມືອງພຣົມທັດປູກຜູ້
ນຶ່ງໃຫ້ເປັນພຣະ ຍາປາກກົບ ຜູ້ນຶ່ງໃຫ້ເປັນພຣະຍາກຸບ
ຊອນ ຜູ້ນຶ່ງໃຫ້ເປັນພຣະຍາຄໍາແກງ ຜູ້ນຶ່ງໃຫ້ເປັນພຣະຍາ
ດອນແດງຜູ້ນຶ່ງໃຫ້ເປັນພຣະຍາຈັນທອນ ຜູ້ນຶ່ງໃຫ້ເປັນພຣະ
ຍາອ້າຍຜູ້ນຶ່ງໃຫ້ເປັນພຣະຍາພຣົມທັດແທນທັ້ນແລ ພຣະຍາ
ທັງຫລາຍປູງນີ້ ພຣະຍາຟ້າໃຫ້ເປັນເມືອງສ່ວຍຊ້າງ ສ່ວຍ
ມ້າ ສ່ວຍຂ້ອຍ ແລ້ວພຣະຍາຈຶ່ງເອົາຣິພົງໃບການາລົບພຣະ
ຍາແປດບໍ່ທີ່ເມືອງ ກຣະບອງທັ້ນແລ ພຣະຍາແປດບໍ່ຂີ່ຊ້າງ
ອອກຊົນບໍ່ທັນຮອດພຣະຍາຟ້າ ພຣະຍາແປດບໍ່ກໍແລ່ນໜີ
ເຂົາຈຶ່ງໄປໄລ່ເອົາໄດ້ທັງເປັນມາຈົມນ້ຳເສັຽທີ່ປາກທອກທັ້ນແລ
ພຣະຍາແປດບໍ່ຜູ້ນີ້ເປັນປູ່ ພຣະຍາແປດບໍ່ຜູ່ວ່າລູກຍິງໂຕນ
ນ້ຳຕາຍ ເອົາກ້ວານໄປຕຶກເອົາລູກແລໄດ້ພຣະທົບ ອັນເຂົາວ່າ
ພຣະແປດບໍ່ນັ້ນແລ ນັບແກ່ພຣະຍາກຣະບອງລົບຊົນຊ້າງກັບ
ພຣະຍາຟ້ານັ້ນ ມາໄວ້ ໆ ຊົ່ວ ພຣະຍາແປດບໍ່ ຈຶ່ງມາເກີ້ງ
ພຣະຍາແປດບໍ່ລົບວ່າລູກໂຕນນ້ຳຕາຍແລ ໄດ້ພຣະທົບນີ້ແລ

ພຣະຍາຟ້າຈຶ່ງໃຫ້ພຣະຍາກຣະບອງຜູ່ນ້ອງແທນຈຶ່ງຕັ້ງອາຊຍາໄວ້ວ່າໃຫ້ສ່ວຍຊ້າງຮ້ອຍນຶ່ງຂ້ອຍຮ້ອຍນຶ່ງຂ້ອຍກັບຊ້າງສອງຮ້ອຍ ໃຫ້ສ່ວຍຄຳສອງພັນ ໃຫ້ສ່ວຍລື້ວສ່ວຍແພ ສອງຮ້ອຍຮຳ ໃຫ້ສ່ວຍຂ້ອຍຍິງຂ້ອຍຊາຍສອງຮ້ອຍ ແລ້ວຈຶ່ງເອົາຣິພົນໄປຮົບພຣະຍາຈຳປາທິຣາດ ແພ້ພຣະຍາຈຳປາທິຣາດແລ້ວຂ້າຕາຍກັບຄໍຊ້າງ ພຣະຍາຟ້າຈຶ່ງໃສ່ຊື່ຜູ້ນຶ່ງ ໃຫ້ເປັນພຣະຍາຈຳປາທິຣາດແທນ ຜູ້ນຶ່ງໃຫ້ເປັ ພຣະຍາຈຳປານະຄຣ ຜູ້ນຶ່ງໃຫ້ເປັນພຣະຍາຈິມ ຜູ້ນຶ່ງໃຫ້ເປັນພຣະຍາຈາມ ຜູ້ນຶ່ງໃຫ້ເປັນພຣະຍາດອນຊັກແຄ ຜູ້ນຶ່ງໃຫ້ເປັນພຣະຍາສບັງ ຜູ້ນຶ່ງ ໃຫ້ເປັນພຣະຍາຊຽງ ຜູ້ນຶ່ງໃຫ້ເປັນພຣະຍາໂສກ ພຣະຍາທັງຫລາຍຝູງນີ້ ພຣະຍາຟ້າໃຫ້ເປັນເມືອງສ່ວຍສູດ ສ່ວຍມ່ານ ສ່ວຍດ້າຍ ສ່ວຍໄຫມ ສ່ວຍຄຳ ສ່ວຍຊ້າງ ສ່ວຍຈຳຫງາຍ ສ່ວຍຂ້ອຍຊູ່ເມືອງຫັ້ນແລ ພະຍາຟ້າຈຶ່ງຍໍພົນເຂົ້າມາບ້າເທິນບູນ ພຣະຍາຕົນນຶ່ງຊື່ວ່າວຽງອອກມາຮົບ ເຫັນດູຫລາກແລ້ວພ່າຍໜີ ບາກິນໄປໃສ່ໄດ້ຂ້າເສັຽ ຈຶ່ງໃຫ້ນ້ອງເປັນພຣະຍາ

ເຈັດຈຽງແທນ ຈຶ່ງໃສ່ຜູ້ນຶ່ງໃຫ້ເປັນພຣະຍາກວ້າງສຽນ ຜູ້ນຶ່ງ ໃຫ້ເປັນພຣະຍາກວ້າງທົ່ງ ຜູ້ນຶ່ງໃຫ້ເປັນພຣະຍາເມືອງຫລວງ ຜູ້ນຶ່ງໃຫ້ເປັນພຣະຍາເມືອງມ່ວນ ຜູ້ນຶ່ງໃຫ້ເປັນພຣະຍາວັງ ຜູ້ ນຶ່ງ ໃຫ້ເປັນພຣະກຣະຖາກ ຜູ້ນຶ່ງ ໃຫ້ເປັນພຣະຍາຊຸບພອນ ຜູ້ນຶ່ງໃຫ້ເປັນພຣະຍາຊະໂປ່ນ ພຣະຍາທັງຫລາຍຝູງນີ້ ພຣະ ຍາຟ້າ ໃຫ້ສ່ວຍຝ້າຍ ສ່ວຍໄຫມ ສ່ວຍຜ້າກັ້ງແລພືດານ ທັງ ສ່ວຍຂ້ອຊູ່ປີ ໃຫ້ເມືແຕ່ເດືອນ ໑໒ ເດືອນສາມໃຫ້ຮອດຊູ່ ເມືອງ ຫັ້ນແລ ແຕ່ນັ້ນພຣະຍາກໍຍົກພົນມາຮອດປາກຊະດິງ ຍັງມີຜູ້ ນຶ່ງຊື່ວ່າພຣະຍາສາມຄ້ອມ ມັນເປັນເຈົ້າເມືອງພຣະບ້າຣຸ່ງ ຕາພົນໄດ້໔ຫມື່ນ ຊ້າງຫ້າຮ້ອຍມາຮົບພຣະຍາຟ້າ ພຣະຍາ ຟ້າໃຫ້ງາຈິແຂ້ ຖືພົນມາຮົບແພ້ພຣະຍາ ສາມຄ້ອມ ບາຈິ ແຂ້ ໄລ່ເອົາພຣະຍາສາມຄ້ອມ ໄດ້ເອົາມາຈົມນ້ຳເສັງ ທີ ປາກບາງບາດຫານ ພຣະຍາຟ້າ ຈຶ່ງຍໍພົນມາປູ່ເມືອງ ພຣະບ້າຣຸ່ງ ຈຶ່ງໃຫ້ຜູ້ນຶ່ງເປັນພຣະຍາພຣະບ້າ ຣຸ່ງແທນພຣະ ຍາສາມຄ້ອມຫັ້ນແລແຕ່ນັ້ນ ຊ່າເມືອຮອດ ພຣະຍາເຈັດຈຽງ

ອັນເປັນເຈົ້າເມືອງພວນຊຽງຂວາງໆ ຈຶ່ງແຕ່ງຫມື່ນຫລວງ
ພວນທັງຫມື່ນຄຳມາໄຫວ້ພຣະຍາ ຟ້າ ທີ່ນຣະບ້າຣຸງຫັ້ນວ່າ
ດັ່ງນີ້ ຜູ້ຂ້ານີ້ຫາກເປັນຫລານເປັນເຫລນເຊື້ອແນວຂຸນບໍ່ ຣົມຣາ
ຊາທິຣາຊເຈົ້າທັງຂຸນລໍ່ ແຕ່ບູຮານມາດີຫລີດາຍ ໃນດີນີ້ແລພຣະ
ຍາຟ້າເຈົ້າແລຈັກຜາງບ້ານຜາບເມືອງທີ່ໃດກໍດີ ຂ້າຈັກແຕ່ງອື
ພົນໄປຊ່ອຍໄປ ເຕີມຊູ່ແຫ່ງຊູ່ທີ່ພຣະຍາຟ້າຈຶ່ງວ່າດັ່ງນີ້ ພີ່ນ້ອງ
ເຮົາ ແລ ຍັງຄຶດເຖິງເຮົາດັ່ງນັ້ນກໍ່ຊອບດີແລ ບ້ານເມືອງອັນ
ຫລານເຮົາກັບນ້ອງເຮົາແຕ່ກອນ ທີ່ໃດກໍດີ ໃຫ້ໄວ້ແກ່ນ້ອງ
ເຮົາເຖິງເຄື່ອງເສິກເຄື່ອງວຽກເຄື່ອງເຫລັກອັນໃດກໍດີ ເຮົາຫາກ
ຈັກໃຫ້ມາເອົາດອມ ອັນນຶ່ງບ້ານເມືອງແກ່ເຮົາຜາບໄດ້ ແກ່ເມືອງ
ຊ້າເມືອງມ່ວນກໍໃຫ້ມາໄຫວ້ມານົບແກ່ນ້ອງເຮົາ ພຣະຍາຟ້າ
ວ່າດັ່ງນັ້ນ ແຕ່ນັ້ນເຈົ້າຈຶ່ງບໍ່ພົບນຳ ຊວນໄປຣົບພຣະຍາມີຣ້ານ
ກວ້ານມີເສົາ ທັງພຣະຍາອ່າງສິງອ່າງຫນານ ໄລ່ເອົາພຣະ
ຍາທັງສາມເມືອງນັ້ນ ແລ້ວພຣະຍາຟ້າກໍເອົາພຣະຍາທັງ
ສາມເມືອງ ເມືອມອບແກ່ເຈົ້າບົວຫລວງ ເຈົ້າບົວຫລວງກໍ

ຖາມດູເຊື້ອແນວພຣະຍາຟ້າວ່າ ເປັນຫລານເປັນເຫລນຂຸນບໍ
ຣົມຣາຊາທີ່ຣາດສືບໆມາຫລາຍຊົ່ວຫລາຍປາງນັກ ຈິ່ງມາເຖິງ
ພະຍາຟ້າຫັ້ນແລ ແລ້ວເຈົ້າບົວຫລວງຈິ່ງວ່າ ພີ່ວ່າແມ່ນເຊື້ອ
ແນ່ນແນວ ເຈົ້າຂຸນບໍຣົມແທ້ ໃຫ້ແກ່ເມືອງມີຮ້ານມີກ້ວາ
ມີເສົາ ແຕ່ຫີນສາມເສົ້າບ້ຳເຕົ້າແກ້ວ ບ້ານເມືອງດິນດອນທີ່
ໃດກໍດີ ຟ້າແຖນຫາກແຕ່ງໄວ້ຝົນ ກົກນ້ຳໄຫລເບື້ອເມືອງລາວໃຫ້
ໄວ້ເຂດແດນ ເມືອງລາວຝົນຕົກນ້ຳໄຫລເມືອງເມືອງບົວແຕ່ໃດ
ໃຫ້ໄວ້ເປັນເມືອງບົວແຕ່ນັ້ນ ເຈົ້າ ບົວຫລວງຈິ່ງແຕ່ງຄຳມາ
ສາມ ຫມື່ນເງິນມາສາມແສນທັງໄມ້ກຳພັກເຄສນາ ທັງ
ລ້ວແຮແພຈີນເປັນອັນມາກອັນຫລາຍນັກ ໃຫ້ແກ່ນາຍຜູ້ຊ້ອນ
ເອົາອາງສິງອາງຫນາມເມືອນອງແກ່ເຈົ້າບົວນັ້ນ ມາຖວາຍ
ແກ່ພຣະຍາຟ້າທີ່ແດນເມືອງຫັ້ນແລ ແຕ່ນັ້ນພຣະຍາຟ້າຈິ່ງ
ໃຊ້ ໃຫ້ພຣະຍາເມືອງມີຮ້ານກວ້າມີເສົາ ແຕ່ງໃຫ້ເອົາສ່ວນຄຳ
ທັງສ່ວນລ້ວແຮແພ ກ້າຍໄຫມຊູ່ອັນ ແກ່ນັ້ນພຣະຍາຈິ່ງບໍ່ພິນ
ມາຕັ້ງທີ່ນາ ນ້ອຍອ້ອຍຫນູ ທີ່ຂຸນລໍເກົດຫັ້ນ ຈິ່ງໄດ້
ຊື່ວ່າເມືອງແຖນ ເພື່ອແຖນຟ້າຄືນມາແຕ່ງມາແປງຫັ້ນກ່ອນ

ຈຶ່ງເປັນບ້ານເປັນເມືອງມາຕາບເທົ້າບັດນີ້ແລ ບໍ່ເງິນບໍ່ຄຳບໍ່
ແກ້ວບໍ່ທອງບໍ່ເຫລັກມີຊູ່ອັນແລ ພຣະຍາຟ້າໄລ່ຜູ້ນຶ່ງໃຫ້ເປັນ
ພຣະຍາທີ່ເມືອງແຖນນາ ນ້ອຍອ້ອຍຫນູຫັ້ນ ຈຶ່ງໃຫ້ຜູ້ນຶ່ງ
ເປັນພຣະຍາເມືອງໄຊ, ໄລ່ໃຫ້ຜູ້ນຶ່ງເປັນພຣະຍາເມືອງໄລ່
ໃຫ້ຜູ້ນຶ່ງເປັນພຣະຍາເມືອງກວ້າງໃຫ້ຜູ້ນຶ່ງເປັນພຣະຍາສາມ
ສິບພອງ ເມືອງໂຮມນາ ໃຫ້ຜູ້ນຶ່ງເປັນພຣະຍາກາງລ້ານ ຜູ້
ນຶ່ງເປັນພຣະຍາສິງຫ້າວ ຜູ້ນຶ່ງເປັນພຣະຍາເມືອງພຸນ ຜູ້ນຶ່ງ
ເປັນພຣະຍາ ເມືອງວາດ ຜູ້ນຶ່ງເປັນພຣະຍາເມືອງກວ້າງທຶງ
ແຕ່ຟາກນ້ຳແທນມາພີ້ ເຈົ້າບິວຫລວງຫາກເວນ ໃຫ້ແກ່ພຣະ
ຍາຟ້າ ພຣະຍາຈຶ່ງ ໄລ່ໃຫ້ເປັນທ້າວເປັນພະຍາ ໃຫ້ເອົາສິ່ງ
ສ່ວຍຄຳສ່ວຍເງິນ ສ່ວຍຂ້ອຍສ່ວຍຜ້າກັ້ງຜ້າໄຫມແລພີດານ
ແລະເຄື່ອງເສິກສ່ວຍມ້າທັງອານ ເງິນອານຄຳ ທັງລົ້ ແລທອກ
ແພນທັງມວນ ແລ້ວຈຶ່ງໃຊ້ເນືອເລົ່າແກ່ເຈົ້າບິວຫລວງ ໂດຍ
ດັ່ງຄວາມທັງມວນຝູງນີ້ ເຈົ້າບິວຫລວງວ່າໃຫ້ພີເຮົາຄືນເມືອ
ປູ່ຊຽງດີງຊຽງທອງພຸ້ນເຖີ້ນ ແຕ່ນັ້ນພຣະຍາຟ້າກໍເອົາຣີພົນ

ຂ້າມບ້າອູເມືອເມືອງບຸນໄດ້ບຸນເຫນືອ ສອງຂາພຣະບາບຸນເອົາ

ພົງ ອອກມາຮົບພຣະບາຟ້າກໍແພ້ ເອົາສອງຂາຂ້າເສັງ ແລ້ວ

ຈິ່ງໃຊ້ໃຫ້ເມືອຫາພຣະບາຊຽງຮຸ່ງວ່າຍັງຈັກຮົບ ຈັກຊົນເຮົາລື?

ພະຍາຊຽງຮຸ່ງຈິ່ງວ່າເຮົາ ບໍ່ກໍ່ຫາກເປັນເຊື້ອເປັນແນະ ອັນດຽວ

ດາຍເຮົາບໍ່ຮົບບ່ເລວພະຍາເຈົ້າແລ ໃຫ້ພຣະບາເຈົ້າເອົາເຂດ

ບ້ານແດນເມືອງແຕ່ບ້ານປີ່ງລວງຂວງເທົ່າເມືອ ບຸນໄດ້ບຸນ

ເຫນືອພຸ້ນ ເປັນເຂດຂອງເມືອງລ້ານຊ້າງເຖິງເຮົາກໍຈັກ ໃຫ້ບົວ

ໃຫ້ບາງແກ່ເຈົ້າຟ້າແລ ບັດນີ້ ລູກເຮົາຍັງນ້ອຍພາງຫນ້າຈິ່ງ

ເອົາເມືອປັດເສື່ອປູຫມອນແກ່ເຈົ້າຟ້າເຖິງເຈົ້າຊຽງຮຸ່ງຈິ່ງແຕ່ງ

ເງິນແສນນຶ່ງ ມ້າຮ້ອຍນຶ່ງທັງອານເງິນອານຄຳຮຳແຮແພຈີນ

ເມືອມາກບັກ ພຣະບາຟ້າກໍເອົາແລ້ວ ຈິ່ງໃສ່ຈ້ອຍຜູ້ນຶ່ງຊື່ວາ

ບາກິນໃຫ້ເປັນເຈົ້າຂວາ ເຂົາຈິ່ງຮຽກວ່າຂົວກິນຫັ້ນແລ ແຕ່

ນັ້ນ ພະຣະບາຟ້າ ຈິ່ງລ່ອງມາຮອດເມືອງນ້ອຍ ເຈົ້າ

ເມືອງນ້ອຍ ຈິ່ງຂໍເປັນເມືອງກາງຢ້າວກາງເຮືອນ ພະຣະບາ

ເຈົ້າຟ້າເຖິງ ພຣະບາຟ້າ ຈິ່ງໃຫ້ເຖົ້າສຽງເປັນເຈົ້າ

ເມືອງນ້ອຍຫັ້ນແລ ເຖົ້າສຽງແຕ່ງທີ່ເຂົ້າຂວັນ ທັງພອກພີ

ພລີເລື້ອ ພຣະບາຟ້າ ຊູອັນແລ ແຕ່ນັ້ນພຣະບາຟ້າລ່ອງ

ນາຣອດ ສິບອູຫັ້ນ ເຈົ້າຟ້າຄໍາຣຽວຜູ້ນີ້ເປັນ ອາວນ້ອງພໍ່

ພຣະບາຟ້າ ພໍ່ພຣະບາຟ້າຕາຍເສັຽເຂົາຈິ່ງເອົາມນ

ເປັນພຣະເຈົ້າແຜ່ນ ດິນແທນມັນມີ ລູກຍິງສອງຄົນ ລູກຊາຍບໍ່

ມີ ມັນກໍຮູ້ວ່າພຣະບາຟ້າລ່ອງນາຣອດສິບອຸ ມັນກໍຢ້ານພຣະ

ບາຟ້າຂາທັງສອງຜົວເມັຽລວດກິນ ງານຕາຍທັງສອງຫັ້ນ ແລ

ຍັງແຕ່ ລູກຍິງທັງສອງ ເສນາອໍານາດມັງະຄາບສິງສະພານ

ບໍຣະບວນແລ້ວ ເສນາອໍານາດທັງຫລາຍຈິ່ງເມືອຮາທ

ນາພຣະບາຟ້າທີ່ສິບອຸພຸ້ນ ນາຣອດຊຽງດົງຊຽງບອະ ແລ້ວຈິ່ງ

ນາອາຊາພິເສກພຣະບາຟ້າທັ້ງນະ ງ ແກ້ເກັງບາອັນເປັນ

ລູກພຣະບານະຄອນຫລວງນັ້ງ ໃຫ້ເປັນເຈົ້າ ແຜ່ນດິນໃນຊຽງ

ດົງຊຽງທອງ ໃຫ້ປູລ້ຽງເປັນແສນເມືອງໃຫ້ກາລ້ຽງເປັນຫມື່ນ

ຫລວງໃຫ້ອາວລ້ຽງເປັນພຸມເຫນືອໃຫ້ນ້າລ້ຽງເປັນພູມໃຕ້ໃຫ້ພີ່

ລ້ຽງເປັນພຣະບາກຣະຊັກ ຂ້າພູທັງມວນໃຫ້ຂຶ້ນລົງ ດອນພຣະ

ຍາກະຊັກທັ້ງແລ ຂຶ້ນໂຮງຂຶ້ນສານຂຶ້ນຟ້າຂຶ້ນແຖນ ໃຫ້ພຣະ
ຍາກຣະຊັກຂຶ້ນກ່ອນ ຈຶ່ງໃຫ້ແປງໂຮງຫລັງນຶ່ງໃຫ້ນັບປູ່ກ້າຍ
ໂຮງຊຽງກອງຫັ້ນ ຂອງຝາກອັນເຂົາມາຍື່ນມາຖວາຍແກ່ເຈົ້າ
ແຜ່ນດິນ ກໍໃຫ້ນັບຮັບເອົາກອບແຕ່ງແປງຊູ່ອັນນັ້ນຈຶ່ງໃສ່ຜູ້ນຶ່ງ
ໃຫ້ຮັບກາງ ເຂົາຈຶ່ງວ່າຣາມຣາຊ ອັນ ທັງຫລາຍວ່າຫນັ້ນ
ຣາຊບັວ ນີ້ແລ

ຂຶ້ນໄປເກີຊຽງແສນ

ແຕ່ນັ້ນພຣະຍາຟ້າຈຶ່ງກະທຳມິນ ຂຶ້ນເມືອລ້ານນາທາງ
ນ້ຳຂອງ ຈຶ່ງໄວ້ນາງແກ້ວເກັງຍາກີເມືອງຊຽງດົງຊຽງທອງ
ຮັກສາແຜ່ນດິນ ເຫດເພື່ອນາງທະຣາງກັບໄດ້ສາມເດືອນແລ້ວ
ພຣະຍາກໍຂຶ້ນເມືອຮອດເກົ່າຫົວເຮືອ ເມືອງເລິກຫັ້ນ ບ້ງວີ
ລູກອ້າຍວີທູວພູ ນຶ່ງນັບເປັນລູກນາງແກ້ວມະ ຫາວີ ຮຽກຊື
ທ້າວອູລອງນັບເປັນຫລານ ຟ້າຄຳຮຽວ ມັນຈຶ່ງອອກມາໄຫວ້
ພຣະຍາຟ້າທີທ່າລວງກຳຫັ້ນ ພຣະຍາອູລອງຈຶ່ງວ່າຂ້ອຍ

ນີ້ເປັນລູກນາງ ແກ້ວມະຫາຣີ ແມ່ຂ້ອຍນີ້ເປັນລູກຟ້າຄຳຣຽວ ກໍຫາກເປັນວົງສາແຫ່ງເຈົ້າກູດາຍ ພຣະຍາຟ້າຈິ່ງວ່າພີ່ວ່າ ເປັນດັ່ງນັ້ນແທ້ ເມືອງເລີກນີ້ເຈົ້າຈິ່ງກິນະຖຸນ ໃຫ້ເປັນເມືອງ ກາງເຮືອນກູເຖີ້ນ ແລ້ວພຣະຍາຟ້າຈິ່ງຂຶ້ນ ເມືອຢູ່ສິບ ແປ່ງແລ້ວ ຈິ່ງໃຫ້ຂຶ້ນເມືອ ເອົາລ້ານເມືອງຣຸ ລ້ານ ເມືອງແປ່ງ ໄດ້ແລ້ວຈິ່ງເມືອຕັ້ງຢູ່ສິບຫາຈິ່ງຈັກເອົາເມືອງຊຽງ ຂອງຄືກຣຳຊຽງທອງ ຈິ່ງໃສ່ຜູ້ນຶ່ງໃຫກິນເມືອງຊຽງ ຕົ້ນຂີ່ເມືອງ ນີ້ຈິ່ງໄດ້ວ່າສີຫມື່ນທາງນ້ຳ ແລ ໃຫ້ຊຽງຕົ້ນເປັນເຈົ້າສີຫມື່ນ ຈິ່ງໃຫ້ເອົາເມືອງພາເມືອງພົວພູຄຸນທັງເມືອງແທງ ຈິ່ງໃຫ້ເຈົ້າ ເມືອງພາເປັນສີຫມື່ນນາງ ບົກແຕ່ນັ້ນ ພຣະຍາຟ້າກໍ່ມາດາດູ ພົນ ທີ່ ສິບຫາຫັ້ນ ໄດ້ພົນສີແສນແຕ່ລາວໄດ້ປ້າຍໄດ້ແກວ ແສນນຶ່ງ ຊາງໄດ້ຫ້າຮ້ອຍຕົວ ຈິ່ງຂຶ້ນເມືອເອົາເມືອງຫີນເມືອງ ງາວ ໄດ້ ແລ້ວ ຈິ່ງຍໍພົນຂຶ້ນເມືອຕັ້ງທີ່ດອນມູນຫັ້ນ ແຕ່ນັ້ນ ເຈົ້າເມືອງລ້ານນາຜູ້ນຶ່ງຊື່ວ່າ ພຣະ ຍາສາມພະຍາ ມັນກໍອວນ ພົນແຕ່ເມືອງລ້ານນາມາຊູແຫ່ງໄດ້ພົນສີແສນ ຍາມນັ້ນເອົາ

ເມືອງຊຽງແສນເປັນລ້ານນາ ນັນຈຶ່ງໃຫ້ແສນາມັນຜູ້ນຶ່ງຊື່ວ່າ
ແສນເມືອງນັນກໍຖືພົນມາຣົບພຣະຍາຟ້າງຸ່ມ ຈຶ່ງຂີ່ຊ້າງຕົວນຶ່ງ
ຊື່ວ່າຊຽງທອງຫວ້າຍນ້ຳ ກົກເມືອ ສູ່ແສນເມືອງລ້ານນາແລ້ວ
ຂະວາກິນຂາກໍ່ ຊົນ ກັນຂວາກໍແພ້ ຂ້ ແສນເມືອງລ້ານນາ ຕາຍ
ກັບຄໍ່ຊ້າງ ແຕ່ນັ້ນພຣະຍາສາມພຍາ ອັນເປັນເຈົ້າແຜ່ນດິນ
ລ້ານນາກໍ່ພ່າຍໜີເຂົ້າວຽງລ້ານນາຊຽງຣາຍ ພຣະຍາຟ້າກໍ
ໃຫ້ໄປໄລ່ເອົາຮອດເມືອງແພວເມືອງເລນ ທັງ ເມືອງໄຮບ້ານນູ
ເມືອງບອງຫົວພະງ ຫົວຟາຍ ຄຸງເມືອງລື້ ເມືອງຂຶນເມືອງ
ຊຽງແຂງໜັ້ນແລ ແຕ່ນັ້ນພຣະຍາສາມພຍາຈຶ່ງໃສ່ຜູ້ນຶ່ງຊື່ວາ
ໜື່ນກຸມການ ຜູ້ນຶ່ງຊື່ວ່າໜື່ນເຊູນ ຜູ້ນຶ່ງຊື່ວ່າໜື່ນກາງ
ເມືອງຊຽງຣາຍ ມາຂໍສິ່ງສ່ວນເຂົ້າພັນຄານແກ່ ພຣະ
ຍາຟ້າ ເມືອໄດລູກຜູ້ຂ້ານາງນ້ອຍອ່ອນສໍ ໃຫຍ່ໄດ້ ໑ປີ ປີຈັກ
ໃຫ້ເມືອປັດເສື່ອປູໜອນ ແກ່ເຈົ້າຟ້າຊະແລ ນັດນີ້ຍັງນ້ອຍ
ຂໍແກ່ເຈົ້າຟ້າ ເອົາແຕ່ວຽງພາໄດໄປ ໃຫ້ເປັນບານເມືອງ
ເຈົ້າຟ້າຂ້ອນຖ້ອນ ພຣະຍາສາມພຍາ ມອບເວນໃຫ້ແກ່
ນັ້ນເປັນແດນເມືອງລ້ານຊ້າງໜັ້ນຖ້ອນ ເລົາແຕ່ງຄຳນາຖວາຍ

ພຣະຍາຟ້າສອງຫມື່ນ ເງິນສອງແສນແຫວນນິນລູກນຶ່ງຊື່
ວ່າບອດຊຽງແສນ ແກ້ວພິທູນລູກນຶ່ງຊື່ວ່າ ບອດຊຽງຣາຍ
ແຫວນແດງລູກນຶ່ງຊື່ວ່າມະນີຟ້າລ່ວງ ເອົາມາຖວາຍແກ່ພຣະ
ຍາຟ້າຫັ້ນແລ ບໍ່ເທົາແຕ່ນັ້ນເລົາແຕ່ງເງິນຄຳມາໃຫ້ແກ່ເສນາ
ພຣະຍາຟ້າຜູ້ໃຫຍ່ຊູ່ຄົນ ເປັນອັນມາກຫລາຍນັກ ແຕ່ນັ້ນ
ພຣະຍາຟ້າກໍລ່ອງມາເມືອງລ້ານຊ້າງ ຈິ່ງມາກວາດເອົາຂ້າ
ເກົ່າແຕ່ຫົວນ້ຳທາ ເທົ້າເມືອງກໍເມືອງຫລ້າ ເທົ້າແດນລື້ຫມົດ
ຊູ່ແຫ່ງຊູ່ທີ່ ທໍ່ຍັງຈິ່ງໄວ້ໃຫ້ເປັນເຊື້ອເປັນແນວເຂົາທີ່ນຶ່ງ ວ່າ
ພູຄຸ້ມຊາວຄົວ ທີ່ນຶ່ງວ່າພູຈອມແລ້ງຊາວຄົວໄວ້ ສີແຫ່ງນີ້ເປັນ
ເຊື້ອສາຍ ແຫ່ງ ເຂົາ ຫັ້ນແລ ຈິ່ງບອກສອນເຂົາວ່າດັ່ງນີ້ສູຢ່າ
ບ່າຢ່າງາບແກໄທແກ່ລາວ ສູຢ່າຍາດເອົາສິ່ງເອົາຂອງລາວອັນ
ໄດກໍດີອັນນຶ່ງສູຫາກຜິດກັບແລວ່າຈັກໄປຣົບໄປເລວກັບກໍດີໃຫ້ສູ
ຈື່ຄວາມກູສັ່ງນີ້ ນ້ຳກາບນ້ຳຣັບນ້ຳຣວຍນ້ຳເມິງນ້ຳເປິກ ຫ້າມນ້ຳໃຫ້
ເປັນນ້ຳເສິກສູຈັກຣົບຈັກເລວກັບກໍຕາມ ສູ ນ້ຳກົດນ້ຳກົດນ້ຳຮ້ວງນ້ຳ
ເຕົານ້ຳກາ ຫ້າມນ້ຳນີ້ຢ່າໃຫ້ຣົບເລວ ກັນ ຢ່າໃຫ້ ຫຍຸບ ເອົາ
ຄວາຍບາຍ ເອົາ ຄົນ ກັບຜູ້ໄດຫາກບໍ່ຟັງຍັງຄວາມກູສັ່ງນີ້ ທີ່ນ

ໜ່ວຍນີ້ກູເອົາແຕ່ສິບຄານຊຽງດົງຊຽງທອງ ພຸ້ນມາໄວ້ແກ່ສູນີ້ ແລ້ວຫີນໜ່ວຍນີ້ໜັກສອງໝື່ນຫ້າຮ້ອຍບາດ ຜູ້ໃດຫາກບໍ່ຟັງຄວາມກູອັນເປັນເຈົ້າແຜ່ນດິນຊຽງດົງຊຽງທອງນີ້ ໃຫ້ສູທັງສິບຊຸມຣາຊນີ້ຊັ່ງເອົາເງິນທໍ່ຫີນໜ່ວຍນີ້ ເລົາເອົາຄວາມໂຕນຶ່ງກິນແກ່ສູ ຢ່າໃຫ້ວ່າກັນສັງດັ່ງນີ້ ຢ່າຣື້ຣອກຄອກຄົວກັນ ພຣະບາຟ້າສັ່ງສອນຂ້າເກົ້າດັ່ງນີ້ ແລ້ວຈຶ່ງເອົາເຂົາລ່ອງມາໄວ້ນູບ່ອນຫັ້ນ ແຕ່ງໃຫ້ເຂົາຊຽງໄປຊຽງພາຫັ້ນແລ ພຣະບາຟ້າໄປຄວ່າໄດ້ສອງປີ ຈຶ່ງມາຮອດຊຽງດົງຊຽງທອງ ຈຶ່ງເຫັນໜ້າລູກຊາຍນຶ່ງໃສ່ຊື່ວ່າ ທ້າວອຸ່ນເຮືອນ ອັນຕົນເປັນພຣະບາສາມແສນໄທບັດນີ້ແລ ໄດ້ຂ້າເກົ້າທັງມວນທັງຍິງຊາຍນ້ອຍໃຫຍ່ແສນນຶ່ງ ໃຫ້ຂວາກິນເປັນເຈົ້າເປັນລ່າມແກ່ເຂົາຫັ້ນແລ.

ພຣະເຈົ້າຟ້າງຸ່ມ ລົງມາຕີວຽງຈັນ

ແຕ່ນັ້ນ ພຣະບາຟ້າກໍຍໍພົນລ່ອງຈາກເມືອງຊະວາ

ໃຫ້ບາໃບບາຈື່ແຂ້ເປັນຫົວໜ້າ ຖືພົນໄປຮອດເມືອງຊ້າຍ
ທ້າວໄຄຫລານຂຸນເຄັດຂຸນຄານເມືອງຊ້າຍຖືພົນມາຮົບ ບາ
ໃບບາຈື່ແຂ້ງ ແພ້ທ້າວໄຄ ເສັງທີ່ຊຽງສົມຫັ້ນ ຈຶ່ງໃສ່ບາ
ໃບເປັນເມືອງຊ້າຍ ເຂົາຈຶ່ງວ່າຊ້າຍໃບ ຫັ້ນແລແຕ່ນັ້ນພຣະບາຟ້າ
ລ່ອງໄປ ຄັ່ນແກ້ງຊ້າຍບາໃບບາຈື່ແຂ້ເອົາພົນຕັ້ງທ່າບາເໜືອ
ທ້າວຊຽງມຸງກົບຈັບພຣະບາເພົາກົບວຽງຄຳ ສອງຂາພໍ່ລູກນີ້
ພົນສອງແສນຊ້າງຫ້າຮ້ອຍ ທ້າວຊຽງມຸງຂີ່ຊ້າງຕົວນຶ່ງຊື່
ວາວັງບູຣີສູງແປດສອກ ພຣະບາເພົາຂີ່ຊ້າງ ຕົວນຶ່ງຊື່ວ່າ
ແສນບາງຄອບສູງເກົ້າສອກ ບາໃບຂີ່ຊ້າງຕົວນຶ່ງຊື່ວ່າແພ້ວ
ຈັກກະວານ ບາຈື່ແຂ້ຂີ່ຊ້າງຕົວນຶ່ງຊື່ວ່າຂວານລ່ວງຟ້າ ພຣະ
ບາຟ້າຂີ່ຊ້າງຕົວນຶ່ງຊື່ວ່າຣົມຊຽງທອງ ທ້າວຊຽງມຸງແລະ
ພຣະບາເພົາສອງຂາພໍ່ລູກອອກມາລົບ ພຣະບາຟ້າຕັ້ງຢູ່
ທ່າບາເໜືອ ບາໃບບາຈື່ແຂ້ປູກົບຈຳປີ ສອງຂາພໍ່ລູກລ່ວງ
ເຂົ້າມາຊົບເຂົາຈຶ່ງວ່າຫນອງລ່ວງ ທີ່ນັ້ນບາຈື່ແຂ້ຊົນທ້າວຊຽງ
ມຸງແພ້ຂ້າທ່ານຕາຍກັບຫົວຊ້າງ ບາໃບແລຂວາກົມເຂົ້າຊົນ

ພຣະຍາເພົາ ໆ ເຫັນຊ້າງຂາແຂງ ພຣະຍາເພົາລວດພ່າຍ
ໜີເມືອວຽງຄຳທີ່ເມືອງທ່ານພຸ້ນ ແຕ່ນີ້ ພຣະຍາ
ຟ້າເຂົ້າໄປຕັ້ງຢູ່ວຽງຈັນໜັ້ນ ຈຶ່ງໃຫ້ບາກີເ ຜູ້ນຶ່ງ ບາສຸມຜູ້ນຶ່ງ
ບາຈີແຂ້ຜູ້ນຶ່ງສາມຄົນນີ້ ເຂົາຖືພົນໄປເອົາວຽງຄຳບໍ່ໄດ້ເຂົາ
ຈຶ່ງໃສ່ມາເລົ່າແກ່ພຣະຍາຟ້າວ່າ ວຽງໄມ້ໄຜ່ຂັດໜັກ ພຣະຍາ
ເພົາບໍ່ອອກມາຮົບ ເອົາຍາກນັກ ພຣະຍາຟ້າຈຶ່ງວ່າບໍ່ຍາກ
ສັງ ຈຶ່ງຕີເງິນຕີຄຳເຮັດກຽງປືນໄປໃຫ້ແກ່ເຂົາ ຈຶ່ງໃສ່ໜັງສື
ໄປວ່າແກ່ສາມຂຸນເຂົາໃຫ້ສູຄຸມວຽງເອົາປືນອັນນີ້ ຍິງໄປໃນປ່າ
ໄມ້ໄຜ່ ສາມວັນ ແລ້ວໃຫ້ຖືນມາຢູ່ກ່ອນຖ້ອນພູກາກຣີມເພີງ
ພາຍໜ້າວ່າດັ່ງນັ້ນ ເຂົາກໍເຮັດຕາມເຈົ້າຟ້າວ່າແລ້ວຄືນມາ
ພຣະຍາຟ້າຈຶ່ງກວາຍເມືອຢູ່ເປັນແກ່ຂຶ້ນແຕ່ງລົບເອົາແກ່ເມືອງ
ແກນທາວເນົາຮອດນະຄອນໄທແລະຂອບດ່ານທັງມວນ ຈຶ່ງໃຫ້
ບາຈີແຂ້ເປັນໜື່ນແກ ແລ້ວພຣະຍາຟ້າຈຶ່ງມາວຽງຈັນ ຈຶ່ງ
ໄປຄຸມເອົາວຽງຄຳໄດ້ໜັ້ນແລ ຈຶ່ງເອົາພຣະຍາເພົາໄດ້ ມັນອໍ
ເມືອຕາຍທີ່ຊຽງດົງຊຽງທອງໜັ້ນແລ ເຂົາເອົາໃສ່ຊອງມາທາງ

ບົກຈຶ່ງຕາຍທີ່ບ້ານຖຶບແຫ່ງຫັ້ນແລ ເຂົາຈຶ່ງວ່າເມືອງຊອງບັດນີ້ແລ ພຣະຍາຟ້າຈຶ່ງຄືນມາປູ່ວຽງຈັນຫັ້ນແລ ພຣະຍາຟ້າຈຶ່ງໂຮມຊ້າງໂຮມພົນດູໄດ້ຊ້າງສອງພັນຕົວ ໄດ້ມ້າພັນນຶ່ງ ໄດ້ຄົນຫົກແສນ ອັນນີ້ແຕ່ຫ້ວຍຫລວງມາເໜືອເຖົ້າຍຽງຜາໄດ ພຣະຍາຟ້າຈຶ່ງໃບ້ສຽນໄປເປັນຫມື່ນກຣະບອງ ມັນໂຮມພົນແຕ່ພຣະບ້າຮູງຊຽງລາໄປໄຕ້ເທົ້າແດນຈານ ແລດ່ານລະແວກແດນແກວກ້າໄຕ້ ຊີເມືອງປາກຕາງໄດ້ຄົນ ໔ ແສນໄດ້ຊ້າງພັນນຶ່ງໄດ້ມ້າຫ້າຮ້ອຍຕົວ ຈຶ່ງໃຫ້ບາຖຸ້ມເປັນຫມື່ນຈັບ ພຣະຍາໂຮມພົນທີ່ແຕ່ໄທ ອັນເປັນເຮືອນບອງທອງໄດ້ລາວແສນ ອັນເປັນລາວໄດ້ ໗ ແສນທັງມວນ ຄົນໃນເມືອງລ້ານຊ້າງໄດ້ລ້ານນຶ່ງຈຶ່ງໃຫ້ຂວາກົມເອົາອ້າເກົາໄປໃສ່ ກຣະແດພ້າແຕບນອກວຽງຈັນຫັ້ນ ຫມື່ນຄົວນຶ່ງ ເອົາໄປໃສ່ຫນອງຫານນ້ອຍຫານຫລວງ ທັງພູວານເຖົາບານປາວ ທັງເຊືອງຊ້າຍແສນຄົວຫັ້ນແລ.

ພຣະເຈົ້າຟ້າງຸ່ມໄປຣົບອະຍຸທທະຍາ

ພຣະຍາຟ້າຍໍພົນໄປເອົາເມືອງລ້ານເພັຽສຣີອະຍຸທິຍານີ ຄົນຫົກແສນຊ້າງ ໕ ຮ້ອຍຕົວ ຍັງໄວ້ພົນຮັກສາເມືອງສີ່ແສນຄົນ ຊ້າງສາມພັນຕົວ ມີທໍ່ນີ້ແຕ່ງໄວ້ຮັກສາເມືອງລ້ານຊ້າງແລ ພຣະຍາຟ້າຈຶ່ງໃຫ້ກືນແກຫມື່ນກຣະບອງ ຖືພົນໄປເປັນຫົວຫນ້າ ຂວາກືມເປັນປີກຂວາຊ້າຍໃບເປັນປີກຊ້າຍ ຫມື່ນຈັນເປັນທັບຫລັງພະຍາຟ້າຈຶ່ງຍໍພົນ ໄປທາງບົວກອງ ຮອດວຽງພຣະງາມ ໄດ້ເຈົ້າວຽງບົງພຣະງາມ ແລ້ວອອກມາສູ່ວຽງຮ້ອຍເອັດປະຕູຫັ້ນແລ ຈຶ່ງໃຫ້ໄປຂບເອົາ ທ້າວພຣະຍາທັງຫລາຍຊູ່ແຫ່ງຊູ່ທີ່ ຈຶ່ງໄດ້ເມືອງພຣະສາດພຣະສະຂຽນພຣະລຶງພຣະນາຮາບນາຫຽນເຊຂມາດສະພັງລີແຈ ທັງພຣະຍາຈັນພຣະຍາທັນສອງຂານີ້ ປູ່ເມືອງໂພະຝີ່ງແດດ ທ້າວພຣະຍາທັງຫລາຍຝູງນີ້ເຂົາເປັນລູກເປັນຫລານ ພຣະກູບາກາງແລ ພະຍາຟ້າກໍໃຫ້ໄປໄລ່ເອົາໄດ້ຫມົດ ມາຜູກໃສ່ຄາງວົງເຫລັກໄວ້ທີ່ເມືອງຮ້ອຍເອັດປະຕູກັ້ນ ທັງພຣະຍາຮ້ອຍເອັດປະຕູກໍຜູກໄວ້ຫັ້ນ ພຣະຍາກໍຣື້ເຫບ້ານເມືອງສາສນາສາຣີຣິກະທາດພຣະພຸທເຈົ້າກໍມ້າງກໍເພຫັ້ນແລ ພຣະຍາຟ້າກໍໃຊ້ໄປຫາພຣະຍາ

ເມືອງສີອະໂຍທິຍາວ່າ ຈັກຣິບຣີສິງໃດນັ້ນຈາ ເຈົ້າໂຍທິຍາ
ຈຶ່ງກ່າວວ່າເຮົາຫາກເປັນພີ່ນ້ອງກັນມາແຕ່ຂຸນບູຣົມບູຮານປາງ
ກ່ອນເພຸ້ນມາວາຍ ເຈົ້າຢາກໄດ້ບ້ານໄດ້ເມືອງໃຫ້ເອົາເຂດແດນ
ແຕ່ດົງສາມເສົ້າເມືອເທົ້າ ພູພຣະຍາພໍ່ແລະແດນເມືອງນະຄຣໄທ
ເປັນເຈົ້າກ້ອນ ອັນນຶ່ງຂ້ອຍຈັກສົ່ງນ້ຳອ້ອຍນ້ຳຕານຊຸ່ປີ ອັນ
ນຶ່ງລູກຍິງຂ້າ(ຊື່)ນາງແກ້ວລອດຟ້າໄທຍ່ມາແລ້ວ ຈັກສົ່ງໃຫ້
ເມືອປັດເສື່ອປູຫມອນແກ່ເຈົ້າຟ້າແລ ຈຶ່ງແຕ່ງຊ້າງພາຍຫ້າ
ສິບຊ້າງພັງຫ້າສິບຊ້າງຄຳສອງຫມື່ນເງິນສອງຫມື່ນ ບໍແສນ
ຫນ່ວຍ ຂອງອັນອື່ນກວ່ານັ້ນແກ່ງເຄື່ອງຮ້ອຍຊູ່ອັນ ຈຶ່ງສົ່ງມາ
ໃຫ້ພຣະຍາຟ້າຫັ້ນແລ ພຣະຍາທັງຫລາຍອັນພຣະຍາຟ້າ
ໄດ້ຜູກເອົານັ້ນ ເປັນເລີ້ນວ່າພຣະຍາກູ່ບາຫາງພຣະຍາຮ້ອຍເອັດ
ປະຕູ ພຣຍາຟ້າກໍຈັກໃຫ້ເອົາໄປຂ້າເສັ່ຽແທ້ ເມືອນັ້ນຍັງມີມະ
ຫາເທຣເຈົ້າຕົນນຶ່ງພາຣິພົນທັງມວນ ເຂົ້າມາຮອດພຣະຍາຟ້າ
ແລະປູ່ໄກພຣະຍາຊິວຫ້າວາຫັ້ນແລ ພຣະຍາຈຶ່ງກ່າວວ່າ
ພັນເຕ ຂ້າໄຫວ້ເຈົ້າກູງມີປະໂຍດດ້ວຍອັນໃດ ຈຶ່ງມາຮອດມາ

ເຖິງຜູ່ຂ້າໄປກາະະບັດນີ້ຈາ ແກ່ນັ້ນມະຫາເຖຣເຈົ້າຈຶ່ງກ່າວວ່າ
ເຮົາຈັກມາຖາມປັນຫາ ນຳພຣະຍາແລ ເຮົານີ້ກໍ່ຫາກເປັນ
ພໍ່ຄຣູມະຫາປາສມັນຕິນອັນລ້ຽງ ພຣະຍາໃຫຍ່ມານັ້ນດາຍ
ພຣະຍາຟ້າຈຶ່ງປູອາສນະໄວ້ແລ້ວ ຈຶ່ງອາຣາທນາມະຫາປາສ
ມັນເຈົ້ານັ້ນໆເຈົ້າກໍ່ນັ່ງກາງງິມິງຫັ້ນແລ ພຣະຍາຟ້າຈຶ່ງວ່າ
ເຈົ້າກູຈັກຖາມປັນຫາຄອນຜູ້ຂ້າຈຶ່ງໃດ ກໍ່ຖາມໄປຂ້ອຍຖ້ອນ
ມະຫາເຖຣເຈົ້າຈຶ່ງກ່າວວ່າ ອັນແຂ້ວພຣະຍາ ອອກມາແຕ່
ຫ້ອງແມ່ສາມສິບເຫລັ້ມນັ້ນ ຍ້າຊູເຫລັ້ມເບົານັ້ນຈາ ພຣະຍາ
ກໍ່ວ່າຫລ່ອນເສັ້ງຫມົດແລ້ວ ມະຫາເຖຣຈຶ່ງວ່າ ອັງໃຫມ່ຍັງ
ອອກມາແທນທີ່ເກົ່າເບົາຈາ ພຣະຍາກ່າວວ່າຍັງອອກມາທັງ
ສາມສິບສາມເຫລັ້ມ ດັ່ງເກົ່າກໍ່ຂ້າແລ ມະຫາເຖຣເຈົ້າຈຶ່ງ
ກ່າວວ່າ ແຂ້ວອັນອອກແຕ່ທ້ອງມາແລ້ວນັ້ນ ຍັງເປັນຄຸນສິ່ງ
ໃດເລົ່າ ຍັງເປັນໂທສສິ່ງໃດແກ່ມະຫາຣາຊນັ້ນຈາ ພຣະຍາຈຶ່ງ
ວ່າອັນຍັງເປັນຄຸນນັ້ນຂ້າວ່າໄດ້ງ້ວເຂົ້າກິນຈຶ່ງໃຫຍ່ ອັນນັ້ນ
ຂ້າວ່າເປັນຄຸນແລ ອັນນຶ່ງໂທສນັ້ນຄືວ່າແຂ້ວອອກແຕ່ທ້ອງ

ຄົນທັງຫລາຍວ່າເປັນຂວາງ ຂ້ອຍວ່າເປັນໂທດເພື່ອສິ່ງນັ້ນແລ
ແຂ້ວອັນເກົ່າຫລ່ອນເສັຽແລ້ວອັນໃຫມ່ ອອກມາແທນຍັງເປັນ
ຄຸນສິ່ງໃດເລົ່າຍັງເປັນໂທດສິ່ງໃດ ພຣະຍາຈິ່ງວ່າ ອັນເປັນ
ຄຸນມີແວນຫລາຍ ເພື່ອຂ້ອຍໄດ້ງ້ຽວໄດ້ກິນ ອັນເປັນໂທດ
ນັ້ນໄດ້ຂົບລີ້ນຂົບສົບມັນເຈັບ ມັນປວດ ອັນນັ້ນຂ້ອຍວ່າເປັນ
ໂທດເພື່ອສິ່ງນັ້ນກໍ່ຂ້າແລ ແລ້ວພຣະມະຫາເຖຣະເຈົ້າຈິ່ງ
ວ່າມະຫາຣາຊເຈົ້ານີ້ດີສ້າງໂພທີສົມພາວມາກນັກແລຈິ່ງແກ້
ບັນຫາເຮົາໄດ້ສັ່ງນີ້ຫັ້ນແລ ແລ້ວພຣະມະຫາເຖຣກໍ່ສັ່ງ
ສອນພຣະຍາກັ້ງເສນາອຳມາດມຸນ ດີງາກນັ້ນຫັ້ນແລມະຫາ
ເຖຣະເຈົ້າຈິ່ງຂໍຊີວິດ ທ້າວພຣະຍາທັງຫລາຍຝູງຜູກໄວ້ນັ້ນ
ເປັນເລີ້ນວ່າພຣະຍາຮ້ອຍເອັດປະຕູ ພຣະຍາຟ້າກໍ່ແກ້ປ່ອຍເສັຽ
ໃຫ້ເມືອຫາບ້ານຫາເມືອງ ຊຸ່ຄົນຕາມຄວາມພຣະມະຫາປາສ
ມັນເຈົ້າຫັ້ນແລ ພຣະມະຫາເຖຣະຈິ່ງສັ່ງອຳລາພຣະຍາ
ແລ້ວອອກໄປທາງປ່ອງອ້ຽມດ້ວຍ ອາກາສກາງຫາວຫັ້ນແລ.

ແຕ່ວັນພຣະຍາກໍເອົາຣິພົນ ທັງມວນຂຶ້ນນາກາງຄາວ
ທາງຈິ່ງມາຮອດວຽງຈັນປູ່ແກ່ງປຸນບ້ານເມືອງຊຸທີ່ຊຸແຫ່ງບໍ່ຣະ

ບະບແລ້ວຈຶ່ງແຕ່ງປຸນເສນາອຳມາດທັງຫລາຍ ເປັນຕົ້ນວ່າ
ປູ່ລ້ຽງໃຫ້ເປັນແສນເມືອງທັງໝື່ນ ກຣະບອງສອງຂາເຈົ້ານີ້
ໃຫ້ເປັນ ໃຫຍ່ກວ່າເຈົ້າຫົວເສິກທັງຫລາຍ ໝື່ນຫລວງ
ເປັນ ເຈົ້າຂວາ ເຈົ້າຊ້າຍພຸນເໜືອພຸນໃຕ້ຫ້າຂຸນນີ້ ພຣະ
ບາຟ້າໃຫ້ເປັນ ຫົວເສິກທັງຫ້າແລ ໝື່ນໜ້າໝື່ນແພນ
ສອງຂານີ້ໃຫ້ເປັນຂຸນຣາຊວັດກ້າໜ້າ ໝື່ນນາເໜືອໝື່ນ
ນາໃຕ້ ສອ ຂານີ້ໃຫ້ເປັນຣາຊວັດກ້າຫລັງ ນາຍຫລວງເໜືອ
ໃຫ້ຮັກສາຄຸ້ມໃນກ້າໜ້າ ໃຫ້ກາຄວາມເຈົ້າພຸນເໜືອ

ນາຍຫລວງໃຕ້ໃຫ້ ຮັກສາຄຸ້ມກ້າຫລັງໃຫ້ຫາ
ຄ້ອຍຄວາມເຈົ້າພຸນໃຕ້ ຂຸນທັງມວນອັນຈັກໄຫວ້ສາເຈົ້າແຜ່ນ
ດິນເມືອງຈັກໄປເສິກກໍດີຢູ່ບ້ານຢູ່ເມືອງກໍດີ ເທົ່ານີ້ແລ ຂຸນອັນເປັນ
ເຈົ້າເມືອງໃຫຍ່ມີໝື່ນຈັນເປັນເວັ້ນ ຄັດນັ້ນມາເຈົ້າວຽງຄຳມາ
ເຈົ້າວຽງແກ ໝື່ນພຣະບ້າຣຸ່ງເຈົ້າປາກຫ້ວຍຫລວງເຈົ້າ
ເມືອງຊຽງລາເທົ່ານີ້ເປັນຂຸນໃຫຍ່ເຂື່ອນເມືອງ ຂຸນໃຫຍ່ຂອບ
ເມືອງແກ່ນທ້າວເຈົ້າເມືອງທາບອງບົວເຈົ້າເມືອງຊ້າຍເມືອງຂວາ

ເຈົ້າເອົາວ່າບສາມຫມື່ນຂຸນທັງມວນຟູງນີ້ ພຣະຍາຟ້າ ໄສ່ໃຫ້ຮັກສາຂອບເມືອງລ້ານຊ້າງແລ.

ທຳກາບສລອງໄຊຍາ ພິເສກປຸວງງຈັນ

ແຕ່ນັ້ນທ້າວພຣະຍາທັງຫລາຍແປັນຕື່ນວ່າຫມື່ນຈັນແລ ຫມື່ນກຣະບອງທັງຫມື່ນຫລວງຈິ່ງໄຫວ້ພຣະຍາຟ້າວ່າດັ່ງນີ້ ເຈົ້າກູໄປພາບບ້ານເມືອງ ໄດ້ຊູ່ແຫ່ງຊູ່ທີ່ແລ້ ບັດນີ້ ພູງຂ້າທັງ ຫລາຍຂໍກະທຳໄຊຍາພິເສກແກ່ເຈົ້າກູ ໃຫ້ຫມັ້ນໃຫຍ່ບ໌ນຫມື່ນ ຫລວງໄຫວ້ສາວ່າດັ່ງນັ້ນ ພຣະຍາຟ້າຈິ່ງວ່າເຈົ້າທັງຫລາຍ ວ່າດັ່ງນັ້ນກໍຊອບແລ້ວ ເຂົາຈິ່ງມາຫາບ່ອນທາທີ່ອັນຈັກເປັນ ມຸງຄຸນ ຈິ່ງມາໄດ້ທີ່ອັນນຶ່ງອັນຕັ້ງວັດປະສັກບັດນີ້ແລເມືອກ່ອນ ນັ້ນໄປທັນຕັ້ງວັດ ປະສັກທີ່ນັ້ນ ເຂົາຈິ່ງແປງທຳສີງແລ້ວຈິ່ງເອົາ ພຣະຍາຟ້າໄປສີງກະທຳໄຊຍາພິເສກທັ້ນແລປູ່ລ້ງງອິພັນ ໗ ວັນ ໗ ຄືນ ຂ້າຊ້າງກິນ ໑໐ ຕົວ ຂ້າງົວກິນ ໑໐໐໐ ຕົວຂ້າ ຄວາຍກິນ໑໐໐໐ ຕົວບໍຣະບວນແລ້ວພຣະຍາຟ້າຈິ່ງ ສັ່ງສອນ ທ້າວພຣະຍາທັງຫລາຍມວນຊູກັນວ່າດັ່ງນີ້ ເຈົ້າທັງຫລາຍ

ຣັກສາບ້ານເມືອງຢ່າໃຫ້ມີຂ້າລັກຄົບໃຈບ ອັນນຶ່ງຢ່າໃຫ້ຂ້າ
ຟັງກັບແມ່ບວ່າຂ້ອຍຕົນຜິດກໍດີ ເບັງຕົນຜິດກໍ່ດີ ຕົນຢ່າຫລອນ
ຂ້າຟັງເສັງໃຫ້ຜູ້ອື່ນນະບໍ ຈາຣາບາດກ່ອນເປັນໂທດ ອັນຫນັກຈິງ
ຕາມເຫດນັ້ນໂທດບໍ່ຫນັກ ຢ່າໄດ້ຂ້າທີ່ວ່າໃຫ້ໃສ່ຄອກຂັງໄວ້
ສົນໂທດແລ້ວໃຫ້ປອຍເສັງກາວງກການ ສົມບັດອັນຈັກເກີດມາ
ໃນແຜ່ນດິນນີ້ ຄັນມີຄົນສົມບັດກໍຈິງມີ ຄັນບໍ່ມີຄົນສົມບັດເຂົ້າ
ຂອງກໍຫາບໍ່ໄດ້ແລ ເຫດເຣົາບໍ່ໃຫ້ຂ້າຄົນເພື່ອດັ່ງນັ້ນແລ ອັນນຶ່ງ
ເຈົ້າທັງຫລາຍກໍຢ່າຜິດຢ່າຂ້ອງກັນ ໃຫ້ນ້ອມກັນດູຂອບບ້ານ
ຂອບເມືອງທັງມວນ ອັນນຶ່ງຕ່າງບ້ານຕ່າງເມືອງທັງມວນເຂົາ
ຈັກກະທຳນຽດບຽນບ້ານເມືອງເຣົາສິ່ງໃດ ກໍໃຫ້ຮູ້ໃຫ້ເຫັນແຈ້ງ
ອັນນຶ່ງສອງເດືອນໃຫ້ໃຊ້ເນືອໄກວ້ເຣົາ ເມື່ອຮອດຊຽງດົງຊຽງ
ທອງນັ້ນແລ້ວ ເຣົາຈັກໄດ້ບູຊາແຖນຟ້າ ດືນທັງແຖນຄົມແຖນ
ແຕ່ງແຖນຊັ້ງແຖນເດືອກກະທັງເຖົ້າຍິເຖົ້າໄລ່ແມ່ປ່າງ່າມ ແມ່ມົດ
ບົນທັງເທວະດາອັນຮັກສາຜາດົງແລສົບອູ ທັງສົບຊືອງ ແລ
ແສນເຂົາຄຳກັງສົບຄານສົບໂຮບສົບດົງ ຜາກັບແກດັງບາຍທັງ
ຫລັກໝັ້ນກ້າຍຂັນກັງບາໄຮ່ງຽວ ພູເຂົາກ້າ ທ້າວ
ຄອງປູ່ຫນອງຫລີມພູເຂົາກ້າຫັ້ນ ທັງຜາຂວາງກ້ອນຟ້ານ

ປັ້ນເກັ່ງກ້ອນກ່າຍຟ້າ ອັນຫມາຍໄວ້ທີ່ຊຽງດົງຊຽງທອງນັ້ນເປັນ
ຄວາຍ ມີຝີ ຕົວຄັນເມືອຮອດແລ້ວເຮົາຈັກໄດ້ບູຊາຜີຟ້າຜີແຖນທັງ
ຫລາຍຝູງນີ້ແລະຄັນເຖິງເດືອນຈຽງໃຫ້ຂຶ້ນຊູ ບ້ານຊູເມືອງເດືອນ
ລາມໃຫ້ຮອດເມືອງຊະວາ ຄັ້ນຜູ້ໃດບໍ່ຂຶ້ນເຮົາວ່າບໍ່ຊື່ຕໍ່ເຮົາແລ
ອັນວ່າໃຫ້ລ້ຽງຟ້າລ້ຽງແຖນປູ່ເຈົ້າຟ້າຫລວງໂງ່ມ ຫາກໄດ້ສັ່ງ
ເຮົາໄວ້ໃຫ້ຮູ້ຈັກຫົວໃຈເຈົ້າຂຸນທັງມວນ ອັນປູ່ແຜ່ນດິນເມືອງ
ລ້ານຊ້າງຜູ້ຊື່ແລດີ ຈາກເຈົ້າແຜ່ນດິນນັ້ນແລປູ່ເຮົາເຈົ້າຟ້າ
ຫລວງໂງ່ມສັ່ງໄວ້ສືບໆມາດັ່ງນີ້ແລ ອັນນຶ່ງເຈົ້າທັງຫລາຍຢ່າເອົາ
ໄພ່ເມືອເປັນຂ້ອຍ ໄພ່ຜິດກັນເປັນອັນຫນັກເປັນຕົ້ນວ່າມີຊູ້ຊູ່ເມັຽ
ທ່ານໃຫ້ໄຫມເອົາແກ່ຫ້າບາດ ເຂົາຫາກຂ້າກັນຕາຍເອົາຕົວ
ມັນແທນຜູ້ນຶ່ງອັນຕາຍນັ້ນ ອັນນຶ່ງໄປເສິກຢ່າ ເອົາຄ່າຫົວໄພ່ແຕ່
ບາດນຶ່ງເຖິງສອງບາດຕໍ່ເຖິງຮ້ອຍ ກໍ່ວ່າເປັນຄ່າຫົວແລ້ວເຈົ້າ
ຂຸນຢ່າໄຫມໄພ່ກາຍຮ້ອຍຂຶ້ນໄປເທິງ ຜູ້ໃດບັງໄຫມຈັກເສັຽຫນ້າ
ຕົວມັນຈັກເອົາໃສ່ຄາງໄພ່ ພຣະບາຟ້າສັ່ງສອນເຈົ້າຂຸນທັງ
ຫລາຍມາກຫນັກ ອັນນີ້ວ່າລືມພໍກ່ອນແລ ແຕ່ນັ້ນເຈົ້າ

ຂຸນທັງຫລາຍກໍ່ອອກໄປກິນບ້ານກິນເມືອງຊູ່ແຫ່ງຫັ້ນແລພຣະ
ບາກໍເອົາວິພິນອອກມາທາງບົກຣອດຊຽງດົງຊຽງທອງ ເມື່ອ
ເດືອນສີ່ຂຶ້ນສາມຄ່ຳວັນອັງຄານນັ້ກາບສະງ້າຫັ້ນແລ ບາງະແກ້ວ
ຟ້າຜູ່ເປັນເຈົ້າແຫ່ນ ທັງຊາວບ້ານຊາວເມືອງທັງຫລາຍ ຈິ່ງ
ມາທຳສູ່ເຂົ້າເລົ່າຂວັນກະທຳອຸສາພິເສກ ໃຫ້ຂາເຈົ້າຟ້າກັງ
ສອງຜົວເມັງສເວິງຣາດເປັງ ກ້າວເປັນພຣະບາ ໃນຊຽງດົງຊຽງ
ທອງຫັ້ນ ບືນມີ ລູກຍິງລູກຊາຍ ສືບສາຍໄປບໍ່ໃຫ້ຂາດສືບເຊື້ອ
ຊາດແຜ່ນດິນໄປຫັ້ນແລ

ໄປນຳເອົາ ພຸທສາສນ ມາຈາກຂເມນ

ເມື່ອພຣະບາຟ້ຳພາບບ້ານພາບເມືອງ ທັງມວນໄດ້ແລ້ວ
ຈິ່ງຂຶ້ນມາຢູ່ຊຽງດົງຊຽງທອງ ບານນັ້ງຄົນທັງຫລາຍໃນເມືອງ
ລ້ານຊ້າງທັງມວນເອົາຜີຟ້າຜີແຖນຜີພໍ່ຜີແມ່ເຂົາເປັນ ກີ່ຈັ້ງ
ທີ່ເພິ່ງ ເຂົາກໍຮ້າຍ ບັກເຂົາບໍ່ຮູ້ຈັກຄຸນພຣະພຸດພຣະທັມ ພຣະ
ສົງສັກອັນ ອັນໄດທີ່ອ້າງແກ້ວອ້າງຫານອ້າງຫອກອ້າງ

ເກາບ ນາງແກ້ວຟ້າອັນເປັນລູກພຣະຍານະຄອນຫລວງອັນ
ເປັນເມັຽພຣະຍາຟ້າງຸ່ມນັ້ນ ນາງຈິ່ງຈາກັບຜົວວ່າເມືອງອັນ
ໃດບໍ່ມີສາສນາພຣະເຈົ້າດັ່ງນີ້ ຂ້າກໍ່ບໍ່ເປັນຂ້າຈັກກືນເມືອ
ຫາພໍ່ຂ້າ ຊື່ເມືອງນະຄອນຫລວງພຸ້ນແລ ພຣະຍາຟ້າ
ຜູ້ເປັນຕົວຈິ່ງວ່າຄັນດັ່ງນັ້ນ ເຮົາພາໄປໄຫວ້ພຣະຍານະຄອນ
ຫລວງຂໍເອົາສາສນາພຣະພຸທເຈົ້າມາເຖິງ ຈິ່ງແຕ່ງນາຍຄົນ
ໃຊ້ເອົາຄໍາໄປສາມຫມື່ນເງິນສາມແສນ ແກ້ວນ້ຳດັ່ງ ແກ້ວພູກໍ່
ແກ້ວຈອມເພັດທັງມະນີເປັນບັນນາການ ແກ່ພຣະນະຄອນ
ຫລວງອັນເປັນພໍ່ນາງແກ້ວເກ່ງກັນຍານັ້ນແລ ພຣະນະຄອນ
ຫລວງຈິ່ງຣິນເພິງຫາລູກຕົກອັນນຶ່ງກໍ່ປາກ ໃຫ້ສາສນາສັບພັນ
ບຸເຈົ້າແພ່ໄປທົ່ວຊົມພູທີບທັງມວນ ຈິ່ງ ໃຫ້ມະຫາເຖຣະ
ເຈົ້າຕົນນຶ່ງຊື່ວ່າພຣະ ປາສມັນເຈົ້າຕົນພີກັບທັງພຣະມະເຖ
ຣະເຈົ້າເທພລັງກາ ລູກສິດພຣະທັງສອງມີ ໒໐ ຕົນຈິ່ງນໍາ
ເອົາພຣະບາງເຈົ້າອັນຊາວລັງກາຣອນ ເອົາເງິນເອົາຄໍາມາຕັ້ງ
ໄວ້ທີ່ພຣະເຈດີຫລວງແລ້ວເລົ່ານອກພຣະມະຫາຈຸລນາຄເຖຣະ

ເຈົ້າວ່າ ຕູຂ້າທັງຫລາຍປາກຫລໍ່ພຣະພຸທເຈົ້າໄວ້ໂຜດສັດ

ທັງຫລາຍພຣະມະຫາຈຸລບາຄເຖຣະເຈົ້າ ໄດ້ຍິນຊາວລັງກາ

ວ່າດັ່ງນັ້ນ ຈິ່ງເຂົ້າລະບາບັດທະຍານໄປສູ່ປາຫິມພານທີ່ກ້ອນ

ຫີນເສລາບາດອັນ ມີກັບປາຫິມພານ ແກ່ປະຖຸມກັລປ໌ນຸ້ນ

ຈິ່ງນິມິດເຈົ້າຣັດສີ ຊາວຕົນມີຣັດສີທອງດັ່ງນີ້ ຣັດສີຊາວຕົນນີ້ງ

ສອງຕົນນີ້ແກ່ກວ່າຣັດສີທັງຫລາຍ ມະຫາຈຸລບາຄເຖຣະເຈົ້າຈຶ່ງ

ດ້ານຈາຣະຈາກັບເຈົ້າຣັດສີ ອັນຊາວລັງກາປາກຫລໍ່ຮູບພຣະ

ພຸທເຈົ້ານັ້ນຈິ່ງຮ້ອງທີນບັນທຸກັມພີກລີລາອານະ ພຣະ

ບາອິນວິສຸກັມແກະ ະບຸດທັງພຣະບາອິນແລເທວະດາທັງຫລາຍ

ອັນຢູ່ຊັ້ນຟ້າດຸສິດາຍາມາດາວະດຶງສາ ຈາຕຸມແລເທວະດາ

ທັງຫລາຍ ຄືບຢູ່ໃນແຜ່ນດິນແລຈັກະວານທັງມວນ ພ້ອມກັນ

ມີພຣະບາອິນເປັນປະທານ ແລມະຫາຈຸລບາຄເຖຣະເຈົ້າເປັນ

ປະທານພາຍໃນ ຈິ່ງໃຊ້ຣັດສີສອງຕົນມາເອົາເງິນເອົາ ຄຳ ດອນ

ພຣະບາລັງກາ ອັນຊາວລັງກາຫາກຣອມໄວ້ທີ່ມະຫາເຈດີ

ຫລວງ ຈັກໃຫ້ຫລໍ່ຮູບພຣະພຸທເຈົ້ານັ້ນ ເຈົ້າຣັດສີຈິ່ງໄປຕະ

ຫມວນເອົາເຂົ້າຂອງທັງມວນແລ້ວ ທີ່ເມັດເຂົ້າຟ້າງເອົາແລ ຄືນ
ທີ່ເມັດງາດາໄດ້ແລ້ວພຣະຍາລັງກາຈຶ່ງເອົາມາຮ້ອຍບິກ ຂະນຶ່ງ
ໃຫ້ແກ່ເຈົ້າຣັດສີເອົາຫລໍ່ກັບຂອງຊາວເມືອງ ພຣະຍາແລເທ
ວະດາທັງຫລາຍ ຈຶ່ງອະທິຖານວ່າ ຄຳຂ້ານີ້ໃຫ້ເປັນຄືນ
ທັງສອງ ໃຫ້ເປັນມືທັງສອງ ໃຫ້ເປັນຫົວໃຈ ພະພຸທ
ເຈົ້າເຖີບ ອະທິດຖານແລ້ວ ສັ່ງເຈົ້າຣັດສີທັງສອງວ່າເມື່ອ
ໄດຫລໍ່ພຣະເຈົ້າກູ ຈຶ່ງໃຫ້ມະຫາຈຸລບາຄເຖຣະເຈົ້າມາຫາ
ຜູ້ຂ້າແດ່ຈັກມຸດທາ ພິເສກໃນເມືອງລັງກາພີ້ໃຫ້ລືຊາປາ ກົດ
ທົ່ວທີບທັງມວນ ຄັນພຣະຍາສັ່ງແລ້ວເຈົ້າຣັດສີກໍໄປຮອດມະ
ຫາຈຸລບາຄະເຖຣະ ເຈົ້າຫັ້ນແລ ພຣະຍາອິນແລເທວະດາ
ທັງຫລາຍກໍຮອນເອົາເງິນຄຳແລະທອງ ອັນເປັນຂອງແຫ່ງ
ຄືນມືມະຫາຈຸລບາຄເຖຣະເຈົ້າ ແລະພຣະຍາອິນເປັນປະທານ
ຈຶ່ງໄວ້ພະບັກງານແກ່ວິສຸກັມເທວະບຸດເປັນຜູ້ຫລໍ່ເມືອຈັກຫລໍ່
ນັ້ນເດືອນສີເພັງວັນອາທິດຍາມຈັກໄກ້ຮຸ່ງ ຄັນວ່າຫລໍ່ແລ້ວມະ
ຫາຈຸລບາຄເຖຣະເຈົ້າ ທັງພຣະຍາອິນ ແລເທວະດາທັງ

ຫລາຍຈຶ່ງນຳເອົາມາຕັ້ງໄວ້ຂ່ວງຫລວງກາງເມືອງກາລັງ ຈຶ່ງ
ໃຫ້ເມືອສັບບາແກ່ພຣະຍາລັງກາ ພຣະຍາຈຶ່ງເອົາຣາຊສົມບັດ
ທັງມວນ ມາບູຊາທາດພຣະພຸທເຈົ້າທ້າອົງໃສ່ໃນໄຕຄຳນາ
ຕັ້ງໄວ້ຊ່ອງໜ້າພຣະພຸທເຈົ້າ ແລ້ວຈຶ່ງຖວາຍຣາຊສົມບັດທັງ
ມວນບູຊາພຣະພຸທເຈົ້າ ພຣະຍາລັງກາຈຶ່ງອະທິດຖານວ່າ
ດັ່ງນີ້ຜີວ່າພຣະພຸທເຈົ້າອົງນີ້ຈັກຕັ້ງຢູ່ໂຜດສັດທັງຫລາຍ ໃນ
ລັງກາທີບແລຊົມພູທີບໃຫ້ແລ້ວຄ່ານັກຄຳປາຖນາແຫ່ງຄົນທັງ
ຫລາຍດັ່ງນັ້ນຈົ່ງໃຫ້ທາດພຣະພຸທເຈົ້າທັງຫ້າອົງນີ້ ສະເດັດ
ເຂົ້າໄປດົນຕົວພຣະພຸທະເຈົ້າບະບັດນີ້ເຖີ້ນ ຄັນວ່າພຣະຍາລັງກາ
ອະທິດຖານແລ້ວດັ່ງນັ້ນ ທາດພຣະເຈົ້າກໍສເດັດເຂົ້າໄປໜ້າຜາກ
ອົງນຶ່ງ ສະເດັດເຂົ້າໄປຕ່ອມຄໍອົງນຶ່ງ ສະເດັດເຂົ້າໄປກາງອົກ
ອົງນຶ່ງ ສະເດັດເຂົ້າໄປຝ່າມືຂວາອົງນຶ່ງ ສະເດັດເຂົ້າຝ່າມືຊ້າຍ
ອົງນຶ່ງ ທາດພຣະພຸທະເຈົ້າທັ້ງອົງນີ້ ສະເດັດເຂົ້າໄປດົນຕົວ
ພຣະພຸທຮູບ ເຈົ້າຊ່ອງໜ້າ ມະຫາຈຸລບາລເຖຣະເຈົ້າກັບ
ທັງພຣະຍາລັງກາ ແລະເສນາອຳມາດທັງຫລາຍທັ້ນແລ ເທ
ວະດາທັງຫລາຍແຕ່ໝື່ນໂລກຈັກກະວານທັງມວນ ຕາບຕໍ່

ເຫົາເຖິງຊັ້ນຟ້າຕຸສິດາ ສາທຸການພາຍເຂົ້າຕອກດອກໄມ້ບູຊາ ປະທຸບປະທີບມາກ ປູ່ ໆ ວັນ ໆ ຕື່ນພຣະບາລັງກາຈິ່ງສ້າງ ວິຫານທີ່ຂ່ວງຫລວງຫັ້ນໄວ້ພຣະພຸທເຈົ້າແລ ທີ່ນັ້ນ ບັງມີສະໄຫບ່ອັນນຶ່ງຂ້າງຂ່ວງວິຫານຫັ້ນຊື່ວ່າ ສະບາງພຸດ ທາ ເຂົາລວດວ່າພຣະບາງເຈົ້າອັນນຶ່ງເຂົາເອົານິມິດເນື້ອໄປເອົາ ເງິນຄຳດອນພຣະບາລັງກາຫລໍ່ຫັ້ນແລ ເສນາຊາວເມືອງທັ້ງ ຫລາຍວ່າເອົາຂອງຂາໃສ່ບ້າງໆວ່າດັ່ງນັ້ນ ອັນນີ້ເປັນໂວຫານ ຊາວລັງກາແລ ອັນນຶ່ງຄັນວ່າຜູ້ໃດໄດ້ໄຫວ້ໄດ້ບູຊາ ພຣະພຸທ ເຈົ້າຄວາມອັນຕຸງດແລດັນຫາ ກິເລດ ແລະພຍາດອັນເກີດມີ ໃນເນື້ອຕົນກໍລວດນ້ອຍລວດບາງຫາຍເສັ້ງ ພຣະບາລັງກາຈິ່ງ ເອົານິມິດສາມປະການນັ້ນມາເປັນຊື່ຮຽກ ຊື່ພຣະພຸທຮູບເຈົ້າອົງ ນີ້ວ່າພຣະບາງ ເພື່ອດັ່ງນັ້ນແລ ແຕ່ນັ້ນພຣະເຈົ້າຢູ່ໂຜດສັດແລ ຄົນທັງຫລາຍ ໃນເມືອງລັງກາໄດ້ ໆ ຊົວພຣະບາແລ.

ມະຫາພຸດທະໂຄສາຈານ ເຈົ້າ ໄປຈານຫນັງສືໃນເມືອງ ລັງກາ ມາຮອດເມືອງ ນະຄອນຫລວງຈິ່ງເລົ່າ ຕໍ່ພຣະ ບາ

ນະຄອນຫລວງວ່າ ບັງນີ້ພຣະບາງເຈົ້າຄືນບຶ່ງຢູ່ເມືອງລັງກາ ວິເສດນັກ ບ່ອນໃຫ້ແລ້ວຄຳນັກຄາປາຖນາ ແຫ່ງຄົນທັງຫລາຍ ອົງພຣະເຈົ້າບັ້ນຫນັກ ສີຫມື່ນ ສີ ພັນຫ້າຮ້ອຍ ເປັນປັນຈະໄລ ທະຄ້າທັງເງິນທັງທອງຫລໍ່ຄອມກັນ ອັນນຶ່ງ ຫາກເປັນແຕ່ ຕຳ ນານແຕລັງກາມາກັບພຣະບາງເຈົ້າແລ ພຣະຍານະຄອນ ຫລວງໄດ້ ຍິນຈິ່ງໃຊ້ໄປທຳມິດທຳສະຫາຍກັບພຣະຍາລັງ ກາ ຂໍເອົາທັມໄຕຣປິດົກທັງສາມ ກັບທັງພຣະ ບາງເຈົ້າ ມາໄຫວ້ ນົບໃຫ້ໂຜດສັດທັງຫລາຍໃນເມືອງນະຄອນຫລວງ ພຣະຍາ ລັງກາຈິ່ງໃຫ້ທັມໄຕຣປິດົກ ທັງສາມມາກ່ອນພຣະບາງເຈົ້າ ຈິ່ງຫາກສະເດັດມາໃນເມືອງນະຄອນຫລວງ ເມືອເດືອນສີເພັງ ຢູ່ໂຜດສັດທັງຫລາຍ ໃນເມືອງນະຄອນຫລວງໄດ້ ໗ ຊົ່ວພຣະ ຍາຈິ່ງໄດ້ມາຢູ່ໃນເມືອງລ້ານຊ້າງ ເມື່ອພຣະຍາຟ້າ ງຸ່ມ ແລ ນາງແກ້ວເກງກັນຍາ ອັນໃຫ້ໄປຂໍດອນ ພໍ່ຄົນ ຢູ່ຊື່ວ່າພຣະຍາ ນະຄອນຫລວງນັ້ນແລ ເມືອຈັກເອົາພຣະບາງເຈົ້າມານັ້ນ ມີ ພຣະມະຫາປາສມັນເຈົ້າກັບມະຫາເທພະລັງກາ ເຈົ້າເປັນປະ

ທາບຊາວເຈົ້າມາດອມຊາວກິບ ຈິ່ງໃຫ້ກິບຜູ່ເປັນຄ້ຳກິ່ງຮັກສາ
ພຣະບາງ ເຈົ້າທັງໄຕຣປິດົກທັງສາມແລ ພຣະສິງເຈົ້າທັງ
ຫລາຍບາກບັກຜູ່ນຶ່ງຊື ບໍ່ຣະສິງ ຜູ່ນຶ່ງຊືບໍ່ຣະເດດ ຜູ່ນຶ່ງຊືບໍ່
ຣະສາດ ເຂົາທັງສາມນີ້ ປະກອບດ້ວຍສາສຕຣະເພດທັງມວນ
ມີໃຫຣາສາດເປັນເຄົ້າແລຄົນກາບຊ່າງສັກຊ່າງພຣະຊ່າງເຫລັກ
ຊ່າງທອງຊ່າງຄຳແລ ເຄື່ອງຫລິ້ນ ທັງມວນ ເປັນຕົ້ນວ່າ
ຫລິ້ນຫນັງຣາບກຽບແລະລະເມັງ ເຄື່ອງຫລິ້ນເຄື່ອງເສບທັງ
ມວນຈັດໃຫ້ຄົນຊາວນະຄອນຫລວງມາປາງນັ້ນສື່ບ້ານຄົນ ກັບ
ພຣະປາສມັນ ກັບທັງພຣະເທພລັງກາເຈົ້ານັ້ນພັນນຶ່ງ ຄົນ
ກັບບໍ່ຣະສິງພັນນຶ່ງ ຄົນກັບບໍ່ຣະເດດພັນນຶ່ງ ຄົນກັບບໍ່ຣະສາດ
ພັນນຶ່ງຄົນກັບແມ່ນົມນາງເກິ່ງກັບຍາພັນນຶ່ງ ທັງຍິງຊາຍນ້ອຍ
ໃຫຍ່ ທັງມວນສີ່ ມັນ ຈິ່ງໃຫ້ເມືອງສາຍນາະປັນເມືອງໂອງນາງ
ຄົນທັງມວນຝູງນີ້ ພຣະນະຄອນຫລວງເຈົ້າສິ່ງໃຫ້ມາຄອມພຣະ
ປາສມັນເຈົ້ານັ້ນແລ ມາຮອດເມືອງແກຫັ້ນ ແມ່ນົມນາງແກ້ວເກິ່ງ
ກັບຍາເປັນພຍາດມາບໍ່ໄດ້ ຈິ່ງໃຫ້ຢູ່ທີ່ນຶ່ງວ່າໂຄນໄມ້ຄົນເມືອງ

ແກ່ຫັ້ນ ເຖົ້າເມືອງແກກັບເຈົ້າຫມື່ນແກະຈຶ່ງແທກດິນທີ່ໂຄບ ໄບ່ ໃຫ້ແກ່ແມ່ບີນ ນາງແກ້ວເກ່ງກັບມາແລ້ວ ລວງກວ້າງສອງ ພັນວາ ລວງຍາວສອງພັນວາ ໃຫ້ເຂົາຕັ້ງເປັນບ້ານຂອງເຂົາ ຫັ້ນແລ ຈຶ່ງໄດ້ຊື່ວ່າບ້ານໄບ່ແມ່ບີນເພື່ອດັ່ງນັ້ນແລ ຢູ່ຫັ້ນສອງ ເດືອນ ພຣະຍາຟ້າທັງນາງແກ້ວເກ່ງກັບມາຈຶ່ງແຕ່ງຮັບເອົາ ພຣະບາງເຈົ້າຮອດວຽງຈັນ ເຈົ້າຫມື່ນຈັນ ທັງຊາວບ້ານ ຊາວເມືອງທັງຫລາຍ ຈຶ່ງຮາທນາພຣະເຈົ້າເຊົາທີ່ດອນຈັນ ຫັ້ນກ່ອນ ທ້າວພຣະຍາທັງຫລາຍທັງຊາວບ້ານຊາວເມືອງ ກໍໄປໄຫວ້ ພຣະບາງເຈົ້າ ພຣະມະຫາເຖຣະເຈົ້າທັງສອງ ຈຶ່ງຖາມທ້າວພຣະຍາທັງຫລາຍວ່າ ທີ່ໃດວ່າປາກບາງໄຊ ທີ່ໃດປາກປາສັກ ທີ່ໃດວ່າໂພນສະບັກທີ່ໃດວ່າຫນອງຈັນ ທີ່ ໃດວ່າຫນອງກະແດ ທີ່ໃດວ່າພັງຫມີ້ ພຣະມະຫາປາສມັນ ເຈົ້າຖາມດັ່ງນັ້ນ ເຂົາຈຶ່ງຫາເຖົ້າເມືອງຊຽງງືນມາຖາມ ເຖົ້າ ເມືອງວຽງຈັນແລເຖົ້າເມືອງຊຽງງຸງ ຈຶ່ງບອກຈຶ່ງເລົ່າບ່ອນທີ່ ທັງມວນດັ່ງນັ້ນ ພຣະຈຶ່ງເອົາຕຳນານແຕ່ເມືອງນະຄອນຫລວງ

ນັ້ນມາອ່ານດູແນ່ນດັ່ງເຖົ້າເມືອງແລ ທ້າວພຣະບາທັງຫລາຍ
ບອກແທ້ແລ ພຣະຈິ່ງວ່າອັນທີ່ປາກປ່າສັກຫັ້ນເຈົ້າອັດສີທັງ
ຫລາຍໝາຍຫລັກໄມ້ຈັບໄວ້ໃນທີ່ນີ້ແລ ອັນທີ່ສະໂພນສູງ
ເບື້ອງຕະວັນອອກເລົ່າຂ້າງຫນອງກະແດນມາກ້ຳຕະວັນຕົກ ເຈົ້າ
ອັດສີບັງເອົາຫລັກຫີນອັນນຶ່ງເປັນສີ່ລ່ຽມ ໝາຍໄວ້ແຕ່ທາດ
ພຣະເຈົ້າທັງສີ່ຕົນພຸ້ນ ເປັນຕົ້ນວ່າພຣະກຸກກຸສັນໂທ ພຣະ
ໂກນາຄົມ ພຣະກັສສປະເຈົ້າ ມາໃສ່ສິ່ງຄຳຕົວນຶ່ງ ອະທິດ
ຖານຈຶ່ງເອົາຫລັກຫີນໝາຍໄວ້ ອັນນີ້ເປັນທາດພຣະພຸທເຈົ້າ
ທັງສີ່ພຣະອົງດີຫລີແລ ທາດອັນມາຕົກທີ່ໃນເມືອງສຸວັນນະ
ພູມທີ່ຫລັກຫີນເປັນເຄົ້າແລ ເມື່ອພຣະບາສຣີທັມມະອະໂສກະ
ຣາດ ໃຫ້ພຣະອະຣະຫັນຕາເຈົ້າທັງຫລາຽ ເອົາທາດມາຕົກໃນ
ເມືອງອັນນີ້ທີ່ນຶ່ງວ່າກູ່ພຣະທາງທີ່ນີ້ເປັນເຄົ້າ ທີ່ນຶ່ງພຣະບາ
ຣາບ ທີ່ນຶ່ງພຣະສາດ ທີ່ນຶ່ງພຣະຂຽນທີ່ນຶ່ງພຣະບາຫຽນ
ສອງທີ່ນີ້ຢູ່ໃນເມືອງຂວາງ ໂລກບານທີ່ນຶ່ງວ່າພຣະນົມ ທີ່ນຶ່ງ
ວ່າໂພນຜຶ້ງແດດ ອັນທີ່ປາກປ່າສັກກ້ຳໄຕ້ອັນເຈົ້າອັດສີໃສ່ທາດ

ອູບໄວ້ຈັບໄວ້ບັ້ນ ທາດພຣະເຈົ້າທັງສີໃສ່ອູບແກ້ວທັງສີສຸກ ຈິ່ງອະທິດຖານໄວ້ຫັ້ນແລ ອັນນີ້ເປັນທາດພຣະພຸທເຈົ້າທັງສີກິນນີ້ແລ.

ອັນວ່າເມືອງຊະວາ ອັນເຮົາຈັກເມືອຢູ່ນັ້ນ ອັນນັ້ນຕີນພຣະໂຄດມເຈົ້າໄດ້ມາໂຜດສັດທັງຫລາຍ ຕາມດັ່ງພຣະພຸທເຈົ້າທັງຫລາຍແຕ່ກ່ອນພຸ້ນດີຫລີແລ ທີ່ນຶ່ງວ່າພາບຸນຟາກນ້ຳຂອງກ້ຳເຫນືອເມືອວັນຕົກເຫນືອຄົກທອນຫັ້ນ ທີ່ນຶ່ງວ່າງອນສິບໂຮນເບື້ອງເຫນືອ ທີ່ນຶ່ງວ່າພູເຂົາກ້າທີ່ນຶ່ງລຸ່ມພູເຂົາກ້າກ້ຳມານ້ຳຂອງ ເຂົາວ່າກ້ອນຫີນຫມໍໂລນ ທີ່ນຶ່ງວ່າລຸ່ມພູເຂົາກ້າກ້ຳມາວັນອອກ ໄດ້ສົບຫ້ວຍຊ້າງຍ້ານ ເທິງນ້ຳຄານຫົວບາເຂົ້າຈ້າວ ອະຣະຫັນຕາເຈົ້າຍັງໄວ້ຮອຍຕີນສີ່ອັນ ທີ່ວ່ານີ້ວຕີນບໍ່ສຳແດງທີ່ພູເຂົາກ້າກ້ຳເມືອນ້ຳຄານຫັ້ນແລ ສາສນາພຣະພຸທເຈົ້າອັນມາຕັ້ງຢູ່ທີ່ເມືອງຊະວາ ຍັງຈັກເປັນໄປະທ້າຫ້າພັນວັດສາພຸ້ນດີຫລີດາຍ ພຣະມະຫາປາສມັນເຈົ້າວ່າ ຕຳນານອັນອອກອ່ານໃຫ້ທ້າວພຣະຍາທັງຫລາຍຟັງນີ້

ຫາກມີແຕ່ປະຖົມກັລປ໌ພຸ້ນມາ ອິນພົມທັງຫລາຍຫາກຂຽນ
ໄວ້ໃນແຜ່ນຫີນ ອັນນີໃນເມືອງອິນທະປະຖະນະຄອນພຸ້ນດີຫລີ
ດາຍ ພຣະວ່າດັ່ງນັ້ນແລ ຢູ່ຫັ້ນໄດ້ສາມວັນສາມຄືນຜູ່ມັກ
ເມືອທາງນ້ຳກໍເມືອ ຕົວພຣະມະຫາປາສມັນເຈົ້າທັງສອງ ກໍ
ຈິ່ງເອົາພຣະບາງເຈົ້າອອກມາວຽງຄຳຫັ້ນແລ

ພຣະຍາວຽງຄຳຈິ່ງຣາທນາພຣະພຸທເຈົ້າໄວ້ໄຫວ້ນົບ ເຄົາ
ຣົບບູຊາ ພາະບາງເຈົ້າຈິ່ງກະທຳປະຕິຫານ ເມື່ອກາງຄືນນັ້ນ
ມາກນັກຮຸ່ງເຊົ້າແລ້ວ ເຂົາຈິ່ງແຕ່ງອອກມາ ເມືອງຊະວາ ຄົນຜູ້
ຫາມພຣະເຈົ້ານັ້ນມີແປດຄົນຊູວັນ ເມື່ອຈັກມານັ້ນຍໍບໍ່ໄດ້ຫນັກ
ນັກ ໑ປີ ຄົນຍໍກໍບໍ່ໄດ້ ພຣະທັງສອງ ນາຍທັງສາມອັນຮັກສາພຣະ
ເຈົ້າມາແຕ່ເມືອງນະຄອນຫລວງພຸ້ນ ຈິ່ງຖອດດູສາກ ສາກ
ອອກວ່າພຣະເຈົ້ານັກຢູ່ ຫັ້ນກ່ອນ ເຫດວ່າ ພຣະເຈົ້າ ຫລິງເຫັນ
ພຣະຍາຟ້າງຸ່ມຢູ່ບໍ່ຊອບທັມ ແລຂົ່ມເອົາຄ່າໄຣຄ່ານາຂົ່ມເອົາລູກ
ຍິງນາງສາວເພື່ອນແລເອົາເມັຽເພື່ອນ ມາຢູ່ນາບອນຂົ່ມເອົາ
ບ້ານເອົາເມືອງເພື່ອນ ຂ້າເຈົ້າບ້ານເຈົ້າເມືອງເສັຽ ຄົນທັງຫລາຍ

ຈັກໄດ້ຂັບໜີຈາກເມືອງລ້ານຊ້າງ ເພື່ອນັ້ນແລ ອັນນຶ່ງອາຍຸ
ບາງແກ້ວເກ່ງກັບບາກໍບໍ່ໝັ້ນຍືນຫລາຍ ພຣະບາງເຈົ້າຫລິງ
ເຫັນສິ່ງນັ້ນ ຈິ່ງບໍ່ມາຮອດເມືອງຊະວາເພື່ອດັ່ງນັ້ນແລ ແລປູ່ໂຜດ
ສດທັງຫລາຍນັ້ນກ່ອນ ພາຍໜ້າສ່ຳລູກສ່ຳ ຫລານອັນເປັນ
ເຈົ້າແຜ່ນດິນຊຽງດົງຊຽງທອງ ຊອບໂລດຊອ່າງທຳພຣະເຈົ້າຈິ່ງ
ມາໂຜດສັດທັງຫລາຍແລ ແຕ່ນັ້ນພຣະມະຫາປາສມັນເຈົ້າກັບ
ທັງເທພລັງກາເຈົ້າ ຈິ່ງໄວ້ພຣະບາງທີ່ວຽງຄ່ຳນັ້ນແລ ພຣະມະ
ຫາເຖຣະເຈົ້າທັງສອງກັບທັງນາຍສາມຄົນນັ້ນ ຈິ່ງເອົາໝູ່ຊຸມ
ຂຶ້ນມາຮອດເມືອງຊະວາກ່ອນ ພຣະຈິ່ງມາຕ້ານຈາຣຈາ ກັບພຣະ
ບາຟ້າແລເສນາອາມາດທັງຫລາຍ ພຣະຈິ່ງເອົາຄຳນານແຕ່
ເມືອງນະຄອນຫລວງມາອ່ານຕາມຕຳນານ ໃຫ້ພຣະບາແລເສ
ນາອຳມາດຟັງກໍແມ່ນບ່ອນທີ່ອັນພຣະພຸທເຈົ້າທຳນາຍ ໄວ້ນັ້ນ
ແລ ທີ່ນັ້ນພຣະພຸທໂຄດົມເຈົ້າມາໂຜດສັດທັງຫລາຍ ໄວ້ບາທ
ລັກກ້າຊ້າຍທີ່ບໍ່ສ່ຳແດງນີ້ວໃຫ້ປາກົດແລ ຕຳນານຫາກ
ອອກວ່າດັ່ງນັ້ນ ພຣະມະຫາປາສມັນເຈົ້າຈິ່ງມາກໍ່ເຈດີວີຫານ

ຕາມນິທານຕໍານານ ແຕ່ອິນທະປັດຖະນະຄອນຫລວງພຸ້ນມາແລ ອັນວ່າເມືອງລ້ານຊ້າງຊື່ວ່າ ສຸວັນນພູມີນີ້ ກໍຫາກມີໃນຕໍານານພຣະບາອິນຂຽນໄວ້ທີກ້ອນຫີນໃນເມືອງອິນ ທະປັດຖະນະຄອນພຸ້ນແລ

ແຕ່ນີ້ເມືອໜ້າ ຈັກວ່າທີ່ພຣະບາຟ້າ ແຕ່ງບ້ານແຕ່ງເມືອງອັນຊອບແລບໍ່ຊອບນີ້ກ່ອນແລ ພາຍໜ້າພຸ້ນ ຍັງຈັກມີສໍ່າຫລາຍສໍ່າເຫລຍ ຜູ້ມີບຸນສົມພານ ໄດ້ມາຕັ້ງ ພຣະເຈດີອັນໃຫຍ່ອັນຫລວງ ເປັນທີເພິ່ງແກ່ສັດທັງຫລາຍດີຫລີ ພຣະບາງເຈົ້າ ຈິງຈັກມາໂຜດສັດຍາມນັ້ນ ທີ່ຊຽງດົງ ຊຽງທອງນັ້ນແລ ພຣະບາຟ້າງຸ່ມມີລູກຊາຍສອງຄົນ ຜູ້ນຶ່ງຊື່ວ່າ ທ້າວອູ່ນເຮືອນຜູ້ນຶ່ງຊື່ວ່າທ້າວຄໍາກອງ ເປັນແສນເມືອງແກ່ ທ້າວອຸນເຮືອນຜູ່ເປັນພຣະຍາສາມແສນໄທນັ້ນແລ ລູກຍິງຜູ້ນຶ່ງ ຊື່ວ່ານາງແກ້ວເກດເກສີ ມີນໍານາງແກ້ວເກ່ງກັນ ຍາລູກພຣະບານະຄອນຫລວງນັ້ນແລ ເມືອພຣະບາຟ້າງຸ່ມອອກຈາກນະຄອນຫລວງ ມີອາຍຸໄດ້ ໒໑ ປີ ມາຜາບບ້ານຜາບເມືອງທັງຫລາຍໄດ້ ໔ ປີ ຈິງມາ

ນັ່ງຊຽງດົງຊຽງທອງປີຖ້ວນ ໕ ສເວີຍຣາດບ້ານເມືອງນັບແຕ່ອາ
ນທ່ານໄດ້ ໒໕ ປີ ຈຶ່ງຣອດຊຽງດົງຊຽງທອງຫັ້ນແລ ນັບແຕ່ນັ້ນ
ໄປໄດ້ ໑໕ ປີ ນາງແກ້ວເກ່ງກັນຍາ ຈຶ່ງຕາຍ ແຕ່ນັ້ນທ່ານປູ່ບໍ່
ຊອບໂລກຊອບທັມ ຕັດຖ້ອຍສວນຄວາມອັນຜິດທ່ານວ່າແມ່ນ
ອັນແມ່ນທ່ານວ່າຜິດ ອັນນຶ່ງຂ້ອຍຄົນເສນາອຳມາດ ທ່ານອັນ
ລູກແຕ່ນະຄອນຫລວງມານັ້ນ ທ່ານລ້ຽງດູໃຫ້ເພິ່ງໃຈເຂົາຊູ່ຄົນ
ແມ່ນເຂົາຜິດບໍ່ວ່າສັງ ອັນນຶ່ງເສນາມົນຕຣີແຕ່ພໍ່ ແຕ່ເກົ່າອັນ
ບໍ່ໄດ້ໄປດອມຕົວ ທ່ານລວດຂຶ້ນເສັ້ຽເຂົາຜິດນ້ອຍວ່າຜິດຫລາຍ
ປ້ອນໂທດທັງຫລາຍຝູງນີ້ ເສນາອຳມາດໄທຍ໌ທັງ ຫລາຍກັບ
ທັງຊາວເມືອງ ແລະພຣະສົງພ້ອມກັນຈຶ່ງຂັບພຣະຍາຟ້າງຸ່ມ
ໜີຫັ້ນແລ ເມື່ອທ່ານໜີນັ້ນມີອາຍຸໄດ້ ໕໗ ປີ ທ່ານໜີ
ທາງກາວນ້ຳເມືອຕົກ ເມືອງນ່ານ ຢູ່ໄດ້ ໒ ປີ ທ່ານຈຶ່ງ
ຕາຍເມື່ອທ່ານຕາຍນັ້ນ ຈຶ່ງອະທິດຖານໄວ້ວ່າດັ່ງນີ້ ດູກກູນີ້ໃຫ້
ສຶງເມືອເມືອງລ້ານຊ້າງແດ່ ວ່າດັ່ງນີ້ ເຂົາຈຶ່ງສ້າງວັດສົບ ກະ

ດູກອັນນີ້ງ ຈິ່ງໄດ້ຊື່ວ່າ ວັດພຣະຍາຟ້າ ພຣະຍາບ່ານຈຶ່ງ
ເອົາກະດູກຫນ້າຜາກຫຍິບສິບໃສ່ງາຄວາງນີ້ງໄວ້ບູຊາ ພຣະພຸທ
ເຈົ້າຫັ້ນ ຈິ່ງຂຽນຄວາມອັນພຣະຍາຟ້າສັ່ງໄວ້ນັ້ນ ໃສ່ໃບທຸງ
ຫັ້ນວ່າດັ່ງນີ້ ທຸງ ເດີ້ວນີ້ແລກະດູກຫນ້າຜາກພຣະຍາຟ້າ ນີ້ແດ່
ວ່າບຸນທ່ານຍັງໆຈັກໄດ້ເລີກລາສບາພຣະພຸທເຈົ້າ ເມື່ອສຳລູກ
ສຳຫລານສຳເຫລນພຸ້ນ ຈິ່ງໃຫ້ລົມພັດດັດເອົາທຸງອັນນີ້ເມືອ
ຮອດເມືອງລ້ານຊ້າງ ໃຫ້ລູກທ່ານໄດ້ສ້າງເຈດີວິຫານໄວ້ດັ່ງທ່ານ
ອະທິຖານນີ້ເຖີ້ນ ພຣະຍາບານອະທິຖານແລ້ວ ເທວະດາຈຶ່ງ
ໃຫ້ລົມພັດເອົາມາຕົກດອນສູງທີ່ນີ້ງ ເຂົາຈຶ່ງເອີ້ນວ່າ ດອນ
ວານນັ້ນແລ

ເມືອນັ້ນ ທ້າວອຸນເຮືອນຜູ່ລູກພຣະຍາຟ້ານັ້ນ ຈຶ່ງ
ເອົາທຸງປົບຫນ້າຜາກອັນນັ້ນມາດັ່ງສ້າງເປັນເຈດີທາດກູ່ໄດຫັ້ນແລ
ພູກູ່ກາງນັ້ນກະດູກຟ້າງຄຳຣຽວ ພູກູ່ເຫນືອນັ້ນກະດູກຟ້າມືດ
ແລ

ບັດນີ້ ຈັກຈາພົງສາທ້າວພຣະຍາ ໄປພາຍຫນ້າ ເສນາ

ທັງຫລາຍພ້ອມພຣະສົງເຈົ້າເປັນຕົ້ນວ່າ ພຣະມະຫາສາມີ ເຈົ້າ
ທັງສອງເປັນປະທານ ຈຶ່ງເອົາທ້າວອຸ່ນເຮືອນມາເປັນພຣະຍາ
ແທນ ຈຶ່ງໃສ່ຊື່ວ່າພຣະຍາສາມແສນໄທຫັ້ນແລ ຈຶ່ງເອົານາງ
ນ້ອຍນົງຣຽວລູກພຣະຍາຄຳຣຽວ ອັນເປັນລູກຍາວນ້ອງພໍ່
ພຣະ ສາມແສນໄທຈຶ່ງເອົາມາເປັນນາງແທນ ຈຶ່ງໃສ່ຊື່ວ່າ
ບົວແທນຫັ້ນແລ ຍັງມີພີ່ລ້ຽງຜູ້ນຶ່ງຊື່ວ່ານາງກາ ຣູ້ແຕ່ງຣູ້ແປງ
ຊູ່ສິ່ງຊຸເບື້ອງຫັ້ນແລ ແຕ່ນັ້ນບ້ານເມືອງກໍກ້ວາງໄປພາຍໜ້າ
ສາສນາພຣະພຸທເຈົ້າກໍ່ຣຸ່ງເຮືອງໄປຫັ້ນແລ ແລ້ວຈຶ່ງມາສ້າງ
ວັດແລ້ວ ຈຶ່ງເອົາແກ້ວລູກນຶ່ງອັນນາງແກ້ວເກິ່ງກັນຍາ ອັນເປັນ
ແມ່ພຣະຍາສາມແສນໄທນັ້ນ ເອົາແຕ່ເມືອງນະຄອນຫລວງມາ
ນັ້ນໃສ່ໃນອົກພຣະພຸທເຈົ້າກໍ່ຣຸ່ງເຮືອງໄປຫັ້ນແລ ຈຶ່ງໃສ່ຊື່ວ່າວັດ
ແກ້ວຫັ້ນແລ ເມື່ອສ້າງວັດແກ້ວແລ້ວ ຈຶ່ງຣາທນາພຣະເທພະ
ລັງກາເຈົ້າມາເປັນພຣະມະຫາສາມີເຈົ້າວັດແກ້ວຈຶ່ງໃຫ້ຂະໄພ
ແກ່ສັດທັງຫລາຍຜູ້ຄວນຕີຄວນຜູກ ຄວນເງິນຮ້ອຍເງິນພັນຂັນ
ຄ່າຄຳກໍດີ ຄັນໄດ້ເຂົ້າມາເຂດວັດແກ້ວແລ້ວລວດບໍ່ໃຫ້ກະທຳ

ບາບບໍ່ໃຫ້ເສັ່ງກົ໊ບເສັ່ງເງິນສັງ ທໍ່ໃຫ້ມີເຂົ້າຕອກດອກໄມ້ເຜິ້ງ
ທຽນສິນມາ ແລ້ວບອກລອບໃຫ້ໄປຫາວຽກຫາການຕັ້ງເກົ່າ
ອະພັບໂທດເສັ່ງທັງມວນຫັ້ນແລ ຈິ່ງໃຫ້ເຂດໃຫ້ແດນໃຫ້ທານ
ບ້ານເມືອງທັງມວນກັບວັດແກ້ວ ເປັນອັນມາກອນຫລາຍນັກ
ທັງໃຫບ້ານໄຜ່ແມ່ນິມະທັງລົວແມ່ນິມ ໃຫ້ທານກັບວັດແກ້ວຫັ້ນ
ແລ ເຈົ້າແຜ່ນດິນທັງສອງຜົວເມັ່ງ ຈິ່ງລັງຄໍາປາຖນາວ່າ ເຜືອ
ຂ້າທັງສອງຂໍໃຫ້ມີລູກຊາຍສອງຄົນຜູ່ປະເສີດ ລູກຍິງສອງ
ຄົນຜູ່ປະເສີດ ມີຜຍາ ປັນຍາຊູ່ສິງຊູ່ເບື່ອງ ອັນນຶ່ງອານິສົງຜົນ
ອັນໄດ້ສ້າງວິຫານແລະພຣະພຸທຮູບເຈົ້ານີ້ ໃຫ້ໄປຮອດຈອດ
ເຖິງປູ່ຍ່າຕາຍາຍເປັນຕົ້ນ ວາຂຸນບໍ່ຣົມຣາຊາທິຣາດ ແລນາງ
ຍົມມະພາລາທັງນາງນ້ອຍເອັ້ຄແຄງທັງເຜົ່າພົງວົງສາ ຊູ່ຄົນ
ຜູ້ຕາຍໄປແລ້ວກໍດີ ຜູ້ຍັງບໍ່ດັບກໍດີ ຢູ່ໃນທຸກໃຫ້ພົ້ນຈາກທຸກ
ຢູ່ໃນສຸກແຮ່ງໃຫ້ເຖິງສຸກຜູ້ຍັງບໍ່ດັບນີ້ ເປັນລົ້ນວ່າເຈົ້າແສນແລະ
ຫມື່ນຫລວງແລະເສນາອໍາມາດ ຂຸນຫມື່ນຂຸນພັນກວານນ້ອຍ
ກວານໃຫຍ່ ໄພ່ຟ້າຫນ້າໄທທັງຫລາຍ ຜູ້ໄດ້ສ້າງໄດ້ກະທໍາ

ດອນກໍດີ ບູ ໄດ້ອະນຸໂມທນາດອນກໍດີ ເພໍ່ແຕ່ທູໄດ້ຢືນກໍດີໃນ
ເຂດແດນເມືອງລ້ານຊ້າງ ທົ່ວຊູ່ເທົ່ງຊູ່ກໍຖືງ ພຣະຍາສານ
ແສນໄທເຈົ້າທັງປິວແທ່ນຫລັ່ງນ້ຳແຜ ໄປໃຫ້ແກ່ສັດທັງຫລາຍ
ດັ່ງນີ້ແລະປູໄປໄວ້ສອງເດືອນມາ ນາງຈິ່ງປັນເຫັນພູຊວງເປັນ
ຄຳທັງມວນ ຣຸ່ງເຊົ້າແລ້ວນາງຈິ່ງເລົ່າຕໍ່ພຣະຍາຕົນເປັນຜົວ
ແລ ແຕ່ນັ້ນພຣະຍາຈິ່ງລຽກຫາຍັງນັກປາດທັງຫລາຍມາເປັນ
ຕົ້ນວ່າ ບໍຣະສິງ ບໍຣະເດດ ບໍຣະສາດ ພຣະຍາຈິ່ງໃຫ້ນາງ
ເລົ່ານິມິດຄາຝັນວ່າ ເຫັນພູຊວງນ້ອຍພູຊວງຫລວງເປັນຄຳ
ຫມົດທຸງມະນບຣານຈິ່ງຖວາຍວ່າ ເຈົ້າຈັກມີລູກຊາຍຜູ້ປະເສີດ
ເທາະເພື່ອນາງຝັນນັ້ນແລ ເດືອນສາມອອກຫ້າຄ່ຳວັນອາທິດ
ແຕ່ນັ້ນ ນາງກໍກະອິຣຸດັບໄປເຖິງເດືອນ ໑໒ ອອກຄ່ຳນຶ່ງ ຈິ່ງ
ໄດ້ລູກຊາຍຜູ້ນຶ່ງອັນມີ້ເດືອນແລ້ວຈິ່ງໃສ່ຊື່ວ່າ ເຈົ້າລ່ຳຄຳແດງ
ຫັ້ນແລ ປູປີ່ນຶ່ງເຈົ້າເມືອງລານນາຈິ່ງເອົານາງນ້ອຍອ່ອນສ່
ທັງເອົາເນື່ອງຖິ່ນ ທັງ່ເກເມືອງພະຍາວມາດອນຜັນນຶ່ງ ຄືວ
ພັນນຶ່ງພຣະຍາສານແສນໄທ ເຈົ້າຈິ່ງໃຫ້ເປງໂຮງຫລັງນຶ່ງທີ່
ສູງຫລັງນຶ່ງມະປັນທໍ່ນອນ ຈິ່ງໃສ່ຊື່ວ່າທໍ່ສູງຊຽງກາງ ຄືໄທ

ເມືອງພຣະບາພັນຄົວນັ້ນ ຈຶ່ງໃຫ້ປູ່ນອນທ້າຍພູເຂົາກ້າ ຈຶ່ງ
ໃສ່ຊື່ວ່າງ່ອນພຣະບາວ ປູ່ໄດ້ປີນຶ່ງຈຶ່ງມີລູກຊາຍຜູ້ນຶ່ງຕົນ ຈຶ່ງ
ໃສ່ຊື່ວ່າທ້າວກ້ອນກໍ່ເມືອງໃຫຍ່ມາແລ້ວພໍ່ຈຶ່ງໃຫ້ໄປກິນເມືອງ
ຊຽງສາ ຈຶ່ງໃສ່ຊື່ວ່າຊຽງສາ ພຣະບາໄບທິຍາ ຈຶ່ງສິ່ງລູກສາວ
ຜູ້ນຶ່ງຊື່ວ່າ ນາງແກ້ວຍອດຟ້າມາເປັນເມັຽ ພຣະບາສາມແສນ
ໄທເຈົ້າຈຶ່ງແປງ ໂຮງຫລວງຫລັງນຶ່ງເຫນືອສິບດົງໃຫ້ປູ່ຈຶ່ງໃສ່
ຊື່ວ່າໂຮງຊຽງໃຕ້ຫັ້ນແລ ນາງມາຢູ່ປີນຶ່ງ ຈຶ່ງໄດ້ລູກຊາຍຜູ້ນຶ່ງໃສ່
ຊື່ວ່າທ້າວວັງບຸຣີແລ ພໍ່ໃຫ້ໄປກິນເມືອງປາສັກເລົາມີລູກຍິງຜູ້ນຶ່ງ
ຊື່ວ່ານາງມະຕາໄກ ໃຫຍ່ມາໄດ້ ໕ ຂວບ ຈຶ່ງຕາຍເສັຽ ຜູ່ພີ່
ອ້າຍເອົາດູກລ່ອງມາສ້າງໄວ້ເກີ້ນຶ່ງ ຈຶ່ງໃສ່ຊື່ວ່າວັດສີຫອມ ຈຶ່ງ
ມາມອບວັດອັນນັ້ນໄວ້ກັບວັດແກ້ວເມືອງຊະວາຫັ້ນແລ ປູນ້ອຍ
ນຶ່ງພຣະບາຊຽງຮຸ່ງຈຶ່ງເອົາລູກສາວມາໃຫ້ເປັນເມັຽ ພຣະບາ
ສາມແສນໄທຈຶ່ງໃຫ້ປູ່ທຳທ້າຍຊຽງທອງ ຈຶ່ງໃສ່ຊື່ວ່າແມ່ຫ່ງວ
ໂຮງທອງຫັ້ນແລ ມີລູກຊາຍນຶ່ງຈຶ່ງໃສ່ຊື່ວ່າທ້າວກ້ອນຄຳ ພໍ່
ໃຫ້ໄປກິນເມືອງປາກຫ້ວຍຫລວງ ເຈົ້າປາກຫ້ວຍຫລວງມີ
ລູກຊາຍນຶ່ງ ໃສ່ຊື່ວ່າ ທ້າວຕອນຄຳເປັນຫລານພຣະບາສາມ

ແສນໄທ ນັບແຕ່ພຣະຍາສາມແສນໄທມີອາຍຸໄດ້ ກລ ປີ ທານໍ
ທາຍແຕ່ນ້ອຍວ່າ ຈັກຕາຍດືກນ້ຳ ມາໄດ້ກິນນ້ຳນີ້ ສັງຂານໄປ
ແຄ້ນນ້ຳຕາຍທີ່ໂຮງຊຽງທອງຫັ້ນແລ ນາງແທ່ນຜູ່ເປັນເມັຽ ຈຶ່ງ
ເອົາລູກຊາຍຜູ່ຊື່ວ່າສຸວັນນະປາຣັງເປັນເຈົ້າແຜ່ນດິນພຣະຍາຈຶ່ງ
ມາສ້າງວັດຫລັງນຶ່ງ ສິບກະດູກທີ່ວ່າຫ່ຂົ້ນແຖນ ເມື່ອສ້າງແລ້ວ
ໃສ່ຊື່ວ່າ ວັດສວນແຖນຫັ້ນແລ ເລົ່າສ້າງອຸໂບສົດຫລັງນຶ່ງທີ່
ກົງເມືອງຫັ້ນໄວ້ ຈຶ່ງຣາທນາມະຫາສັດທາທິໂກເຈົ້າມາເປັນ
ມະຫາສາມີເຈົ້າວັດໂບດ ເລົ່າເອົາມະຫາສມຸດເຊົ້າມາເປັນ
ສັງຄະເສນາເຈົ້າປູ່ວັດສວນແຖນ ຈຶ່ງມາໃຫ້ທ່ານຜູ່ນຶ່ງ ຊື່ວ່າ
ທ່ານລຸງລອດມາເປັນເສດຖີໃຫ້ຄ້ຳຄິງວັດສວນແຖນ ຈຶ່ງຮຽກ
ວ່າເສດຖີລຸງລອດວັດສວນແຖນ ນີ້ຫາກເປັນວັດສິບກະດູກ
ພຣະຍາສາມແສນໄທເຈົ້າຫັ້ນແລ ພຣະຍາສຸວັນນະປາຣັງຈຶ່ງ
ໄດ້ມາເປັນເຈົ້າແຜ່ນດິນ ຈຶ່ງຝັນວ່າໄດ້ກິນນ້ຳໃຈໄດ່ກະເສລາ
ແລໄດ້ດອກບົວໃນສະຫັ້ນ ຈຶ່ງເລົ່າຄ່າ ຝັນ ແກ່ນັກ ປາດ ທັງ
ຫລາຍຫັ້ນແລ ເຂົາຈຶ່ງທາຍວ່າ ເຈົ້າກູຈັກໄດ້ລູກຊາຍຜູ່

ປະເສີດຄືນນຶ່ງແລ ແຕ່ນັ້ນໄປພຣະຍາຈິ່ງມີລູກຊາຍຜູ້ນຶ່ງ ຈິ່ງໃສ່ຊື່ວ່າທ້າວໄຄ່ບົວບານຫັ້ນແລ ພຣະຍາສຸວັນນະປາຣົງ ມີອາຍຸໄດ້ ໖໔ ປີຈິ່ງຕາຍ ເຂົາຈິ່ງເອົາໄປເຜົາທີ່ນຶ່ງຈິ່ງສ້າງ ວັດຫລັງນຶ່ງສົບກະດູກ ຈິ່ງໃສ່ຊື່ວ່າວັດມະໂນຣົມຫັ້ນແລ ແຕ່ຫັ້ນເມືອພາຍໜ້າຈິ່ງເອົາ ເຈົ້າພຣົມກຸມານຫລານພຣະ ຍາສາມແສນໄທ ເປັນພຣະຍາແທນໄດ້ສາມປີ ມະຫາເທ ວີເອົາຫລານນ້ອຍໄປຂ້າເສັຽ ທີ່ຄົກທອນນັ້ນແລ ແຕນແຕ່ ນັ້ນໄປນາງເທວີຜູ້ເປັນລູກຟ້າຄາຣຽວນັ້ນ ຊື່ນ້ອຍວ່ານາງອາມ ພັນ ເປັນເມັຽເຄົ້າພຣະຍດ ສາມແສນ ໄທນັ້ນແລ ແຕ່ງບ້ານແປງ ເມືອງບໍ່ເປັນ ພຣະສັງຄະເຈົ້າທັງຫລາຍເສນາ ອຳມາດພີ່ລ້ຽງ ຜູ້ຊື່ວ່ານາງການັ້ນຫ້າມຂໍວ່າ ຢ່າໄຫ້ເຮັດ ໃຫ້ກະທຳກໍບໍ່ຟັງ ແຕ່ນັ້ນບ້ານເມືອງລວດເສົ້າສູນເສັຽຫັ້ນແລ ແຕ່ນັ້ນຈິ່ງມາເອົາ ທ້າວໄຄ່ບົວບານ ແທນເປັນພຣະຍາໄດ້ ໙ ເດືອນນາງເທວີຈັກ ຂ້າເສັຽ ເຈົ້າຮູ້ແລ້ວລັກໜີນາງເທວີໃຫ້ ໄປນຳທັນທີ່ຜາຄາວ ເຂົາຈິ່ງປົງເສັຽຫັ້ນ ນາງເທວີຈິ່ງໃຫ້ໄປເອົາ ທ້າວຊຽງລາອົບ ເປັນລູກນາງນ້ອຍອ່ອນສີ ມາເປັນພຣະຍາໄດ້ປີປາຍເຖິງນຶ່ງນາງ

ເທວີໃຫ້ເອົາໄປຂ້າເສັຽທີ່ທ່າກເຮືອທັ້ນແລ ແຕ່ນັ້ນບາງກາກໍຫນີ
ເສັຽ ມາຕັ້ງບ້ານຢູ່ທີ່ນຶ່ງຊື່ວ່າງ່ອນພູສີ ເຜົ່າພົງວົງສາ ເຈົ້າແຜ່ນ
ດິນລວດຫນີໄປຄວ່າລື້ຄວ່າຊອນຢູ່ທັ້ນແລ ບາງເທວີຈຶ່ງໃຫ້ໄປ
ເອົາພຣະຍາປາກຫ້ວຍຫລວງ ມາເປັນພຣະຍາໄດ້ ໑໐ ເດືອນ
ຈຶ່ງຂໍຫນີໄປຢູ່ປາກຫ້ວຍຫລວງດັ່ງເກົ່າ ໄດ້ຂວບນຶ່ງຕາຍເສັຽ
ເຂົາຈຶ່ງເຜົາເສັຽ ທີ່ປາກຫ້ວຍຫລວງກ້າເຫນືອ ຈຶ່ງສ້າງວັດຫລັງ
ນຶ່ງຊື່ວ່າວັດສົບກະດູກພຣະຍາປາກຫ້ວຍຫລວງ ແລບາງເທວີ
ໃຫ້ມາເອົາເພັຽຂວາປະສັກເມືອເປັນ ພຣະຍາແທນບໍ່ນັກມາ
ຍັງມີຜູ້ນຶ່ງຊື່ວ່າຫມໍ່ມົນ ນັນເອົາຂ້ອຍຈື່ຂອງພຣະຍາສາມແສນ
ໄທເປັນເມັຽ ນັນຈຶ່ງມີລູກວອນຜູ້ນຶ່ງ ຊື່ວ່າທ້າວ ຄຳເກີດ
ນັນຜູ້ເມັຽຈຶ່ງບອກຊື່ນ້ຳ ເສນາມົນຕຣີທັງຫລາຍ ເຂົ້າຂອງອັນ
ໃດດີນັ້ນກໍບອກລູກນັ້ນໄວ້ໃຫ້ ຈໍ່ໄດ້ຊູ່ສິ່ງອັນ ນັນຈຶ່ງວ່າລູກກູ
ນີ້ພຣະຍາສາມແສນໄທມາເກີດດາຍ ຄວາມອັນນັ້ນລວດ ຊ່າໄປ
ຮອດພຣະຍາເທວີງ ຈຶ່ງໃຫ້ລອງມາເອົາເມືອເປັນ ເຈົ້າແຜ່ນດິນ
ເຫດເພື່ອວ່າເຊື້ອທັງຫລາຍ ຮັກພຣະຍາສາມແສນໄທເຈົ້າ ຄັນ
ໄປເກີດທີ່ໃດທັງຫລາຍກໍນຳເອົາເພື່ອສິ່ງນັ້ນ ໄດ້ມາເປັນເຈົ້າແຜ່ນ

ດິນແລ້ວຈິ່ງສ້າງວັດຫລັງນຶ່ງເໜືອສວນແຖນ ຫັ້ນແລ ນາງເທ
ວີຈິ່ງໃສ່ຊື່ວ່າວັດສີເກີດນັ້ນ ນັບເປັນເຈົ້າແຜ່ນດິນ ໄດ້ສອງ ປີປາຍ
ສອງເດືອນນັບເປັນຮຸງ ທ້ອງແຕກຕາຍ ນາງເທວີແລຫນບໍ່ນິນ
ຜະເປັນນໍ່ຈິ່ງມາສ້າງວັດສິບກະດູກ ທີ່ໃຕ້ບ້ານເຈົ້າແມ່ກາຫັ້ນ
ຈິ່ງຊື່ວ່າວັດມີນຫັ້ນແລ ນາງເທວີນັ້ນ ນັບຮ້າຍກ້າແຂງເໝືອ
ນັບເອົາລູກປູ່ ລ້ຽງພຣະບາສ້າເປນຜົວນັບ ມັນ ໃສ່ຊື່ວ່າແສນ
ຫລວງຊຽງລໍ ທັງຫລາຍ ຈິ່ງວ່າຂານີ້ບໍ່ຊອບໂລກທັມດີຫລີແລ
ເສນາທັງຫລາຍ ຈິ່ງເອົາອອກຈາກໂຮງຊຽງທອງ ໄປຂ້າເສັຽ
ທີ່ພາດ່ຽວຟາກໃນຊຽງທອງຫັ້ນແລ ຍາມເມື່ອນາງເທວີຕາຍນັ້ນ
ອາຍໄດ້ ໙໕ ແມ່ກາຈິ່ງມາຂໍເອົາຄານດອນເສນາທັງຫລາຍ
ເນື້ອເຜົາເສັຽບ້ານທ່ານຫັ້ນ ຈິ່ງສ້າງວັດຫລັງນຶ່ງສິບກະດູກນະ
ທາງເທວີ ຈິ່ງໃສ່ຊື່ວ່າວັດແມ່ກາຫັ້ນແລ ເຈົ້າແມ່ການີ້ເປັນພີ່
ລ້ຽງນະທາງເທວີແລ ฯ

ບັດນີ້ຈັກເລົ້າພົງສາແມ່ກາກ່ອນແລ ແມ່ການີ້ລູກຜູ້
ນຶ່ງເປັນນາງສອງໝື່ນໄດ ນາງນັ້ນມີລູກສອງຄົນ ຜູ່ພີ່ອ້າຍ

ໄດ້ເປັນພຸມເຫນືອເມືອປາງພຣະວິຊູລຣາດເຈົ້ານີ້ແລ ເຈົ້າພູມ
ເຫນືອນັ້ນໄດ້ເອົານ້ອງພຣະວິຊູລເປັນເມັຽ ຈິງມີລູກຊື່ວ່າພຣະ
ສອງເມືອງ ອັນທັງຫລາຍວ່າພຣະຣູບຫັ້ນແລ ແມ່ພຣະສອງ
ເມືອງຕາຍເຈົ້າພຸມເຫນືອ ຜູ້ຊື່ວ່າເຈົ້າຊ້າຍນັ້ນ ຈິງມາເອົາພີ່
ເອື້ອຍພຣະຍາກາງ ທັງເປັນພີ່ເອື້ອຍຕົນພຣະໄຊຍະເຊດຖາທິ
ຣາດເຈົ້ານັ້ນແລ ສາມຕົນນີ້ເປັນລູກພໍດຽວແມ່ດຽວກັນ ເຊື້ອ
ພຣະຍາຈິກຄຳເຈົ້າພູມເຫນືອຈິງມີລູກນຳຜູ້ນຶ່ງ ໃສ່ຊື່ວ່າບຸນຍະ
ສານ ອັນໄດ້ເປັນແສນເມືອງລ້ານຊ້າງ ຈິງໃສ່ຊື່ວ່າອຸປະຣາຊາ
ຫັ້ນແລ ອັນນີ້ນິງສາເຈົ້າແມ່ກາແລພຣະຍາຈິກຄຳເປັນໂຄດ
ເປັນວົງອັນດຽວກັນຫັ້ນແລ ຈາພົງພັນແມ່ກາກໍແລ້ວເທົ່ານີ້
ກ່ອນແລ

ແຕ່ນີ້ໄປພາຍຫນ້າຈັກຈາພົງພັນນັກປາດກ່ອນແລ ນັກ
ປາດເຈົ້າອັນມາແຕ່ເມືອງນະຄອນຫລວງເປັນຕົ້ນວ່າ ບ່ຣະສິງງ
ມີລູກສອງຊາຍ ຜູ້ພີ່ຊື່ວ່າ ບ່ຣະເດດ ຜູ້ນ້ອງຊື່ວ່າບ່ຣະຣາດ ຂາ
ເຈົ້າທັງສອງນັ້ນຈົບໄຕຣເພດທັງສາມ ອັນມີກຳລັງເຮືອນິງນັກ

ພະຍາປັບບາກໍຫລາຍທະບານຂຶ້ນເມືອອາກາດກາງຫາວໄດ້ ໒໒ ສອກ ໑໙ ສອກ ໄດ້ ໑໘ ສອກ ອັນນີ້ເປັນປົກກະຕິ ບໍ່ຣະເດດມີ ລູກຊາຍຜູ່ນຶ່ງຈົບໄຕຣເພດທັງສາມບໍ່ຣະອາດມີ ລູກຊາຍຜູ່ນຶ່ງກໍ່ ຈົບໄຕຣເພດທັງສາມ ຣິດທີເຮວແຮງແລພະຍາປັບບາກໍ່ສິ່ງດຽວ ກັບ ກໍາລັງເຂົາເຈົ້າແລຄົນບັ້ນຄົນເຮົານີ້ຮ້ອຍນຶ່ງກໍ່ດີ ພັນນຶ່ງກໍ່ ດີ ຈັກກຸມຕໍ່ມື ເຂົາເຈົ້ານັ້ນ ແຂນຫັກ ມືຫັກ ຫົວເຂົ້າແຕກ ອອກດັ່ງນັ້ນ ກໍບໍ່ອາດຈັກກຸມເອົາໄດ້ແລ ອັນເຊີງດາບເຂົານັ້ນ ຟັນຄົນເມືອຕໍ່ເຖີງຫມື່ນ ກໍ່ເຈັບກໍ່ຕາຍບໍ່ອາດຈັກເອົາໄດ້ ນັກ ປາດທັງສາມອັນເປັນພໍ່ເຂົາເຈົ້າທັງສີ່ນີ້ກໍ່ຕາຍໄປ ດ້ວຍສວັດດີ ຕາມກໍາລັງເຂົາເຈົ້າທັງສາມຫັ້ນແລ ຈິ່ງສ້າງວັດຫລັງນຶ່ງສົບ ກະດູກນັກປາດທັງສາມ ໃສ່ຊື່ວ່າວັດຫົວຂອງຊຽງກາງ ພຣະ ມະຫາປາສມັນເຈົ້າກໍ່ຕາຍ ພຣະມະຫາເທພ ລັງກາ ແລະ ພຣະມະຫາສາມີເຈົ້າວັດແກ້ວ ກໍ່ຈູດີໄປຕາມກັນ ຈິ່ງມາແປງ ເຈດີດວງນຶ່ງຕໍ່ຫນ້າວັດປ່າຫມັນຫັ້ນ ຈິ່ງໃສ່ຊື່ວ່າວັດພຣະພີ່ ນ້ອງທັງສາມຫັ້ນແລ ແຕ່ນັ້ນບ້ານເມືອງລວດເສົ້າສູບເສັງ ຫາ ຫ້າວພຣະຍາບໍ່ໄດ້ເຖີງສາມປີ ນັກປາດທັງສີ່ແລເສນາອໍາມາດ

ທັງຫລາຍພ້ອມກັນຈິ່ງມາເອົາ ພຣະມະຫາສັດທາທິໂກເປັນ
ມະຫາສາມີເຈົ້າວັດແກ້ວ ຈິ່ງມາເອົາເຈົ້າສມຸທໂຄດເປັນເຈົ້າ
ວັດປ່າສມັນ ຈິ່ງໄດ້ຊື່ວ່າພຣະມະຫາສາມີເຈົ້າຕົນພີ່ຕົນນ້ອງ
ປາງນັ້ນແລ ຈິ່ງຈັກໄດ້ຊື່ວ່າຣາຊຄຣູເຈົ້າແຜ່ນດິນເມືອງລ້ານ
ຊ້າງ ຫລ້າງມີສອງຕົນແລ ນັກປາດຜູ້ຈັກເປັນທີ່ເລງທີ່ຖາມ
ຫລ້າງມີສີ່ ມີສອງ ຕົນທັງຫລາຍອັນເປັນເຈົ້າແຜ່ນດິນຈິ່ງສຸກ
ກະເສີມມາເພື່ອດັ່ງນັ້ນແລ

ບັດນີ້ ຈັກຈາພີງພຣະຍາຟ້າແລະພຣະຍາສາມແສນໄທ
ກ່ອນແລ ພຣະມະຫາສາມີເຈົ້າທັງສອງແລະນັກປາດທັງສີ່
ແລະເສນາອຳມາດທັງຫລາຍຈິ່ງພ້ອມກັນ ໄປຣາທນາເພັ່ງປະ
ສັກ ມາເປັນເຈົ້າແຜ່ນດິນຊຽງດົງຊຽງທອງ ໂຮງທານປູ່ວັນ
ເດືອດຫານທ້ວງຈັບຫັ້ນແລ ເຈົ້າກໍ່ຂຶ້ນມາດາມນິມົນ ຈິ່ງມາ
ຮອດເມືອງຊະວາ ພຣະມະຫາສາມີເຈົ້າທັງສອງນັກປາດທັງ
ສີ່ ກັບທັງເສນາອຳມາດທັ່ງຫລາຍ ພ້ອມກັນຍໍຂຶ້ນໃຫ້ເປັນ
ເຈົ້າແຜ່ນດິນ ຈິ່ງໃສ່ຊື່ວ່າພຣະຍາໄຊຍະຈັກກະພັດແຜ່ນແຜ້ວ

ຫັ້ນແລ ເຈົ້າຈິງມາບໍພຣະມະຫາສມຸດເຈົ້າເປັນທັມມະເສ
ບາ ໃຫ້ຢູ່ວັດມະໂບຣມ ຈິງເອົາພຣະມະຫາບາບຄັນພີເຈົ້າ
ເປັນສັງຄະເສບາໃຫ້ຢູ່ວັດໂປດກາງເມືອງ ຈິງໃຫ້ອາດບາອະ
ພັບໂຫດຊີວິດແກ່ສັດໂລກທັງຫລາຍໂດຍດັ່ງໂບຣານນັ້ນ ເຈົ້າ
ມາສເວີງຣາດນີ້ ລູກຊາຍຜູ້ນຶ່ງຊື່ວ່າທ້າວຊຽງລໍ ໃຫ້ເມືອເປັນ
ແສນເມືອງແກ່ພໍ່ ຈິງນີ ຜູ້ນ້ອງໃຫ້ເມືອກິນເມືອງກະບອງ
ຈິງໃສ່ຊື່ວ່າພຣະບາຫມື່ນເຖົ້າ ລູກຊາຍຜູ້ນຶ່ງຊື່ວາເຈົ້າຕີນ
ຫລ້າ ໃຫ້ໄປກິນເມືອງແກ ຜູ້ນຶ່ງຊື່ວ່າກິຊູລຣາຊາໃຫ້ໄປກິນ
ວຽງຄໍາ ທັງທ້າວຫລ້າພັນຫນອງ ຜູ້ນຶ່ງຊື່ວາຄໍາເຮືອງ ໃຫ້
ເມືອກິນເມືອງຊ້າຍແລະເມືອງຊອງ ຈິງໃສ່ຊື່ວາເຈົ້າຊ້າຍຊອງ
ຜູ້ນຶ່ງຊື່ວາຄໍາພາໃຫ້ເມືອກິນເມືອງຂວາ ຈິງໃສ່ຊື່ວ່າຂວາ
ເຫຍາ ຈິງໃຫ້ພໍ່ລ້ຽງຜູ້ນຶ່ງ ໃຫ້ເມືອເຣັດຕາງໃສ່ຊື່ວ່າຂວາລູງ
ຊ້າງຕົວນຶ່ງເມືອແຂວງເມືອງຂວາ ມີຂາແດງຄີງແດງເປັນດັ່ງ
ທອງແດງນັ້ນແລ ສູງໄດ້ເກົ້າສອກ ແຕ່ເຄົ້າຫູກ້າຂວາມາ
ເຖິງເຄົ້າຫູຊ້າຍໄດ້ສາມສອກ ຈິງໃສ່ຊື່ວ່າເຊີງບັ້ງທອງຕົວນີ້

ຊ້າງຕົນເຈົ້າຂວາເທພາແລ ເທົ່ານີ້ລູກຊາຍພຣະຍາໄຊຍະ ຈັກກະພັດແຜ່ນແຜ້ວທັ້ນແລ ລູກຍິງຜູ້ນຶ່ງ ໃຫ້ກິນເມືອງຫນຶ່ງຫນ້າ ຜູ້ນ້ອງຍິງໃຫ້ກິນເມືອງຫນຶ່ງແຜນ ພຣະຍາໄຊຍະຈັກກະພັດແຜ່ນແຜ້ວ ມີລູກຊາຍຫ້າຄົນລູກຍິງສອງຄົນ ອັນຄົນທັງຫລາຍວ່າ ແມ່ຫຍົວເຈົ້ານາງຫນຶ່ງໜ້າ ນາງຫນຶ່ງແຜນນັ້ນແລ ບ້ານເມືອງແຕ່ນັ້ນຊາຍມຸ່ນກິນວຽງຈັນ ແລະຈັກເອົາແຕ່ຕາດນ້ຳໄປໃຕ້ ທັງເມືອງກຣະບອງເປັນເມືອງຫນັ້ນ ເສນາອຳມາດທັງຫລາຍວ່າບໍ່ຊອບ ຈິ່ງແຕ່ງໃຫ້ເດັກນ້ອຍ ແລະນາຍຫລວງທ້າວສອງລ່ອງເອົາໄປຂ້າເສັຽທີ່ດອນຈັນ ມັນມາຫລົບນ້ຳຫລົບໄກທັ້ນປລ ເຂົາຈິ່ງເອົາມັນໄປເຜົາເສັຽທີ່ນັ້ນ ຈິ່ງສ້າງວັດຫລັງນຶ່ງໃສ່ຊື່ວ່າວັດໄຕທັ້ນແລ ອັນວ່າວັດປະສັກນີ້ ພຣະມະຫາປາສມັນເຈົ້າ ແລະນັກປາດທັງສາມ ເອົາຕຳນານແຕ່ເມືອງນະຄອນຫລວງພຸ້ນມາວ່າ ມະຫາຣົາວີເຈົ້າຕັ້ງຫລັກໄມ້ຈັນ ທັງຫລັກແກ້ວ ຫມາຍບ້ານຫມາຍເມືອງໄວ້ທີ່ນີ້ແລ ພຣະມະຫາປາສມັນເຈົ້າບອກໃຫ້ຕັ້ງອາຮາມ ທັງພຣະພຸທຮູບເຈົ້າໄວ້ທີ່ນີ້ເຖິງ ພຣະເອົາພຣະບາງເຈົ້າ ຂຶ້ນມາເຊົ່າທັ້ນ ໗ ວັນ ຈິ່ງອອກມາວຽງ

ຄ່າຫັ້ນແລ ເມື່ອສ້າງແລ້ວຈິ່ງໃສ່ຊື່ວ່າວັດປະສັກຫັ້ນແລ ພຣະ
ຍາໄຊຍະຈັກກະພັດແຜ່ນແຜ້ວເຈົ້າຈິ່ງພິຈາຣະນາດູ ຈິ່ງໄດ້
ຫລານຜູ້ນຶ່ງ ມີອາຍຸໄດ້ ໒໕ ປີມັນທາງອກແຕ່ຫນຸ່ມມີລູກຊາຍ
ສອງຊາຍຈິ່ງໃຫ້ມາກິນເມືອງວຽງຈັນ ແຕ່ພຣະນ້ຳຮຸ່ງມາ
ເຫນືອເຫົ້າເຂດເມືອງຊ້າຍແລ ຂວບຄ່ານທັງມວນໄວ້ຍາຊຸນາ
ໃຫ້ແຕ່ງຫັ້ນແລ ເຂົາຈິ່ງວ່າພຣະຍາຈັນທາງອກແຕງເຂົາວ່າ
ເຈົ້າຕົນນີ້ແລ ແຕ່ນັ້ນມາປີນຶ່ງຍັງມີພຣະຍາຕົນນຶ່ງຊື່ວ່າແກ່ນ
ທ້າວ ໄດ້ຊ້າງເຜືອກຕົວນຶ່ງມາຖວາຍແກ່ພຣະຍາໄຊຍະຈັກກະ
ພັດແຜ່ນແຜ້ວເຈົ້າຫັ້ນແລ ຊ້າງຕົວນັ້ນສູງໄດ້ ໗ ສອກຮູບໂສມ
ງາມນັກ ຈິ່ງແປງໂຮງຫລັງນຶ່ງໄວ້ລຸ່ມພູເຂົາກ້າແຄບບ້ານຄານ
ຫັ້ນແລ ພໍ່ຫມໍຊ້າງຜູ້ນຶ່ງຈິ່ງທວຍວ່າຊ້າງຕົວນີ້ປູ່ເມືອງໃດໄດ້
ເຖິງ ໗ ປີເມືອງອັນນັ້ນກໍ່ຈັກວາຍແລມັນທວຍສິ່ງນັ້ນຜູ້ທວຍນີ້
ແມ່ນພໍ່ຫມື່ນຊ້າງຄຳຮ່ອນອັນຜູ້ເປັນປູ່ຫມື່ນຄານຄອນແກ້ວ ວ່າ
ເປັນພຣະຍານະຄອນຄາງມຸນນັ້ນແລ ໄດ້ຊ້າງເຜືອກສາມປີ
ຄວາມຊ່າເຫົ້ານິວຫລວງຈິ່ງໃຫ້ມາຂໍ່ຂົນເມືອດູ ພຣະຍາຊຽງລໍ່

ເອົາຂີ້ຊ້າງເຜືອໃຫ້ບົວຫລວງດູ ພຣະບາບົວຫລວງກໍຄຽດນາກ
ນັກ ຈຶ່ງປ່າວພົນໄດ້ປີນຶ່ງປີລູນນັ້ນມາທາງເມືອງຂວາສາມ
ລ້ານໃຫ້ເສນາກ້າຂວາຊື່ວ່າຄົກກົງມາ ຜູ້ນຶ່ງຊື່ໄດຫນຶ່ງມີຄົນ ໕
ລ້ານ ຂັບຈັກຊົບຊ້າງເຜືອກເຈົ້າຊຽງລໍ ເສນາຜູ້ນຶ່ງຖືພົນມາ
ສາມລ້ານ ຊື່ວ່າກາງກົງນາທາງເມືອງຊ້າຍເສນາຜູ້ນຶ່ງຊື່ວາຈ
ຖວາຍໄຕວາງ ເປັນຫລານເຈົ້າບົວຂັນງ ຊົບຊ້າງຫມື່ນຈັບ
ຕົວຊື່ວ່າພີມານຄໍາ ໃຫ້ເສນາຜູ້ນຶ່ງຊື່ວ່າກົງການຖືພົນມາ ມີ
ລ້ານມາທາງພະບ້າຣຸ່ງຊຽງສາໃຫ້ເສນາຜູ້ນຶ່ງຊື່ວ່າກົງຜູ້ແສດຖືພົນ
ມາ ປີ ລ້ານມາທາງເມືອງກຣະບອງ ແກະຫລວງ ມາຕົກ
ແຜ່ນດິນເມືອງລ້ານຊ້າງປາງນັ້ນສອງດັ່ງຫັ້ນແລ ພຣະບາຊຽງ
ລໍຖືພົນສອງແສນ ໃຫ້ບໍ່ຣະສິງ ບໍ່ຣະນາຣາຍ ບໍ່ຣະເດດ ບໍ່ຣະ
ລາດ ໔ ຄົນ ເອົາພົນມີຄົນລ້ານສີພັນ ພັນຫລວງສີຫມື່ນ ໄປ
ຮົບແຕ່ດົນພູມຸງເມືອງນາ ແກວຕາຍລ້ານນຶ່ງ ເຖິງຄໍ່າເຂົາກໍ
ກຸມກັນລົງມາຈາກພູມຸງເມືອງ ມານອນດົນພູມຸງເມືອງນາ
ນອນດົນພູກູ່ກັ້ນ ໄດຫນຶ່ງກໍມານອນທີ່ຫລັກຫານນັ້ ພ່ຍາມ

ທ່ຽງຄືນຜີແຖນມາເອີ້ນບອກແກ່ໄວພາຫນຶງ ເປັນ ຄວາມ ແກວ ວ່າ
ທ່ານຈັກວາຍວັນຫນ້າທີ່ກາງເມືອງຊະວາຫັ້ນ ແລ້ວເລົ່າມາ
ເອີ້ນບອກພຣະຍາຊຽງລໍວ່າ ໃຫ້ດາພຣະຍາໄຊເຈົ້າລ່ອງຫນີ
ຖ້ອນ ພຣະຍາຊຽງລໍກໍຈັກໄດ້ຂີ່ກຊ້າງແກວວັນນັ້ນແລ້ວບ້ານ
ເມືອງກໍ່ຈັກວາຍວັນນັ້ນ ຜີແຖນມາ ເອີ້ນບອກວ່າສັ່ນນັ້ນ ຮຸ່ງ
ເຊົ້າແລ້ວ ກໍດາຊ້າງອັນຈັກຂີ່ນຕ້ອນຫນ້າຊ້າງເມືອກນັ້ນສີ
ຮ້ອຍຄົນສີ່ຫມື່ນ ຫມື່ນຫລວງຫມື່ນບຸນຂີ່ຊ້າງອ້າຍຕາຂາວ
ຖືພົນແປດຫມື່ນ ຊ້າງຕົວຈັກຂີ່ນດອນແປດຮ້ອຍອອກມາ
ທາງງ່ອນ ຫມື່ນຫລວງ ລັດຫລັງໄດຫນຶງ ຊ້າງຕົວນັ້ນ
ງາກ້າຂວາຂີ້ນເປັນດັ່ງທີນສອກ ງາກ້ຳຊ້າຍລົງ ກົກງາໄດ້
ສີກໍາສອງກໍາ ດັ່ງເກົ້າລອກຂວາລູຂີ່ຊ້າງແດງຕົວວ່າໄຊບອນທອງ ຂຸນ
ຊ້າງຫັ້ນໄດ້ແປດຮ້ອຍ ຄົນແປດຫມື່ນຢູ່ທາງພາ ເພີງພົນຫລວງ
ທັງນວນຕັ້ງບາເຂົ້າຈ້າວເກືອນລ້າງວັດວິຊູນບັດນີ້ແລ ເອົາເຈົ້າ
ທັງຫລາຍສີ່ຂຸນ ຄືວານໍ່ຣະສິງເປັນຕົ້ນຖືພົນ ສີ່ຫມື່ນໄປຕັ້ງນາ
ນຸງງຸ່ມ ອີນມາເດີ່ງນາໄຮ່ຄຽວພຣະຍາຊຽງລໍກໍອອກມາຕັ້ງນາໄຮ່
ຄຽວຫັ້ນຫນີນຫລວງລັດຫລັງໄດຫນຶ່ງກໍມາຮອດຫັ້ນ ຂວາລູກໍ

ນາຣອດຫັ້ນ ໄຕຫນີງຍັງຕັ້ງປຸ່ນາເຂົ້າຈ້າວໄປມາ ເຈົ້າຫມື່ນ
ຫລວງທັງຂວາລູກພິນ ມີຊ້າງສອງພັນຄົນສອງແສນ ເຂາເຈົ້າ
ທັງສີ່ຄົນບໍ່ຖືວ່າບໍ່ຣະສຶງເປັນເງິນ ຣູ ນຣິບແກວແກ່ຍາມຕາວັນ
ທ່ຽງເທົ້າຍາມແລງ ແພ້ແກວະສີເທື່ອຄູງໄຕຫນີງ ຫັ້ນແລຄົນສອງ
ແສນຊ້າງສອງພັນແກວຫ້າລ້ານ ຂ້າກໍບໍ່ແພ້ເທງກໍບໍ່ແພ້ຊ້າງ
ພາຄວານແລ່ນຫນີໄປກິນນ້ຳ ແຜ່ນດິນບໍ່ໄດ້ຍ່ຳທີ່ຍ່ຳແກວຕາຍ
ຫັນແລ ແຕ່ນັ້ນໄຕຫນີງເຂົ້ານາຊິນຊ້າງເຜືອກຂວາລູວາງໄຊ
ບອນທອງໄສກ່ອນເບື້ງບ່ວຫລວງ ນາຣູ ນສານຕົວໄຊບອນທອງ
ເອົາຫນົດທັງສາມຜູ່ນຶ່ງຊື່ວ່າຕືກອງມາກ້າຊ້າຍໄຕຫນີງຊູນຊ້າງ
ມັນສີ່ຕົວ ຫມື່ນບຸນວາງອ້າຍຕາຂາວ ໃສ່ທ້າວະທັງສີ່ແກວກໍຕາຍ
ທັງສີ່ ຫນ່ວຍກ້າຂວາໄຕຫນີງຊື່ວ່າຫລີກພາ ຊູນຊ້າງມັນມີຫົກ
ຕົວວາງມາກ່ອນໄຕຫນີງ ຂ້ອຍພຣະຍາຊຽງລໍ່ຜູ່ນຶ່ງຊື່ນາຍ
ຫລວງເທບືອ ມັນມີຊ້າງຕົວນຶ່ງຊື່ວ່າອ້າຍ ຫມາກຫຍ້າມັນຊິນ
ຫລີກພາ ຂາທັງສອງຮຸມຊິນຊ້າງຫົກຕົວນັນທ່າວໄປ ອີງທັງ
ຫົກກໍຕາຍໄປຂາທັງສອງກໍຕາຍ ຊ້າງອ້າຍຫມາກຫຍ້າໄຊ

ບຂມທອງລອຍນ້ຳຂອງຫນີ ຜູ່ວ່ານາຍຫລວງເຫນືອນັ້ນ ແມ່ນປູ່ເຈົ້າພຸນເຫນືອ ອັນວ່າທ້າວແຈ້ງພໍ່ທ້າວບຸນສານອັນເປັນພຣະບາ:ເສນນັ້ນແລ ແຕ່ນັ້ນພົນກ້ຳລາວເຮົາກໍບົກບາງໄປຫັ້ນແລ,

ແຕ່ນັ້ນ ໄດຫນີງກເອົາພົນທັງມວນເຂົ້າມາຊິນພຣະບາຊ້າງເຜືອກພຣະບາຊຽງລໍທັງຫມື່ນຫລວງກມື່ນບຸນຊີ ໄດຫນີງທີ່ນາໄຣ່ດງວທັນ ຊ້າງເຜືອກ ເອົາຊ້າງໄດຫນີງທ່າວລົງມັນກໍຕາຍໄປຫັ້ນແລ ຊ້າງເຮົາທັງສອງພັນນັ້ນລາງຕົວກໍຕາຍລາງຕົວກໍລອຍຂ້າມນ້ຳຄານຫນີ ລາງຕົວກໍຂ້າມນ້ຳຂອງຫນີໄປຫມື່ນຫລວງຫມື່ນບຸນເອົາທັງຫລາຍກວນຣິນຊິນກັນ ຫັ້ນທານກໍ່ຕາຍຂຸນກັງສື: ນັ້ນຕົ້ນວ່າ ບໍ່ຣະຈິງບໍ່ຣະບາຣານ ບໍ່ຣະເວດ ບໍ່ຣະລາດເຂົ້າເຈົ້າທັງຫລາຍນີ້ ແກວກໍກຸມເອົາໄດ້ທັງເປັນມາສຽບຫລັກ:ສັງ ເທີ່ນາ:ຂ້າຈ້າວເທິສ້າງວັດຫົວຂອງຫັ້ນແລຕົວພຣະບາຊຽງລໍກໍເຈັບກໍປ່ວຍຈິ່ງຂີ່ຊ້າງເຜືອກຫນີ ມາຮອດໂຮງຊຽງທອງຈິ່ງລົງຊ້າງໄປເຂົ້າເຮືອເຫລັ້ມນຶ່ງຊື່ວ່າເພເລົາກາ ເຮືອລວດຈົມທີ່ທ່າຊຽງທອງຫັ້ນເຈົ້າກໍ່ຕາຍຫັ້ນແລ ແກວມາເມືອງລາວ

ປາງນັ້ນມີຊ້າງຫ້າຮ້ອຍນາຍຫລວງເຂົາອັນເປັນເຈົ້າ ຊ້າງຫ້າ
ຮ້ອຍກໍ ຫັງໄກຈາກບ້ານກໍກາຍຫນຄນີ້ດຽວ ຄັນພຣະບາຊຽງສໄດ້
ຊີບເກີນາໂຣດງ ຫັ້ນແລ ເຂົາກໍວາງຊ້າງວາງມ້າວາງເຄື່ອງ ຄື
ເສັງຫມົດ ບ້ານມີຜູ້ບົງລູກໍໂກພາຊິ້ວາອົງວາງຍະກໍຣິພາ ທັງ
ຫລາຍປູ່ສາມວັນຈິ່ງທານີ ເມື່ອໂຣນດູພົບທີ່ເມືອງລານໄດ້ວນ
ສອງແສນຫັ້ນແລ ເຂົາຈິ່ງເມືອຢູ່ຟາກນ້ຳມ່າ ອັນເຂົາໂຣນພົບ
ເອົາກ້ອນຫີນມາກອງໄວ້ນັ້ນ ເມື່ອເຈົ້າຂຶ້ນເມືອເມືອງເຂົາເອົາ
ກ້ອນຫີນນັ້ນແລກັນແລກ້ອນຄອນໄດ້ຄືນຫ້າລ້ານເຈັງຄືນປາຍ
ຫ້າລ້ານ ນາຍໄພຍມາປາງນັ້ນສີພັນ ບ້ານີ່ງຫກຮ້ອຍເສັ້ງ
ສາມພັນປາຍສີ່ຮ້ອຍ ບອ. ເປັນໄດ້ຍບໍ່ໄທຍທັງໝະນ ບອມເປັນ
ລູກເປັນຫລາຍ ເປັນເຊື້ອແນວເຈົ້າບົວຫລວງຊູກາຫັ້ນແລ ເຈົ້າ
ບົວຫລວງຈິ່ງຄຽດຈິ່ງຕັ້ງອາຊຍາວ່າ ຕັ້ງແວ່ນໃຜປາຊວນກັນ
ເມືອເມືອງລ້ານຊ້າງດ້ອນ ເມືອງອັນນັ້ນຫາກເປັນເມືອງພີ່
ເມືອງນ້ອງກັນແກ່ຊີ ຊູບໍ່ຣົມຣາຊາທິຣາດ ຫາກໄດ້ກິນໄດ້ແຊງ
ໄວ້ ເຮົາຈິ່ງດັບຈິ່ງວາຍເພື່ອສິ່ງນັ້ນແລ ຈິ່ງປ່າວຄົນໄບວຽງໃຫ້

ສັກຣອບຕີນລາວທີ່ຍອມ່ອນ ຊູ່ຄົນຊາວນອກວຽງສັກໜ້າ ແລະທັງ
ຣອບຕີນໄວ້ທັບແລ ຢ່າໃຫ້ໃຜຊວນກັນເມືອເມືອງລ້ານຊ້າງສັກ
ເທື່ອ ໃຜບັງມາຊວນດູນ້ຳເມືກທີ່ຫນ້າຜາກຫັ້ນເຖິງ ເຈົ້າບົວ
ຫລວງຕັ້ງອາຊຍາໄວ້ດັ່ງນີ້ ແຕ່ແຄມນ້ຳແຫເມືອພຸ້ ໄວ້ເປັນ
ເມືອງລ້ານຊ້າງເກົ່າບູຮານ ເຂດກໍ່ໄດ້ເອົາແກ່ເມືອງມີຮ້ານ
ກວ້ານນ້ເສົາ ແຕ່ຫີນສູມເສົານ້ຳເຕົ້າແກ້ວ ໄວ້ເປັນເຂດເມືອງ
ລ້ານຊ້າງຕາມບູຮານປາງກ່ອນຖ້ອນ

ບັດນີ້ ເມືອຫນ້າຈັກຈາທີ່ເມືອງລາວມາຕັ້ງລຸນແກວກ່ອນ
ແລ ມະຫາສານີ້ເຈົ້າວັດແກ້ວ ຕີນຊື່ວ່າຍານສມຸດກັບທັງພຣະ
ຫົມນະເສນາເຈົ້າ ແລະເຈົ້າຫຍົວຮ້ອຍປາຍຕີນ ຢູ່ວັດແກ້ວທັງ
ວັດປາສນັບ ຢູ່ວັດສວນແຖນສີເກີດທັງວັດ ໃບດກາງເມືອງທ້າ
ວັດນີ້ເບົາຫີນແກວກໍເບົາເຮັດສັງບໍ່ລາວຢູ່ເຖົາຢູ່ປ່ງະຢູງນີ້ ເບົາ
ຫີນກໍຢູ່ດອນແກວກໍເບົາເຮົາ ສັງແກວຢູງເຈັບຢູງປ່ວຍບັນພຣະ
ກໍເອົາມາປົວດີແລ້ວກໍຫາຍ ຢູ່ນັ້ນກໍຫາຍເຂົາກໍຫາຍຢູ່ນັ້ນກໍຢູ່ ເຂົາກໍ
ຢູ່ແກວຈິ່ງມີໃນເມືອງລາວຕາບຕໍ່ເທົ້າບັດນີ້ແລ ພຣະມະຫາ

ສາມີເຈົ້າວັດແກ້ວຈິງໃຫ້ພຣະທັມມະເສນາເຈົ້າ ກັບຊາວ
ເຈົ້າສາມສິບຄົນ ທັງຄົນຝູງຢູ່ດອນນັ້ນ ລ່ອງມາຣາທນາພຣະ
ຍາໄຊຍະຈັກກະພັດ ແຜ່ນແຜ້ວມາສເວີຍຣາດເປັນພຣະຍາດັງ
ເກົ່າເກີງສາມທີເຈົ້າກໍບໍ່ມາຈຶ່ງໄປ ຣາທນາພຣະຍາຫລ້າແສນ
ໄຕຄົນກົນເມືອງແກນນັ້ນມາເປັນເຈົ້າແຜ່ນດິນ ເຈົ້າກໍມາຕາມນີ
ຣະນົບ ພຣະມະຫາສາມີເຈົ້າແລະພຣະສົງເຈົ້າທັງຫລາຍທັງ
ຕາມຄວາມພໍ່ດິນຫັ້ນແລ ຄັນວ່າຣອດຊຽງດົງຊຽງທອງແລ້ວພຣະ
ມະຫາສາມີເຈົ້າທັງພຣະຍາໄຊຍະຈັກກະພັດແຜ່ນແຜ້ວຈຶ່ງໃຫ້
ໄປຣາທນາເຈົ້າວິຊຸລກຸມານຄົນໄປກົນເມືອງທາຣາພັນໜະຍົງກັງວຽງ
ຄ່ານັ້ນມາເປັນແສນເມືອງ ເຈົ້າຄົນນັ້ນມີຊ້າງຕົວນຶ່ງເປັນ ມຸງຄຸນ
ນັກຊື່ວ່າຊ້າງບານງາອ້າເຈົ້າກໍ ຂີມາທາງບົກຣອດວຽງຄຳຫັ້ນ
ຈຶງມາຕັ້ງຄ່ຳປາຖນາຕໍ່ພຣະບາງເຈົ້າຫັ້ນ ວ່າພາຍໜ້າຜູ້ຂ້າ
ຫາກບັງເມືອຣອດຊຽງດົງຊຽງທອງ ແລະບັງແລ້ວຄຳມັກຄ່າ
ປາຖນາ ຂ້າຈັກແປງວິຫານຫລັງນຶ່ງລວງກ້ວາງ ໑໐ ວາລວງ
ຍາວ ໒໐ ວາ ຈັກຣາທນາສັບພັນຍູເຈົ້າເມືອໃຜດອັນນຶ່ງຂ້ອຍກ່

ນິມົນໄວ້ນີ້ແລ້ວແຕ່ນັ້ນເຈົ້າກໍຂຶ້ນມາທາງ ບົກຣອດເມືອງຊະວາ
ຫັ້ນແລ ພຣະມະຫາສາມີເຈົ້າກັບພີ່ກັບນ້ອງ ທັງພຣະເຈົ້າຕົນ
ຫລ້າແລະຂືເມືອງເຈົ້າທັງຫລາຍຈິ່ງບໍໃຫ້ເປັນແສນ ໃຫ້ໄປຢູ່ຊຽງ
ລໍຫັ້ນແລ ພຣະເຈົ້າຕົນຫລ້າມາເປັນເຈົ້າຊຽງດົງຊຽງທອງປີນຶ່ງ
ພຣະຍາໄຊຍະຈັກກະພັດແຜ່ນແຜ້ວຈິ່ງຕາຍທີ່ຊຽງຄານຫັ້ນຈິ່ງ
ແປງຫີບເງິນໃສ່ໄວ້ ຈິ່ງໃຊ້ໄປເລົ່າແກ່ພຣະຍາສີໂຍທິຍາ ປາງ
ນັ້ນພຣະຍາສີໂຍທິຍາເຈົ້າເມືອງສີໂຍທິຍາຈິ່ງແຕ່ງໂລງຄໍາລູກ
ນຶ່ງ ໂລງໄມ້ຈັນລູກນຶ່ງແຜ່ນແພຫ້າຮ້ອຍໃຫ້ຂຸນສີຣາຊໂກສາມາ
ສົງສະການ ພຣະຍາໄຊຍະຈັກກະພັດແຜ່ນແຜ້ວມີອາຍຸໄດ້ ຊາວ
ປີຈິ່ງຕາຍ ຈິ່ງເຜົາເສັຍທີ່ຊຽງຄານ ຈິ່ງສ້າງເຈດີສົບກະດູກ.ຫລັງ
ນຶ່ງທີ່ຊຽງຄານຫັ້ນ ຂຸນສີຣາຊໂກສາຈິ່ງຄືນເມືອຄອບພຣະຍາ
ສີໂຍທິຍາ ປີລຸນນັ້ນພຣະຍາສີໂຍທິຍາ ຈິ່ງແຕ່ງເຄື່ອງ
ຣາຊາພິເສກ ໃຫ້ຂຸນອິນຂຸນສີຣາຊໂກສາເອົາເຄື່ອງທັງມວນ
ຂຶ້ນມາ ພ້ອມກັບມະຫາສາມີເຈົ້າທັງສອງ ແລະຂືເມືອງ
ເຈົ້າທັງຫລາຍ ຈິ່ງອຸສາພິເສກເຈົ້າຕົນຫລ້າ ໃຫ້ເປັນເຈົ້າ
ແຜ່ນດິນ ເຈົ້າວິຊຸລຸມານໃຫ້ເປັນແສນເມືອງຫັ້ນແລ ເມືອງ

ໂບຫີບາ ເມືອງລ້ານຊ້າງກໍເປັນອັນນີ້ງອັນດຽວກັນ ແຕ່ນັ້ນມາ ພຣະບາດເຈົ້າວິບຫລ້າຈຶ່ງມີປະຕິບານວ່າເມື່ອໃດພີ່ເຮົາເຈົ້າໃບ ຫີບາ ຍັງໃຄ່ໄດ້ໃຄ່ເອົາໄຫ້ໄປທີ່ແດນເມືອງຫັ້ນ ກ້ຳພຸ້ນມາ ໃຫ້ເຊົາທີ່ຊະງາປີແລະຫ້ວຍປະຫວັດຫັ້ນກ່ອນ ກ້ຳນີ້ໄປຈັກໃຫ້ ເຊົາທີ່ຫານອງບົວຫັ້ນກ່ອນ ແບ່ງຈັກເປັນຄຳຊີ້ຄຳຂາຍກໍດີ ຈຶ່ງ ໃຫ້ມາຕ້ານມາຈາກັນທີ່ແດນເມືອງຫັ້ນ ຈຶ່ງໃສ່ຊື່ວາເນາສອງ ຮັກເມືອສືງ ນັ້ນແລ ພະຣະບາຫລ້າແສນໄດເຈົ້າ ເປັນເຈົ້າ ແຜ່ນດິນ ສັກຣາດໄດ້ ๑໕ປີ ຕົວປີຮ້ອງເປົ້າ ເດືອນຫ້າ ຂຶ້ນສິບ ສາມຄ່ຳ ວັນຈັນ ຍາມກອງງາຍແລ ເຈົ້າສເວີຍຣາຊໄດ້ປີນີ້ງ ມະຫາຣາມີເຈົ້າກິນພີ ຕີນ້ອງກ່ວາຍຫັ້ນແລ ເຈົ້າແຜ່ນດິນກໍ ເລີກຊາກງ ະການແລ້ວ ຈຶ່ງອາຫນາມະເຖຣເຈົ້າຄັນພີຣະ ເປັນມະຫາລາມີເຈົ້າຕີນພີຢູ່ວັດແກ້ວ ເລົາບໍມະຫາເຖຣະເຈົ້າ ສັດທັມມະອິງ ວາໃຫ້ ເປັນເຈົ້າວັດປາລມັນເລົາບໍມະຫາເຖຣະ ເຈົ້າເທພຫລວງເປັນທັມມະເສນາໃຫ້ຢູ່ວັດມະໂນຣົມ ພຣະ ເຈົ້າວານຫລ້າໃຫ້ອາຊຍາແກ່ພຣະເຈົ້າພີນ້ອງທັງສາມ ເປັນ

ອັນສິດອັນຄົມ ຄັນວ່າບໍ່ດົນກໍດີ ບໍ່ດອາຊຍາທ້າວພຣະ

ຍາປູ່ງອິ່ນກໍດີ ເປັນໃຈນຈຸດເລົ້າເຜົາບ້ານກໍດີ ຂ້າເຈົ້າເອົາ

ຂອງກໍດີຫລົ້ນກັບເມືອງທ່ານແລລັກຣາຊສົມບັດກໍດີ ໂທດທັງຫລາຍ

ປູ່ງນີ້ຄັນເຂົາໄດ້ເຂົ້າເຂດພຣະເຈົ້າພີ່ນ້ອງຕົນໃດຕົນນຶ່ງກໍດີ ກໍ

ບໍ່ໃຫ້ຜູກໃຫ້ຂ້າໃຫ້ເສັຽຊີວິດແລ ທໍ່ໃຫ້ບອກໃຫ້ສອນເຂົາເມືອ

ຫາວຽກຫາການດັ່ງເກົ່າ ສັດທັງຫລາຍປາງນັ້ນມີສຸກນາກນັກ

ແລ ນັບແຕ່ພຣະເຈົ້າຕົນຫລ້າສເວີຽຣາຊໄດ້ ໔໐ ປີນັບແກ່ເຈົ້າ

ເກີດມາໄດ້ ໗໔ ປີເຈົ້າຈຶ່ງໄດ້ນິບພານຫັ້ນແລ ຈິ່ງນາງແທ່ນ

ຜູ້ເປັນເມືອງເຈົ້າພີ່ນ້ອງທັງສາມ ແລະເຈົ້າວິຊູລອັນເປັນແສນ

ເມືອງ ຈຶ່ງນາສິງສະການເຜົາເສັຽທີ່ງອນເຫັງໂຮງຊຽງກາງ

ຫັ້ນແລ ຈຶ່ງສ້າງວັດສົບກະດູກລູກນັ້ງ ຈຶ່ງໃສ່ຊື່ວ່າບຸບພະອາ

ຣາມອັນເຂົາວ່າວັດບວນພານ (ບົວຣະພາ) ນັ້ນແລຈຶ່ງຣາທນາ

ມະຫາເຖຣະເຈົ້າຕົນນຶ່ງຊື່ວ່າສຸເມທາ ມາເປັນເຈົ້າວັດຫັ້ນແລ

ໃສ່ຊື່ວ່າສັງຄະເສນາທັງເອົາທ່ານອາຈານນ້ອຍມາຢູ່ຫັ້ນແດ່ງໃຫ້

ສອນທັມມະຈິວໃຫ້ເຂົ້າປີທີກແສນກີບເດືອນທີກຮ້ອຍຫມາກເກືອຂີງ

ຫງຽນ ຫມັ້ງງໃຫ້ທານຊູ່ເຮືອນທ່ານນັ້ນມີພຍາຈິບໄດຣເພຫທັງ
ສາມະຫັ້ນແລ ທັງຫລາຍທຳບຸນສິງທານໄປຫາພຣະເຈົ້າຕິນ
ຫລ້າບໍຣະບະບແລ້ວທັງຫລາຍ ຈຶ່ງເອົາລູກເຈົ້າຕິນຫລ້າ
ຜູ້ນຶ່ງ ຊື່ວ່າພຣະເຈົ້າຊຸມພູເຈົ້ານັ້ນ ມີອາຍຸໄດ້ ໒໕ ເສັ້ງ
ດາກ້ານຶ່ງ ເຈົ້ານັ້ນມີຮູປໂສມອັນງາມ ນັກແລ ເຈົ້າ
ສເວີງຣາດເຫບພໍ່ໄດ້ ມີ ປີລວດຕາຍ ຈຶ່ງເອົາມາເຜົາເສັ້ງ
ທີ່ຫນ້າວັດບວນພານຫັ້ນແລ ຈຶ່ງໃຫ້ພໍ່ລ້ຽງຜູ້ນຶ່ງຊື່ວ່າຫມື່ນ
ນາສ້າງເຈດີລູກນຶ່ງທີ່ເຜົາຫັ້ນ ຈຶ່ງໃສ່ຊື່ວ່າເຈດີຫມື່ນນາ ເພື່ອ
ດັ່ງນັ້ນແລ ດູກພຣະຍາຊຸມພູເຈົ້າຈິວນາງແຫ່ນຜູ້ເປັນແມ່ເອົາ
ໄປໃສ່ອູບຄຳສອງລູກ ມາໃສ່ວັດສັບທີ່ຫ້ວຍຫລວງຫັ້ນ ຈຶ່ງໃຫ້
ກອງຂ້ອຍສອງຮ້ອຍໃຫ້ເຂົາຮັກສາຈຶ່ງໃສ່ຊື່ວ່າວັດສິບພຣະຍາ
ປາກທັງພຣະຍາຊຸມພູຫັ້ນແລ ອູບຄຳລູກນຶ່ງເອົາໄປສ້າງວັດ
ປາກຊາຍດອນກອງຂ້ອຍຫັ້ນ ໃຫ້ເຂົາຮັກສາກະດູກພຣະຊຸມ
ພູຫັ້ນແລ ປູ່ໄດ້ ໔ ເດືອນລູກນຶ່ງພຣະເຈົ້າຕິນຫລ້າປູ່ນຶ່ງຊື່ວ່າ
ນາງສີໂວ ກໍຕາຍເອົາໄປເຜົາເສັ້ງທີ່ໄດ້ວັດມະໂນຣົມຫັ້ນ ຈຶ່ງ

ສ້າງວັດສິບກະດູກຈິ່ງໃສ່ຊື່ວ່າວັດຊຽງກາງ ຈິ່ງໃຫ້ເມືອງອັນ
ນີ້ຊື່ວ່າ ເມືອງບາງປູ່ດິນເມືອງສຸຍທັງໃຫ້ນາສີພຽກ ທັງ
ໃຫ້ທ່ານເສດຖີສິນກັບໝູ່ ຊຸມທັງມວນໃຫ້ຄ້ຳຄູວັດຊຽງກາງ
ຫັ້ນ ນານມາໄດ້ປີນຶ່ງ ຈິ່ງແຫ່ແມ່ພຣະຍາເຈົ້າຕົນ
ຫລ້າແລມະຫາສາມີເຈົ້າເປັນປະທານແລ ພຣະສົງຄະເຈົ້າ
ທັງຫລາຍ ກັບເສນາທັງມວນແລ ຊາວເມືອງພ້ອມກັນ
ຈິ່ງມາຍໍເຈົ້າວິຊຸລຣາດອັນເປັນແສນເມືອງນັ້ນ ມາເປັນເຈົ້າ
ແຜ່ນດິນແທນພີ່ຕົນຫັ້ນແລ ຄັນວ່າເຈົ້າວິຊູລຣາຊາໄດ້ເປັນ
ເຈົ້າແຜ່ນດິນໄດ້ສາມປີ ຍັງມີນາງຜູ້ນຶ່ງຢູ່ລຸ່ມວັດສີເກີດຫັ້ນ
ແມ່ນາງນັ້ນເປັນຊາວສີເກີດ ພຣະເຈົ້າຊຽງລໍ່ເອົາມາເປັນເມັຽ
ຈິ່ງມີນາງນັ້ນໆ ໃຫຍ່ມາ ພຣະວິຊຸລຣາຊາໄປຟັງທັມວັດ
ສີເກີດແລເຫັນ ຈິ່ງຖາມເຊື້ອຖາມໂຄດດູວ່າແມ່ນເປັນລູກພຣະ
ເຈົ້າຊຽງລໍ ຈິ່ງເອົາເປັນເປັນເມັຽ ຈິ່ງໃສ່ຊື່ວ່າຈິວນາງພັນຕົນ
ຊຽງຫັ້ນແລ ເມັຽເຖົ້ານັ້ນທັງຫລາຍປູກສ້າງໃຫ້ ເປັນບົວແທ່ນ
ເມັຽພຣະວິຊຸລຣາດເຈົ້າມີສອງຄົນນີ້ແລ ພຣະວິຊຸລຣາດສເວີຍ
ເມືອງໄດ້ ໗ ປີມີລູກນຶ່ງນຶ່ງດອນນາງພັນຕົນຊຽງ ໃຫຍ່ມາໄດ້

ສາມປີແລຕາຍເອົາໄປເຜົາເສັຽລຸ່ມວັດແມ່ກາຫັ້ນ ຈຶ່ງສ້າງວັດ
ສົບກະດູກຫລັງນີ້ງຈຶ່ງໃສ່ຊື່ວ່າວັດອະໂສດ ປູ່ປຶລຸນຈິວແຫ່ນອັນ
ເປັນເມັງເຖົ້ານັ້ນເລົ່າຕາຍ ເອົາໄປເຜົາເສັຽທີ່ງອນລິນແສນເສົ້າ
ຫັ້ນຈຶ່ງສ້າງເຈດີລູກນຶ່ງທີ່ເຜົາ ຫັ້ນແລ ແຕ່ນັ້ນຢູ່ໄດ້ສາມປີຈິວ
ນາງພົບຕົນຊຽງຈຶ່ງຟັ່ນເຫັນໄມ້ຮັ້ງຕົ້ນນຶ່ງໃຫຍ່ນັກ ມີງ່າມີໃບ
ນົດ ກງານນຶ່ງກື້ນຮຸ່ງະຊ້າຈຶ່ງເລົ່າແກ່ພຣະວິຊຸລຣາດງ ເຈົ້າ
ຈຶ່ງໃຫ້ມາຫາອາຈານນ້ອຍທັມມະຈຸນລາ ອາຈານສາຣະພັງ
ມາ ຂາເຈົ້າທັງສາມນີ້ ຫາກເປັນເຊື້ອເປັ ຊາດກັບແດ່ນະຄອນ
ຫລວງພຸ້ນມາຈຶ່ງທວຍວ່າເຈົ້າກຸຈັກມີລູກຊາຍຜູ້ປະເສີດ ອັນ
ເປັນທີ່ເພິ່ງແກ່ຄົນທັງຫລາຍແລ ຢູ່ໄດ້ ກ ວັນນາງກໍທຣົງຄັນ
ເຖິງ ໑໐ ເດືອນ ຈຶ່ງປະສູດອອກມາກໍເປັນຜູ້ຊາຍແທ້ແລ ອອກປີ
ຣວຍນີ້ ພຣະວິຊຸລຣາດນິນດີດອນລູກຊາຍນຶ່ງນັກ ອັນນີ້ກໍຫາກ
ໄດ້ດັ່ງຄຳປາຖນາກູ ຍາມເມື່ອຈາກວຽງຄຳມາ ເປັນແສນເມືອງ
ນັ້ນແລ ໄດ້ປາຖນາດອນພຣະນາງເຈົ້າ ນັດນີ້ຄຳປາຖນາກໍໄດ້
ດັ່ງຄຳນັກນີ້ແລ ນັດນີ້ກຈັກສ້າງເຈດີອັນໃຫຍ່ນຶ່ງທັງວິຫານ

ຫລັງໄກຍບື່ງ ແລເອົາພຣະບາງເຈົ້າມາໄວ້ໄຫວ້ບູຊາເຖິງຈິ່ງ
ຣາເຊນາພຣະມະຫາສາມີເຈົ້າວັດແກ້ວແລ ອາຈານທັງສາມ
ແລຂຶນເມືອງທັງຫລາຍມາຕ້ານຖາມດູທີ່ອັນຈັກຕັ້ງເຈດີວິຫານ
ໃຫ້ເປັນ (ມະຫາ) ສຖານພຣະມະຫາສາມີເຈົ້າວັດແກ້ວແລ
ອາຈານທັງສາມ ເອົາຕຳນານອັນພຣະມະຫາປາສມັນເຈົ້າເອົາ
ແຕ່ເມືອງນະຄອນຫລວງມານັ້ນ ອ່ານດູຕຳນານຈຶ່ງອອກວ່າຍັງ
ມີທີ່ນຶ່ງ ວ່ານາເຂົ້າຈ້າວທີ່ຫີນກ້ອນນຶ່ງກວ້າງໄດ້ ໑ ປີ ສອກຍາວ
ໄດ້ ໑໒ ສອກ ຢູ່ໃຕ້ສົບຫ້ວຍຊ້າງປ້ານທີ່ວນາເຂົ້າຈ້າວ ລຸ່ມພູ
ເຂົາກ້າຫັ້ນແລ ພຣະພຸທເຈົ້າທຳນາຍໄວ້ວ່າຫີນຫນ່ວຍກູນັ້ງ
ນີ້ຈັກມີພຣະບາດນຶ່ງ ປູ່ຊອບໂລກຊອບທັມຈັກມາຕັ້ງສາສນາ
ທີ່ນີ້ແລຕຳນານວ່າສັ່ງນັ້ນ ພຣະວິຊຸລຣາຊເຈົ້າກັບນາງເທວີກໍ່
ຍິນດີມີໃຈພິຣົມນາກນັກ ຈຶ່ງຕົກແຕ່ງໃຫ້ເສນາທັງຫລາຍເປັນ
ຕົ້ນວ່າຫມື່ນຫລວງແລເຈົ້າຊ້າຍເຈົ້າຂວາ ພູນໃຕ້ພຸນເຫນືອ
ຫມື່ນແກ ໃຫ້ຫາໄມ້ອັນຈັກແປງວິຫານຕົນແທ່ນວັນຊຽງສີພັນ
ຈ່າເຮືອນຂຸນພອງ ຂຸນທຳກອງຂ້ອຍທັງຫລາຍ ໃຫ້ຫາດິນກີ່ອັນ

ຈັກຕັ້ງເຈດີກວມກ້ອນຫີນອັນອອກໃນຕຳນານນັ້ນວ່າ ພຣະພຸທທະເຈົ້ານັ່ງນັ້ນ ມະຫາເທວີຄ້ຳສ້າງເຈດີ ພຣະວິຊຸລຣາດເຈົ້າສ້າງວິຫານຫລວງ ກໍ່ເຈດີທັງສ້າງວິຫານຫລວງນັ້ນປີເຕົາສັນເດືອນສາມອອກສອງຄ່ຳວັງເສົາ ສາມປີປາຍເຈັດເດືອນຈິງແລ້ວຣບພຣະພຸທເຈົ້າທັງເຈດີຫລະ ງລວງສູງ ໒ມີ ວາຈິງໃຫ້ບ້ານເມືອງໄຮ່ນາ ແດທາງຫລວງທິວຂອງແຈກ້ຳໄຕ້ ເບື້ອຣອດເທົາຣອດຣ່ອງລິນແສນເສົ້າ ເລາະດອນຫົວຍຫັນເລາະນັ້ນມາຕົກນ້ຳມາວລ່ອງມາຕົກສົບມາວ ລ່ອງນ້ຳຄານມາເທົ້າທ່າຄວາຍຂຶ້ນໄປດອນທາງຫລະງຣອດຣ່ອງລິນ ຯ

ແຕນີ້ໄປພາຍຫນ້າ ພຣະວິຊຸລຣາຊເຈົ້າແຕ່ງປຸນບ້ານເມືອງໃຫ້ແກ່ເຜົ່າພັນທັງຫລາຍ ກິນບ້ານກິນເມືອງຕາມຄຸນອັນເຂົາມີກັບຕົວ ເຂົາຜູ້ມີຄຸນຫລາຍກໍໃຫ້ກິນຫລາຍ ຜູ້ມີຄຸນຫນ້ອຍກໍໃຫ້ກິນຫນ້ອຍ ຜູ້ຣູ້ຄຸນອັນໃດໃຫ້ເກິນຍ້ອນຄຸນອັນນັ້ນ ບໍ່ຫອນໃຫ້ເສນາມຸນຕີເອົາເງິນຊື້ບ້ານຊື້ເມືອງກິນດອມເຈົ້າຊີວິດສັກເທື່ອບໍ່ໄດ ຫາກມາແຕ່ງເບັ້ຽເງິນໄຫວ້ສາເຈົ້າແຜ່ນດິນ ກິນບ້ານກິນເມືອງ ເລົາໃຫ້ໃສ່ໂທດແກ່ມັນຜູ້ໄຫວນັ້ນດີຫລີດາຍ.

(The last two pages are missing)

(The last two pages are missing)

ປັບ
ຈ້າ
ກັງ
ບ່